ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---

ນາຍົກລັດຖະມົນຕີ

ເລກທີ ...287....../ນຍ

ນະຄອນຫຼວງວຽງຈັນ, ວັນທີ 14.09.2011

# ດຳລັດ

## ວ່າດ້ວຍການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ສົກປີ 2011-2012

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 06/05/2003.
- ອີງຕາມ ກົດໝາຍ ວ່າດ້ວຍງົບປະມານແຫ່ງລັດ ສະບັບເລກທີ 02/ສພຊ, ລົງວັນທີ 26/12/2006.
- ອີງຕາມ ກົດໝາຍ ວ່າດ້ວຍການລົງທຶນຂອງລັດ ສະບັບເລກທີ 08/ສພຊ, ລົງວັນທີ 26/11/2009.
- ອີງຕາມ ມະຕິກອງປະຊຸມຄັ້ງປະຖົມມະລຶກ ຂອງສະພາແຫ່ງຊາດຊຸດທີ VII, ສະບັບເລກທີ 10/ສພຊ, ລົງວັນທີ 24 ມິຖຸນາ, 2011.

## ນາຍົກລັດຖະມົນຕີ ອອກດຳລັດ:

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1:** ປະກາດໃຊ້ ແລະ ຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ສົກປີ 2011-2012 ເລີ່ມແຕ່ວັນທີ 01 ຕຸລາ ປີ 2011 ເຖິງວັນທີ 30 ກັນຍາ ປີ 2012 ຢ່າງເປັນເອກະພາບ ໃນຂອບເຂດທົ່ວປະເທດ. ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ສົກປີ 2011- 2012 ແມ່ນແຜນຈັດຕັ້ງປະຕິບັດມະຕິກອງປະຊຸມຄັ້ງປະຖົມມະລຶກ ຂອງສະພາແຫ່ງຊາດ ຊຸດທີ VII, ເປັນປີທີສອງຂອງການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VII (2011-2015) ແລະ ເປັນປີທຳອິດຂອງການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ IX ຂອງພັກປະຊາຊົນປະຕິວັດລາວ, ເຊິ່ງເປັນແຜນບຸກທະລຸທັງ 4 ດ້ານ ຄື: (1). ບຸກທະລຸດ້ານຈິນຕະນາການ, (2). ບຸກທະລຸດ້ານການພັດທະນາ ຊັບພະຍາກອນມະນຸດ

ແລະ ຍົກສູງຄຸນນະພາບການສຶກສາ, (3). ບຸກທະລຸ ດ້ານກົນໄກ, ລະບອບ, ລະບຽບການບໍລິຫານ ແລະ (4). ບຸກທະລຸດ້ານການແກ້ໄຂຄວາມທຸກຍາກຂອງປະຊາຊົນ.

**ມາດຕາ 2: ທິດທາງໜ້າທີ່ລວມຂອງແຜນພັດທະນາເສດຖະກິດ-ສັງຄົມ ສົກປີ 2011-2012 ມີດັ່ງນີ້:**

2.1 ພັດທະນາເສດຖະກິດແຫ່ງຊາດ ດ້ວຍການບຸກທະລຸດ້ານຈິນຕະນາການ ຢ່າງຄົບຊຸດຮອບດ້ານ, ແກ້ໄຂຄວາມຊິນເຄີຍເກົ່າ, ຄອງເດີມ; ຂະຫຍາຍເສດຖະກິດແຫ່ງຊາດດ້ວຍການສ້າງໃຫ້ມີຖານການເຕີບໂຕໄວ, ທັງໝັ້ນທ່ຽງ ແລະ ຍືນຍົງ, ຖືການພັດທະນາເສດຖະກິດເປັນໃຈກາງຕິດພັນກັບການພັດທະນາດ້ານສັງຄົມ ແລະ ການປົກປັກຮັກສາສິ່ງແວດລ້ອມ ຕາມທິດແຫ່ງການເຕີບໂຕສີຂຽວ, ຂະຫຍາຍກຳລັງການຜະລິດໃຫ້ເຂັ້ມແຂງ, ຍູ້ແຮງການຫັນປ່ຽນໂຄງປະກອບເສດຖະກິດ ແລະ ໂຄງປະກອບແຮງງານຕາມທິດຫັນເປັນອຸດສາຫະກຳ-ທັນສະໄໝ ແລະ ກົນໄກຕະຫລາດ; ປັບປຸງນະໂຍບາຍ ແລະ ກົນໄກຄຸ້ມຄອງເສດຖະກິດໃຫ້ສອດຄ່ອງ, ເສີມຂະຫຍາຍກຳລັງແຮງ ແລະ ຄຸນປະໂຫຍດຂອງທຸກພາກສ່ວນເສດຖະກິດ, ປະຕິບັດກົນໄກເສດຖະກິດຕະຫຼາດທີ່ມີການຄຸ້ມຄອງຂອງລັດ, ສົ່ງເສີມວິສາຫະກິດຂະໜາດນ້ອຍ-ກາງ ແລະ ເສດຖະກິດຮ່ວມມືປະຊາຊົນ.

2.2 ພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ກ່ອນອື່ນໝົດຄວາມທຸກຍາກຂອງຄົວເຮືອນ, ເຂດທີ່ໝັ້ນປະຕິວັດ ແລະ ເຂດຈຸດສຸມຂອງສູນກາງ, ຂອງແຂວງ ໂດຍເອົາໃຈໃສ່ຈັດສັນພູມລຳເນົາຄົງທີ່, ຂະຫຍາຍການສຶກສາ, ການປ້ອງກັນ-ອະນາໄມກັນພະຍາດ-ຮັກສາສຸຂະພາບ, ການຜະລິດເປັນສິນຄ້າ, ການສ້າງລາຍໄດ້ໃຫ້ປະຊາຊົນໃນເຂດດັ່ງກ່າວ, ການສ້າງພື້ນຖານໂຄງລ່າງໃຫ້ສາມາດໄປມາໄດ້. ຫລຸດຜ່ອນຄວາມແຕກໂຕນດ້ານລາຍຮັບລະຫວ່າງຜູ້ຮັ່ງ ຜູ້ທຸກ ແລະ ລະຫວ່າງເຂດຕົວເມືອງ ແລະ ຊົນນະບົດ.

2.3 ພັດທະນາວັດທະນະທຳ-ສັງຄົມໄປຄວບຄູ່ກັບການພັດທະນາເສດຖະກິດ, ສ້າງຄວາມຈະເລີນຄວາມຢູ່ດີກິນດີທາງດ້ານວັດຖຸ, ສ້າງຄວາມສີວິໄລທາງດ້ານຈິດໃຈ, ຍົກສູງສະຕິເຄົາລົບກົດໝາຍ ແລະ ຄວາມສະເໝີພາບ-ຍຸຕິທຳ ບົນພື້ນຖານກົດໝາຍ, ຖືເອົາການບຸກທະລຸດ້ານການສຶກສາ, ການຂະຫຍາຍສາທາລະນະສຸກ, ການພັດທະນາແຮງງານ, ການເສີມຂະຫຍາຍຄຸນຄ່າວັດທະນະທຳທີ່ດີງາມຂອງຊາດ, ຄວາມສະເໝີພາບລະຫວ່າງຍິງ-ຊາຍ, ປົກປ້ອງສິດທິແມ່ ແລະ ເດັກ, ພັດທະນາຊາວໜຸ່ມ-ເຍົາວະຊົນລາວ, ສົ່ງເສີມຄວາມສະເໝີພາບ ແລະ ຄວາມຍຸຕິທຳໃນສັງຄົມ.

2.4 ບຸກທະລຸດ້ານກົນໄກຄຸ້ມຄອງບໍລິຫານລັດ ໄປພ້ອມກັບການຍົກສູງຄວາມສັກສິດ, ປະສິດທິຜົນ ແລະ ຄວາມໂປ່ງໃສຂອງການຄຸ້ມຄອງລັດ, ຄຸ້ມຄອງສັງຄົມ, ຖືເອົາການແກ້ໄຂປະກົດການຫຍໍ້ທໍ້ຕ່າງໆ, ການສໍ້ລາດບັງຫລວງ ແລະ ຕ້ານການຟູມເຟືອຍ ເປັນມາດຕະການ ແລະ ເປັນກົນໄກ ພັດທະນາເສດຖະກິດ-ສັງຄົມ ໃນກົນໄກຕະຫລາດ, ຖືເອົາການປັບປຸງການປະຕິບັດງານ, ການແບ່ງຂັ້ນຄຸ້ມຄອງຂອງອົງການອຳນາດລັດແຕ່ລະຂັ້ນ, ຄວາມຮັບຜິດ-ຮັບຊອບ ຕໍ່ພາລະບົດບາດ, ສິດໜ້າທີ່ຖືກມອບໝາຍເປັນການຫັນການບໍລິຫານເຂົ້າສູ່ກົດໝາຍ ແລະ ລະບຽບການ.

2.5 ສົມທົບແໜ້ນການພັດທະນາເສດຖະກິດ-ສັງຄົມ ກັບການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ; ຮັບປະກັນການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃນທຸກພື້ນທີ່ທົ່ວປະເທດເຮັດໃຫ້ປະເທດຊາດມີສະຖຽນລະພາບທາງດ້ານການເມືອງ, ມີຄວາມສະຫງົບມີຄວາມເປັນລະບຽບຮຽບຮ້ອຍໃນສັງຄົມຢ່າງໜັກແໜ້ນ, ຖືເອົາຄວາມເຂັ້ມງວດດ້ານລະບຽບວິໄນຂອງກຳລັງປ້ອງກັນຊາດ, ປ້ອງກັນຄວາມສະຫງົບ,

ການຕິດຕາມກວດກາການເຂົ້າ-ອອກເມືອງ, ການຄຸ້ມຄອງພົນລະເມືອງ, ການແກ້ໄຂເປົ້າໝາຍເຂດທີ່ບໍ່ທັນສະຫງົບເປັນໜ້າທີ່ສຳຄັນຂອງການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.

2.6 ສືບຕໍ່ແຫນັນການເປີດກວ້າງການພົວພັນຕ່າງປະເທດ ກັບການປັບປຸງພາຍໃນຢ່າງຮອບດ້ານ ເພື່ອເພີ່ມຄວາມສາມາດແຂ່ງຂັນ, ເສີມຂະຫຍາຍກຳລັງແຮງສັງລວມຂອງຊາດ ແລະ ກຳລັງແຮງຂອງຍຸກສະໄໝເຂົ້າໃນການພັດທະນາປະເທດ, ຂະຫຍາຍການພົວພັນຮ່ວມມືກັບປະເທດເພື່ອນມິດ ແລະ ບັນດາປະເທດໃນພາກພື້ນ ແລະ ສາກົນ, ສ້າງສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ, ເພີ່ມທະວີຄວາມເປັນເຈົ້າການເຂົ້າຮ່ວມການເຊື່ອມໂຍງ ແລະ ເພີ່ມທະວີຄວາມສາມາດໃນການແຂ່ງຂັນກັບພາກພື້ນ ແລະ ສາກົນໃຫ້ສູງຂຶ້ນ.

2.7 ປະຕິບັດຍຸດທະສາດຫັນເປັນອຸດສາຫະກຳ ແລະ ທັນສະໄໝດ້ວຍບາດກ້າວທີ່ຕັ້ງໜ້າ ແລະ ມີຈຸດສຸມຢູ່ຂະແໜງການ ແລະ ບໍລິເວນເຂດແຄວ້ນທີ່ມີເງື່ອນໄຂ, ຄວາມສາມາດ ແລະ ມີທ່າແຮງ ເພື່ອເພີ່ມຄວາມໄວຂອງການພັດທະນາ, ຫຼຸດຜ່ອນຄວາມແຕກໂຕນດ້ານລະດັບການພັດທະນາກັບບັນດາປະເທດອື່ນໆ ໃນພາກພື້ນ ແລະ ສາກົນ ໂດຍການບຸກທະລຸດ້ານພື້ນຖານໂຄງລ່າງ, ບັນດາໂຄງການຂະໜາດໃຫຍ່ເປັນຫົວຈັກການພັດທະນາ, ເປັນຖານການເຕີບໂຕເຂັ້ມແຂງ ແລະ ສາມາດຮັບໃຊ້ໃຫ້ແກ່ການເຊື່ອມໂຍງລະຫວ່າງປະເທດ, ຕິດພັນກັບການຊຸກຍູ້ສົ່ງເສີມການຜະລິດ-ທຸລະກິດຂະໜາດນ້ອຍ-ກາງ ໃຫ້ສາມາດນຳໃຊ້ເຕັກນິກ-ເຕັກໂນໂລຊີໃໝ່ ເພື່ອຍົກສູງສະມັດຕະພາບການຜະລິດ ແລະ ປະສິດທິຜົນເສດຖະກິດໃຫ້ສູງຂຶ້ນ.

## ໝວດທີ II

## ຄາດໝາຍຕົ້ນຕໍຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ

**ມາດຕາ 3: ຄາດໝາຍສູ້ຊົນດ້ານເສດຖະກິດມະຫາພາກ ໃນສົກປີ 2011-2012 ມີດັ່ງນີ້ :**

3.1 ລວມຍອດຜະລິດຕະພັນພາຍໃນ (GDP) ທຽບໃສ່ສົກປີ 2010-2011 ບັນລຸ 8,3% ຂຶ້ນໄປ ແລະ ສ້າງມູນຄ່າເພີ່ມໃນລາຄາປະຈຸບັນ ປະມານ 70.200 ຕື້ກີບ; ໃນນັ້ນ:

+ ຂະແໜງກະສິກຳ ເພີ່ມຂຶ້ນ 3,5%, ກວມເອົາປະມານ 26,5%;

+ ຂະແໜງອຸດສາຫະກຳ ເພີ່ມຂຶ້ນ 16,8%, ກວມເອົາປະມານ 29,6%.

+ ຂະແໜງການບໍລິການ ເພີ່ມຂຶ້ນ 6,7%, ກວມເອົາປະມານ 38,2% ຂອງ GDP.

3.2 ການລົງທຶນບໍ່ຫຼຸດ 33% ຂອງ GDP ຫລືບໍ່ຫລຸດ 23.300 ຕື້ກີບ ໃນນີ້, ຄາດຄະເນທຶນຈາກງົບປະມານພາຍໃນ 2.200 ຕື້ກີບ, ການຊ່ວຍເຫລືອລ້າ ແລະ ກູ້ຢືມ 5.700 ຕື້ກີບ, ການລົງທຶນຈາກເອກະຊົນພາຍໃນ ແລະ ຕ່າງປະເທດ 12.400 ຕື້ກີບ ແລະ ສິນເຊື່ອທະນາຄານ 3.000 ຕື້ກີບ.

3.3 ການຈັດເກັບລາຍຮັບງົບປະມານທັງໝົດ ໃຫ້ໄດ້ 15.726,15 ຕື້ກີບ, ໃນນັ້ນລາຍຮັບພາຍໃນໃຫ້ໄດ້ 11.516,11 ຕື້ກີບ.

3.4 ຮັກສາອັດຕາເງິນເຟີ້ບໍ່ໃຫ້ເກີນອັດຕາການຂະຫຍາຍຕົວຂອງເສດຖະກິດ ແລະ ຄວບຄຸມການເພີ່ມຂຶ້ນຂອງປະລິມານເງິນ ($M_2$) ໃຫ້ຢູ່ໃນລະດັບທີ່ເໝາະສົມ ທຽບໃສ່ປີຜ່ານມາ.

3.5 ຮັບປະກັນຄັງສຳຮອງທີ່ເປັນເງິນຕາຕ່າງປະເທດໃຫ້ກຸ້ມການນຳເຂົ້າແຕ່ 6 ເດືອນຂຶ້ນໄປ.

3.6 ສືບຕໍ່ປະຕິບັດນະໂຍບາຍອັດຕາແລກປ່ຽນຕາມກົນໄກຕະຫລາດ ທີ່ມີການຄຸ້ມຄອງຂອງລັດ, ເຮັດໃຫ້ອັດຕາແລກປ່ຽນມີຄວາມສະຫງົບປົກກະຕິ ເງິນກີບແຂງຄ່າ ຫລື ອ່ອນຄ່າຢູ່ໃນລະຫວ່າງ 5% ທຽບໃສ່ເງິນຕາຕ່າງປະເທດສະກຸນຫຼັກ.

3.7 ສູ້ຊົນເຮັດໃຫ້ມູນຄ່າການສົ່ງອອກ ບັນລຸໄດ້ປະມານ 1.620,46 ລ້ານໂດລາສະຫະລັດ ແລະ ມູນຄ່າການ ນໍາເຂົ້າ ປະມານ 1.418,67 ລ້ານໂດລາສະຫະລັດ.

**ມາດຕາ 4: ຄາດໝາຍສູ້ຊົນຕົ້ນຕໍດ້ານເສດຖະກິດ ມີດັ່ງນີ້:**

4.1 ສູ້ຊົນຜະລິດເຂົ້າ ໃຫ້ໄດ້ 3,6 ລ້ານໂຕນ.

4.2 ສູ້ຊົນໃຫ້ການຜະລິດອຸດສາຫະກໍາປຸງແຕ່ງ ຂະຫຍາຍຕົວ ປະມານ 14% ແລະ ຫັດຖະກໍາ ຂະຫຍາຍຕົວປະມານ 30% ທຽບໃສ່ສົກປີ 2010 - 2011.

4.3 ສູ້ຊົນຜະລິດກະແສໄຟຟ້າ ໃຫ້ບັນລຸ 12,04 ຕື້ກິໂລວັດໂມງທຽບໃສ່ປີຜ່ານມາເພີ່ມຂຶ້ນ 37% ແລະ ຜະລິດແຮ່ທາດ ບັນລຸໄດ້ 15.550,08 ຕື້ກີບ ເພີ່ມຂຶ້ນ 49,11% ທຽບໃສ່ປີຜ່ານມາ.

4.4 ສູ້ຊົນເຮັດໃຫ້ນັກທ່ອງທ່ຽວທີ່ເຂົ້າມາປະເທດ ປະມານ 2,86 ລ້ານຄົນ ແລະ ສ້າງລາຍຮັບ 427,39 ລ້ານໂດລາສະຫະລັດ. ແກ້ໄຂການເຊາະເຈື່ອນຂອງຕາຝັ່ງນ້ຳຂອງ ແລະ ສາຂານ້ຳຂອງ ໃຫ້ໄດ້ໃນລະດັບສູງ.

4.5 ເລີ່ມຕົ້ນປະຕິບັດໂຄງການໃຫຍ່ລະດັບຊາດ: ທາງລົດໄຟ, ສາຍສົ່ງໄຟຟ້າແຮງສູງ-ແຮງກາງ ຢູ່ພາກເໜືອ, ໂຄງການຊົນລະກະເສດລຸ່ມນ້ຳເທີນ 2, ນ້ຳມັງ 3.

**ມາດຕາ 5: ຄາດໝາຍສູ້ຊົນຕົ້ນຕໍດ້ານສັງຄົມ ມີດັ່ງນີ້:**

5.1 ເຮັດໃຫ້ອັດຕາຄວາມທຸກຍາກ ຂອງປະຊາກອນທັງຫມົດ ຫລຸດລົງປະມານ 2% ຫລື ຈາກ 24% (ໃນສົກປີ 2010-2011) ໃຫ້ຍັງເຫລືອປະມານ 22% ແລະ ອັດຕາຄົວເຮືອນທຸກຍາກ ຫລຸດລົງ ປະມານ 2% ຫລື ຈາກ 19% (ໃນສົກປີ 2010-2011) ໃຫ້ຍັງເຫລືອປະມານ 17% ຂອງຄົວເຮືອນທັງໝົດທົ່ວປະເທດໃນ ທ້າຍປີ 2012.

5.2 ສ້າງເງື່ອນໄຂໃຫ້ເດັກໃນກຸ່ມອາຍຸ 3-5 ປີ ໄດ້ເຂົ້າຮຽນໃນຊັ້ນອະນຸບານ ໃຫ້ໄດ້ 24,1%.

5.3 ສູ້ຊົນໃຫ້ເດັກອາຍຸ 5 ປີ ໄດ້ເຂົ້າຮຽນຫ້ອງກຽມປະຖົມໃຫ້ໄດ້ 44%.

5.4 ອັດຕາເຂົ້າຮຽນສຸດທິຊັ້ນປະຖົມ ໃຫ້ໄດ້ 95%, ອັດຕາການລອດເຫຼືອຂອງນັກຮຽນ ປ1-ປ5 ໃຫ້ໄດ້ 79,4%, ອັດຕາເຂົ້າຮຽນຊັ້ນມັດທະຍົມຕົ້ນ ໃຫ້ໄດ້ 66,1%, ອັດຕາການຮູ້ໜັງສືຂອງຜູ້ໃຫຍ່ ອາຍຸ 15 ປີຂຶ້ນໄປ ໃຫ້ໄດ້ 84% ແລະ ອັດຕາການຮູ້ໜັງສືໃນເກນອາຍຸ 15-40 ປີ ໃຫ້ໄດ້ 92%.

5.5 ສະໜອງນ້ຳສະອາດໃຫ້ແກ່ປະຊາຊົນ ໃຫ້ໄດ້ 81%, ການນໍາໃຊ້ວິດຖ່າຍຂອງປະຊາຊົນ ໃຫ້ໄດ້ 55%, ການສັກຢາກັນພະຍາດເດັກນ້ອຍ ໃຫ້ບັນລຸ 85%, ອັດຕາການຕາຍຂອງແມ່ໃຫ້ຫລຸດລົງຢູ່ 300 ຄົນ ຕໍ່ເດັກເກີດມີຊີວິດ 100.000 ຄົນ, ອັດຕາການຕາຍຂອງເດັກນ້ອຍຕ່ຳກວ່າ 1 ປີ ໃຫ້ຍັງເຫຼືອ 50 ຄົນ ຕໍ່ເດັກເກີດມີຊີວິດ 1.000 ຄົນ, ອັດຕາການຕາຍຂອງເດັກອາຍຸລຸ່ມ 5 ປີ ໃຫ້ຍັງເຫຼືອ 65 ຄົນ ຕໍ່ເດັກເກີດມີຊີວິດ 1,000 ຄົນ.

5.6 ຝຶກສີມືແຮງງານ ໃຫ້ໄດ້ 44.300 ຄົນ; ສູ້ຊົນຈັດຫາວຽກເຮັດງານທໍາ ໃຫ້ແຮງງານທີ່ເພີ່ມ ຂຶ້ນໃໝ່ ໃຫ້ໄດ້ 55.360 ຄົນ; ສູ້ຊົນເຮັດໃຫ້ປະຊາຊົນບັນດາເຜົ່າໄດ້ຮັບການຄຸ້ມຄອງດ້ານປະກັນສັງຄົມ ແລະ ປະກັນ

ສຸຂະພາບ ກວມເອົາ 20% ຂອງພົນລະເມືອງທັງໝົດໃນປີ 2012; ປະຕິບັດນະໂຍບາຍຕໍ່ຜູ້ມີຄຸນງາມຄວາມດີຕໍ່ປະເທດຊາດໃຫ້ໄດ້ຫລາຍກວ່າ 17.200 ທ່ານ;

5.7 ສູ້ຊົນສ້າງບ້ານວັດທະນະທໍາໃຫ້ໄດ້ 478 ບ້ານ ແລະ ຄອບຄົວວັດທະນະທໍາໃຫ້ໄດ້ 91 ພັນຄອບຄົວ.

5.8 ໂຄສະນາເຜີຍແຜ່ກົດໝາຍຢູ່ຮາກຖານໃຫ້ໄດ້ປະມານ 2.800-3.000 ບ້ານ; ສູ້ຊົນສ້າງບ້ານປອດຄະດີໃຫ້ໄດ້ 700-750 ບ້ານ, ສ້າງຄອບຄົວປອດຄະດີໃຫ້ໄດ້ປະມານ 100.000 ຄອບຄົວຂຶ້ນໄປ; ສູ້ຊົນປັບປຸງໜ່ວຍໄກ່ເກ່ຍ ໃຫ້ໄດ້ 2.000-2.500 ໜ່ວຍ ແລະ ແກ້ໄຂຂໍ້ຂັດແຍ່ງທີ່ເກີດຂຶ້ນຢູ່ແຕ່ລະບ້ານໃຫ້ໄດ້ປະມານ 80-90% ຂຶ້ນໄປ; ເປີດຮຽນກົດໝາຍຂັ້ນຕົ້ນ ໃຫ້ໄດ້ 7.000-7.500 ຄົນ.

5.9 ສູ້ຊົນບໍາບັດຜູ້ຕິດຢາເສບຕິດໃຫ້ໄດ້ 5.000 ຄົນ.

**ມາດຕາ 6: ຄາດໝາຍສູ້ຊົນດ້ານ ຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ມີດັ່ງນີ້:**

6.1 ສູ້ຊົນຈັດຕັ້ງປະຕິບັດການຄຸ້ມຄອງຊັບພະຍາກອນນໍ້າແບບປະສົມປະສານ ເພື່ອຮັກສາຄວາມສະອາດ, ຄວາມສົມບູນທາງທໍາມະຊາດຂອງແຫລ່ງນໍ້າ ຢູ່ 3 ອ່າງ ຄື: ເຊບັ້ງໄຟ, ເຊບັ້ງຫຽງ ແລະ ເຊກອງ.

6.2 ສ້າງຕັ້ງລະບົບເຕືອນໄພລ່ວງໜ້າແຫ່ງຊາດ ເພື່ອເຮັດໜ້າທີ່ພະຍາກອນ ໄພນໍ້າຖ້ວມ, ໄພແຫ້ງແລ້ງ ແລະ ແຈ້ງເຕືອນໄພທໍາມະຊາດ.

6.3 ຮັບປະກັນບໍ່ໃຫ້ໄຟລາມປ່າ, ປົກປັກຮັກສາປ່າສະຫງວນແຫ່ງຊາດທຸກແຫ່ງ ແລະ ປ່າສະຫງວນຂອງທ້ອງຖິ່ນ, ຮັກສາປ່າຍອດນໍ້າ; ບຶງ-ໜອງໃຫ້ຄົງຢູ່ດັ່ງເດີມ.

6.4 ຜັນຂະຫຍາຍຂໍ້ກໍານົດໝາຍສ້າງປະເທດລາວ ສີຂຽວ, ສະອາດ; ແກ້ໄຂນໍ້າເສຍ, ນໍ້າເປິເປື້ອນໃນຕົວເມືອງ, ຊຸມຊົນ ແລະ ແຄມທາງຫລວງແຫ່ງຊາດ.

6.5 ຈັດສັນທີ່ດິນ, ອອກໃບຕາດິນໃຫ້ໄດ້ 200.000 ຕອນ.

**ມາດຕາ 7: ຄາດໝາຍສູ້ຊົນການເຊື່ອມໂຍງສາກົນ ມີດັ່ງນີ້:**

ປະຕິບັດນະໂຍບາຍການເຊື່ອມໂຍງເສດຖະກິດກັບພາກພື້ນ ແລະ ສາກົນໃຫ້ມີຄວາມຫນັກແຫນ້ນ ໂດຍສຸມໃສ່ການຮ່ວມມືໃນຂອບອາຊຽນ (ASEAN), ການຮ່ວມມືໃນຂອບອະນຸພາກພື້ນແມ່ນໍ້າຂອງ (GMS); ສືບຕໍ່ກະກຽມເຂົ້າເປັນສະມາຊິກຂອງອົງການການຄ້າໂລກ (WTO), ກຽມຄວາມພ້ອມ ໃນການເປັນເຈົ້າພາບກອງປະຊຸມສຸດຍອດອາເຊມ (ASEM) ປີ 2012, ກອງປະຊຸມ CLV 2011 ແລະ ກອງປະຊຸມອື່ນໆທີ່ ສປປ ລາວ ໄດ້ຮັບກຽດເປັນເຈົ້າພາບ.

**ມາດຕາ 8: ຮັບປະກັນປະຕິບັດແຜນລາຍຮັບ ແລະ ລາຍຈ່າຍງົບປະມານປະຈໍາສົກປີຕາມຄາດໝາຍທີ່ສະພາແຫ່ງຊາດໄດ້ຮັບຮອງເອົາ ໃຫ້ປະກົດເປັນຈິງ ຄື :**

8.1 ລາຍຮັບງົບປະມານ.

| | ມູນຄ່າ | | ໂຄງປະກອບ |
|---|---|---|---|
| **- ລວມຍອດລາຍຮັບງົບປະມານທັງໝົດ (ລວມທັງທຶນຊ່ວຍເຫລືອລ້າ)** | **15.726,15** | ຕື້ກີບ; | **100,00 %** |
| ໃນນັ້ນ: | | | |
| **ກ. ລາຍຮັບງົບປະມານພາຍໃນ** | **11.516,11** | ຕື້ກີບ; | **73,22 %** |
| 1) ລາຍຮັບຈາກສ່ວຍສາອາກອນ | 5.520,00 | ຕື້ກີບ; | 35,10 % |

| | | | | |
|---|---|---|---|---|
| 2) ລາຍຮັບຈາກທີ່ດິນ | 180,00 | ຕື້ກີບ; | 1,14 | % |
| 3) ລາຍຮັບຈາກພາສີ(ຂາເຂົ້າ+ຂາອອກ) | 3.650,00 | ຕື້ກີບ; | 23,69 | % |
| 4) ລາຍຮັບຈາກການຄຸ້ມຄອງລັດວິສາຫະກິດ | 810,00 | ຕື້ກີບ; | 5,15 | % |
| 5) ລາຍຮັບຈາກຊັບສິນຂອງລັດ | 1.306,11 | ຕື້ກີບ; | 8,31 | % |
| 6) ລາຍຮັບຂາຍໄມ້ | 50,00 | ຕື້ກີບ; | 0,32 | % |
| **ຂ. ລາຍຮັບຈາກການຊ່ວຍເຫລືອລ້າ** | **4.210,04** | ຕື້ກີບ; | **26,77** | **%** |
| 1) ຊ່ວຍເຫຼືອລ້າຈາກຕ່າງປະເທດເປັນໂຄງການທີ່ກະຊວງການເງິນຄຸ້ມຄອງ | 939,08 | ຕື້ກີບ; | 5,97 | % |
| 2) ຊ່ວຍເຫຼືອລ້າຈາກຕ່າງປະເທດ ເປັນໂຄງການທີ່ກະຊວງ ຜທ ຄຸ້ມຄອງ | 2.955,96 | ຕື້ກີບ; | 18,80 | % |
| 3) ຊ່ວຍເຫຼືອນອກໂຄງການ ຂອງລັດຖະບານຍີ່ປຸ່ນ | 85,00 | ຕື້ກີບ; | 0,54 | % |
| 4) ຊ່ວຍເຫຼືອລ້າດັດແກ້ມະຫາພາກ | 230,00 | ຕື້ກີບ; | 1,46 | % |

8.2 ລາຍຈ່າຍງົບປະມານ.

| | | | | |
|---|---|---|---|---|
| **- ແຜນລາຍຈ່າຍງົບປະມານທັງໝົດ** | **17.831,11** | ຕື້ກີບ; | **100,00** | **%** |
| ໃນນັ້ນ: | | | | |
| 1) ລາຍຈ່າຍເງິນເດືອນ | 3.450,00 | ຕື້ກີບ; | 19,35 | % |
| 2) ລາຍຈ່າຍເງິນອຸດໜູນຕ່າງໆ | 1.100,00 | ຕື້ກີບ; | 6,19 | % |
| 3) ລາຍຈ່າຍບໍລິຫານ - ຊື້ໃໝ່ | 1.630,69 | ຕື້ກີບ; | 9.14 | % |
| 4) ລາຍຈ່າຍດັດສົມ | 998,64 | ຕື້ກີບ; | 5,60 | % |
| ໃນນັ້ນ: | | | | |
| - ລາຍຈ່າຍດັດສົມທົ່ວໄປ | 948,64 | ຕື້ກີບ; | 5,32 | % |
| - ຈັດສັນອາຊີບຄົງທີ່ | 50,00 | ຕື້ກີບ; | 0,28 | % |
| 5) ລາຍຈ່າຍເງິນແຮ ແລະ ອື່ນໆ | 100,00 | ຕື້ກີບ; | 0,56 | % |
| 6) ຄັງສະສົມຂອງລັດຖະບານ | 300,00 | ຕື້ກີບ; | 1,68 | % |
| 7) ເງິນປະກອບສ່ວນ, ບໍາລຸງອົງການຈັດຕັ້ງສາກົນ | 29,97 | ຕື້ກີບ; | 0,16 | % |
| 8) ລາຍຈ່າຍຊໍາລະໜີ້ສິນຕ່າງໆ | 2.321,81 | ຕື້ກີບ; | 13,02 | % |
| ໃນນັ້ນ: | | | | |
| – ຈ່າຍຊໍາລະໜີ້ສິນຕ່າງປະເທດ | 1.300,82 | ຕື້ກີບ; | 7,30 | % |
| – ຈ່າຍຊໍາລະໜີ້ສິນພາຍໃນ | 1.020,99 | ຕື້ກີບ; | 5,72 | % |
| 9) ລາຍຈ່າຍການລົງທຶນຂອງລັດ | 7.900,00 | ຕື້ກີບ; | 44,30 | % |
| ໃນນັ້ນ: | | | | |

| | | | | |
|---|---|---|---|---|
| + ທຶນຊ່ວຍເຫລືອ ແລະ ກູ້ຢືມຈາກຕ່າງປະເທດ | 5.700,00 | ຕື້ກີບ; | 31,97 | % |
| ໃນນັ້ນ: | | | | |
| - ຊ່ວຍເຫລືອລ້າ-ກູ້ຢືມເປັນໂຄງການທີ່ກະຊວງການເງິນ ຄຸ້ມຄອງ | 2.744,04 | ຕື້ກີບ; | 15,39 | % |
| - ຊ່ວຍເຫລືອລ້າເປັນໂຄງການທີ່ ກະຊວງ ຜທ ຄຸ້ມຄອງ | 2.955,96 | ຕື້ກີບ; | 16,58 | % |
| + ຈ່າຍລົງທຶນຂອງລັດພາຍໃນ | 2.200,00 | ຕື້ກີບ; | 12,34 | % |
| ໃນນັ້ນ: | | | | |
| - ລົງທຶນປົກກະຕິ | 1.685,00 | ຕື້ກີບ; | 9,45 | % |
| - ກອງທຶນບູລະນະທາງ | 400,00 | ຕື້ກີບ; | 2,24 | % |
| - ແຜນງານບູລິມະສິດຕາມສັນຍາ ນ້ຳເທີນ 2 | 100,00 | ຕື້ກີບ; | 0,56 | % |
| 8.3 ແຫຼ່ງດຸນດ່ຽງງົບປະມານທັງໝົດ | **2.104,95** | ຕື້ກີບ; | **100,00** | **%** |
| ໃນນັ້ນ: | | | | |
| 1). ກູ້ຢືມຈາກຕ່າງປະເທດ | 1.804.95 | ຕື້ກີບ; | 85,75 | % |
| 2). ພັນທະບັດຄັງເງິນ | 300,00 | ຕື້ກີບ; | 14,25 | % |

**ມາດຕາ 9: ຮັບປະກັນປະຕິບັດແຜນການລົງທຶນປະຈຳສົກປີ ຕາມຄາດໝາຍທີ່ສະພາແຫ່ງຊາດໄດ້ຮັບຮອງເອົາໃຫ້ປະກົດເປັນຈິງ ຄື:**

9.1 ການລົງທຶນທົ່ວສັງຄົມ ທັງໝົດປະມານ 33% ຂອງ GDP ເປັນທຶນປະມານ 23.300 ຕື້ກີບ; ໃນນັ້ນ, ການລົງທຶນຂອງລັດ ປະມານ 7.900 ຕື້ກີບ ກວມເອົາ 34,0% ຂອງການລົງທຶນທັງໝົດ, ໃນນັ້ນ ເປັນທຶນພາຍໃນ ປະມານ 2.200 ຕື້ກີບ ເທົ່າກັບ 9,4% ແລະ ທຶນຕ່າງປະເທດ (ODA) ປະມານ 5.700 ຕື້ກີບ ເທົ່າກັບ 24,5%; ການລົງທຶນຂອງເອກະຊົນພາຍໃນ ແລະ ຕ່າງປະເທດ 12.400 ຕື້ກີບ ເທົ່າກັບ 53,2% ແລະ ສິນເຊື່ອທະນາຄານ 3.000 ຕື້ກີບ ເທົ່າກັບ 12,9% ຂອງການລົງທຶນທັງໝົດ.

9.2 ການລົງທຶນຂອງລັດ ມີທັງໝົດ 4.882 ໂຄງການ, ມີມູນຄ່າ 7.908,36 ຕື້ກີບ; ໃນນີ້, ທຶນພາຍໃນຈຳນວນ 2.200 ຕື້ກີບ ແລະ ທຶນຊ່ວຍເຫລືອລ້າ ແລະ ກູ້ຢືມ ຈຳນວນ 5.700 ຕື້ກີບ.

- ໂຄງປະກອບການລົງທຶນຂອງລັດ ມີຄື:
  - + ຂົງເຂດເສດຖະກິດ ກວມປະມານ 30% ຂອງການລົງທຶນລັດທັງໝົດ.
  - + ຂົງເຂດສັງຄົມ ກວມປະມານ 35%; ໃນນີ້, ສຶກສາ 17%, ສາທາລະນະສຸກ 9% ແລະ ພາກສ່ວນອື່ນໆ 9% ຂອງການລົງທຶນລັດທັງໝົດ.
  - + ເສັ້ນທາງ ແລະ ສຳນັກງານອົງການ ໃຫ້ກວມປະມານ 35%; ໃນນັ້ນ, ເສັ້ນທາງ 28% ແລະ ເຄຫາສະຖານ 7% ຂອງການລົງທຶນລັດທັງໝົດ.
- ທຶນພາຍໃນ 2.200 ຕື້ກີບ ໄດ້ຈັດແບ່ງ ຕາມບູລິມະສິດ ດັ່ງນີ້:
  - + ໂຄງການສົມທົບທຶນກັບຕ່າງປະເທດ 431 ໂຄງການ ມູນຄ່າ 5.803,08 ຕື້ກີບ.
  - + ຊຳລະໜີ້ໂຄງການລົງທຶນຂອງລັດ 509 ໂຄງການ ມູນຄ່າ 267,76 ຕື້ກີບ.
  - + ໂຄງການສືບຕໍ່ 1.853 ໂຄງການ ມູນຄ່າ 1.067,86 ຕື້ກີບ.

+ ໂຄງການໃໝ່ 2.089 ໂຄງການ ມູນຄ່າ 769,66 ຕື້ກີບ.

+ ຄົ້ນຄວ້າວິທະຍາສາດ ແລະ ປະເມີນຜົນ ມູນຄ່າ 15 ຕື້ກີບ.

- ຮັບປະກັນຍາດແຍ່ງແຫລ່ງທຶນການຊ່ວຍເຫລືອລ້າ ແລະ ກູ້ຢືມ ຈາກຕ່າງປະເທດໃຫ້ໄດ້ ປະມານ 5.700 ຕື້ກີບ ຫລື ປະມານ 713 ລ້ານໂດລາສະຫະລັດ.

9.3 ສູ້ຊົນດຶງດູດການລົງທຶນຈາກເອກະຊົນພາຍໃນ ແລະ ຕ່າງປະເທດ ໃຫ້ໄດ້ປະມານ 12.400 ຕື້ກີບ (ການນຳເຂົ້າທຶນຕົວຈິງ) ຫລື ເທົ່າກັບປະມານ 1.530 ລ້ານໂດລາສະຫະລັດ.

9.4 ເອົາໃຈໃສ່ຊຸກຍູ້ສົ່ງເສີມການລົງທຶນຈາກປະຊາຊົນໃນທົ່ວປະເທດຢ່າງກວ້າງຂວາງ ແລະ ຍູ້ໃຫ້ທະນາຄານປ່ອຍສິນເຊື່ອໃຫ້ໄດ້ ປະມານ 3.000 ຕື້ກີບ.

**ມາດຕາ 10: ການແກ້ໄຂໜີ້ສິນການລົງທຶນຂອງລັດ ມີດັ່ງນີ້:**

10.1 ໃນສົກປີ 2011-2012 ແຜນຊຳລະໜີ້ການລົງທຶນຂອງລັດ ເທົ່າກັບ 267,76 ຕື້ກີບ ເພື່ອຊຳລະໃຫ້ 509 ໂຄງການ; ຂະແໜງການ ແລະ ທ້ອງຖິ່ນ ທີ່ມີແຜນຊຳລະໜີ້ຕ້ອງຖືສຳຄັນການຊຳລະໃຫ້ໄປຕາມແຜນ ການທີ່ອະນຸມັດ, ເດັດຂາດບໍ່ໃຫ້ອວ່າຍທຶນດັ່ງກ່າວໄປປະຕິບັດເປົ້າໝາຍອື່ນ.

10.2 ສູ້ຊົນແກ້ໄຂໜີ້ສິນການລົງທຶນຂອງລັດ (ທຶນພາຍໃນ) ໃຫ້ຫລຸດຜ່ອນລົງ ແລະ ຂີດຂັ້ນໜີ້ໃນໄລຍະຂອງແຜນການ 5 ປີ ຄັ້ງທີ VI (2006-2010) ຄືນຫລັງ.

10.3 ກະຊວງແຜນການ ແລະ ການລົງທຶນ ເປັນຜູ້ສັງລວມໜີ້ການລົງທຶນທົ່ວປະເທດ ໂດຍແຍກໃຫ້ເຫັນໜີ້ທີ່ເກີດຂຶ້ນ ແຕ່ສົກປີ 2009-2010 ຄືນຫຼັງ ແລະ ໜີ້ທີ່ເກີດຂຶ້ນແຕ່ ສົກປີ 2009-2010 ມາຮອດປະຈຸບັນ, ພ້ອມກັນນັ້ນ, ຕ້ອງແຍກໃຫ້ເຫັນປະເພດນີ້ຄື:

1. ໜີ້ເກີດຈາກການຂຶ້ນແຜນຊຳລະໂຄງການບໍ່ສຳເລັດຕາມໄລຍະຂອງໂຄງການ(ເອີ້ນວ່າໜີ້ໃນແຜນ).
2. ໜີ້ເກີດຈາກການປະຕິບັດໂຄງການທີ່ບໍ່ນອນໃນແຜນການອະນຸມັດຂອງສະພາແຫ່ງຊາດແຕ່ລະປີ (ເອີ້ນວ່າ ໜີ້ນອກແຜນ).

10.4 ຄະນະກຳມະການແກ້ໄຂໜີ້ສິນພາຍໃນ ລັດຖະບານເປັນຜູ້ຄົ້ນຄວ້າຈັດສັນງົບປະມານຊຳລະໜີ້ສິນການລົງທຶນລັດ ໃຫ້ແຕ່ລະຂະແໜງການ ແລະ ທ້ອງຖິ່ນໃນແຕ່ລະສົກປີ, ໂດຍອີງໃສ່ບັນຊີໜີ້ສິນ ທີ່ກະຊວງແຜນການ ແລະ ການລົງທຶນ ເປັນຜູ້ສັງລວມໃນແຕ່ລະປີ ແລະ ປະຕິບັດຕາມທິດແກ້ໄຂໜີ້ສິນ, ຫລັກການ ແລະ ແຫລ່ງທຶນ ຄືດັ່ງນີ້:

+ ດ້ານຫລັກການ: ກ). ການຊຳລະແມ່ນປະຕິບັດຕາມຫລັກການຄວາມເປັນເອກະພາບ, ຍຸຕິທຳໂດຍເອົາອັດຕາສ່ວນຂອງທຶນ ທີ່ໄດ້ແຕ່ລະປີມາຈັດສັນໃຫ້, ຂ). ແກ້ໄຂໜີ້ສິນຕ້ອງລວມສູນຢູ່ບ່ອນດຽວໂດຍຜ່ານຄະນະແກ້ໄຂໜີ້ສິນຂອງລັດຖະບານເປັນຜູ້ຈັດສັນ, ຄ). ສ້າງເປັນແຜນງົບປະມານແກ້ໄຂໜີ້ສິນປະຈຳປີ ໂດຍຄຳນຶງເຖິງສະພາບຄ່ອງຕົວໃນລະບົບຄັງເງິນແຫ່ງຊາດ ແລະ ສະຖຽນລະພາບທາງດ້ານການເງິນ-ເງິນຕາເປັນຫລັກ ແລ້ວສະເໜີຜ່ານລັດຖະບານ ຈຶ່ງປະຕິບັດຕາມການຕົກລົງ, ງ). ບູລິມະສິດຕໍ່ບາງໂຄງການທີ່ລັດເປັນໜີ້ ມີຄື ດັ່ງນີ້: (1). ແກ້ໄຂໃຫ້ຜູ້ລົງທຶນ ຫລື ພາກສ່ວນທີ່ເປັນໜີ້ຍາວນານ, (2). ແກ້ໄຂໃຫ້ຜູ້ລົງທຶນໃສ່ໂຄງການ ທີ່ມີປະສິດທິຜົນທາງດ້ານເສດຖະກິດສູງ ແລະ ໄດ້ຮັບຜົນຕອບແທນໄວ, (3). ແກ້ໄຂໃຫ້ພາກສ່ວນທຸລະກິດທີ່ມີໜີ້ສິນຫລາຍ, ມີຄວາມຫຍຸ້ງຍາກທາງດ້ານການເງິນໜັກໜ່ວງ ເພື່ອໃຫ້ພາກສ່ວນດັ່ງກ່າວມີທຶນຮອນສືບຕໍ່ດຳເນີນທຸລະກິດ ແລະ ເຮັດພັນທະຕໍ່ລັດຖະບານ.

+ ດ້ານແຫລ່ງທຶນເພື່ອແກ້ໄຂໜີ້ສິນ: ກ). ຈາກງົບປະມານການລົງທຶນຂອງລັດ, 35% ຂອງທຶນແຕ່ລະພາກສ່ວນໄດ້ຮັບໃນແຕ່ລະປີ, ໃນກໍລະນີທີ່ແຂວງ ຫລື ກະຊວງມີໜີ້, ຂ). ຄົ້ນຄວ້າອອກພັນທະບັດຊໍາລະໜີ້ສາມາດປ່ຽນມືໄດ້ ແຕ່ຕ້ອງໄດ້ອອກລະບຽບການຄຸ້ມຄອງໃຫ້ຮັດກຸມ. ຄ) ຊໍາລະດ້ວຍຮູບການຊື້ໜີ້ໂດຍ ຕ້ອງສ້າງລະບຽບການຄຸ້ມຄອງໃຫ້ຮັດກຸມ. ງ) ເງິນເກີນແຜນລາຍຮັບທີ່ເປັນພູດຂອງ ແຂວງໃນແຕ່ລະປີ ໃຫ້ນໍາໃຊ້ເຂົ້າໃນວຽກງານແກ້ໄຂໄພພິບັດທີ່ເກີດຈາກໄພທໍາມະຊາດ, ເຫລືອຈາກນັ້ນໃຫ້ນໍາໃຊ້ເຂົ້າໃນການແກ້ໄຂໜີ້ສິນ ຈ). ຫັນໂຄງການທີ່ລັດເປັນໜີ້ໃຫ້ເປັນທຶນໂດຍໃຫ້ເຈົ້າໜີ້ເຂົ້າໄປດໍາເນີນກິດຈະການໃນໂຄງການທີ່ເປັນໜີ້ນັ້ນ, ສ). ຫັນຊັບສິນທີ່ດິນເປັນທຶນ, ຊ). ຫັນເອົາໂຄງການເປັນທຶນ ໂດຍສະເພາະໂຄງການຂະໜາດໃຫຍ່ ເຊັ່ນ: ໂຄງການບໍ່ແຮ່ທີ່ໄດ້ສໍາຫລວດ ແລະ ອະນຸມັດແລ້ວຕາມການຕົກລົງຂອງລັດຖະບານ.

+ ການແບ່ງຄວາມຮັບຜິດຊອບ: ສືບຕໍ່ຊໍາລະໜີ້ຕາມເປົ້າໝາຍ ແລະ ແຫຼ່ງທຶນ ທີ່ສະພາແຫ່ງຊາດໄດ້ຮັບຮອງ ໂດຍແບ່ງຄວາມຮັບຜິດຊອບນໍາກັນດັ່ງນີ້: ໜີ້ໂຄງການລົງທຶນຂອງລັດ ແມ່ນມອບໃຫ້ກະຊວງແຜນການ ແລະ ການລົງທຶນ ເປັນຜູ້ຄຸ້ມຄອງ ໂດຍສົມທົບກັບກະຊວງການເງິນ ໃນການຊໍາລະໃນແຕ່ລະສົກປີ; ໜີ້ບໍລິຫານ, ໜີ້ທະນາຄານ ແລະ ໜີ້ຕ່າງປະເທດ ມອບໃຫ້ກະຊວງການເງິນເປັນຜູ້ຄຸ້ມຄອງ ແລະ ຊໍາລະ; ໜີ້ບູລິມະສິດຂອງລັດຖະບານ ແມ່ນຊໍາລະຕາມການຕົກລົງຂອງລັດຖະບານ; ໜີ້ທີ່ຂະແໜງການ ແລະ ທ້ອງຖິ່ນ ກູ້ຢືມຈາກທະນາຄານ ແຫ່ງ ສປປ ລາວ ແມ່ນໃຫ້ຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງຖືເປັນບູລິມະສິດອັນດັບໜຶ່ງໃນການຈັດສັນທຶນເພື່ອຊໍາລະຕາມສັນຍາ ແລະ ໃຫ້ປັບປຸງການ ເຊັນສັນຍາໃຫ້ເປັນລັກສະນະສາມແຈ ຄືນໃໝ່ ໝາຍຄວາມວ່າຕ້ອງມີການເຊັນສັນຍາ ລະຫວ່າງ ກະຊວງ ຫລື ແຂວງ (ຜູ້ກູ້ຢືມ), ທະນາຄານແຫ່ງ ສປປ ລາວ (ຜູ້ປ່ອຍກູ້) ແລະ ກະຊວງແຜນການ ແລະ ການລົງທຶນ (ຜູ້ຄໍ້າປະກັນການຊໍາລະ).

- ກະຊວງແຜນການ ແລະ ການລົງທຶນ ຕິດຕາມ, ກວດກາການປະຕິບັດທຶນຊໍາລະໜີ້ສິນການລົງທຶນຂອງລັດແລ້ວສັງລວມລາຍງານຕໍ່ຄະນະກໍາມະການແກ້ໄຂໜີ້ສິນພາຍໃນຂອງລັດຖະບານຢ່າງເປັນປະຈໍາ.

10.4 ມອບໃຫ້ກະຊວງແຜນການ ແລະ ການລົງທຶນ ສົມທົບກັບພາກສ່ວນກ່ຽວຂ້ອງ ລົງຕິດຕາມ, ກວດກາໜີ້ສິນການລົງທຶນຂອງລັດ ຂອງບັນດາຂະແໜງການ ແລະ ທ້ອງຖິ່ນ ເພື່ອລາຍງານລັດຖະບານ; ຄົ້ນຄວ້າອອກມາດຕະການທີ່ຈໍາເປັນເພື່ອຈໍາກັດບໍ່ໃຫ້ໜີ້ສິນໃໝ່ເພີ່ມຂຶ້ນ.

## ໝວດທີ III

## ແຜນວຽກ ແລະ ຄວາມຮັບຜິດຊອບຂອງກະຊວງ-ອົງການທຽບເທົ່າ ແລະ ອົງການປົກຄອງທ້ອງຖິ່ນ

**ມາດຕາ 11: ມອບໃຫ້ ກະຊວງແຜນການ ແລະ ການລົງທຶນ ປະຕິບັດດັ່ງນີ້:**

11.1 ເຜີຍແຜ່ແຜນພັດທະນາເສດຖະກິດ-ສັງຄົມ ສົກປີ 2011-2012 ໃຫ້ພາກລັດ ແລະ ພາກເອກະຊົນລວມທັງປະຊາຊົນ ໃຫ້ເຂົ້າໃຈເຖິງທິດທາງ, ໜ້າທີ່, ຄາດໝາຍ ແລະ ວຽກງານຈຸດສຸມຂອງການພັດທະນາ ພ້ອມທັງຜັນຂະຫຍາຍເຂົ້າສູ່ວຽກງານຕົວຈິງຂອງຕົນ; ເປັນໃຈກາງປະສານສົມທົບກັບບັນດາກະຊວງ-ອົງການ ແລະ ທ້ອງຖິ່ນຄຸ້ມຄອງ, ຕິດຕາມ ແລະ ຊຸກຍູ້ການຈັດຕັ້ງປະຕິບັດແຜນພັດທະນາເສດ

ຖະກິດ-ສັງຄົມ ແລະ ແຜນການລົງທຶນຂອງລັດ ສົກປີ 2011-2012 ໃຫ້ບັນລຸຕາມຄາດໝາຍ ແລະ ເປັນໄປຕາມດຳລັດ 135/ນຍ ວ່າດ້ວຍການສ້າງ ແລະ ຄຸ້ມຄອງແຜນພັດທະນາເສດຖະກິດ-ສັງຄົມ ແລະ ກົດໝາຍວ່າດ້ວຍການລົງທຶນຂອງລັດ.

11.2 ສ້າງລະບອບ, ລະບົບ ແລະ ກົນໄກການປະເມີນໂຄງການລົງທຶນຂອງລັດ; ໃນນີ້, ໃຫ້ເອົາໃຈໃສ່ປະຕິບັດການປະເມີນໂຄງການກ່ອນພິຈາລະນາເອົາເຂົ້າແຜນການລົງທຶນ ປະຈຳສົກປີ, ຕິດຕາມກວດກາປະເມີນຜົນໄລຍະການຈັດຕັ້ງປະຕິບັດໂຄງການ ແລະ ພາຍຫຼັງໂຄງການສຳເລັດ.

11.3 ສົມທົບກັບພາກສ່ວນກ່ຽວຂ້ອງ ລົງຕິດຕາມ, ກວດກາໜີ້ສິນການລົງທຶນຂອງລັດ ຂອງບັນດາກະຊວງ-ອົງການ, ນະຄອນຫຼວງ ແລະ ແຂວງ ເພື່ອລາຍງານລັດຖະບານ.

11.4 ກະຊວງແຜນການ ແລະ ການລົງທຶນ ສົມທົບກັບຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ທີ່ໄດ້ຮັບຜົນເສຍຫາຍຈາກພາຍຸໄຮມາ, ນົກເຕັນ ແລະ ພາຍຸອື່ນໆ ເພື່ອປະເມີນຄວາມເສຍຫາຍ ແລະ ຜົນກະທົບທີ່ເກີດຂຶ້ນ, ພ້ອມທັງກຳນົດມາດຕະການ ເພື່ອປົວແປງ-ຟື້ນຟູຜົນເສຍຫາຍດັ່ງກ່າວ ໃຫ້ສາມາດກັບຄືນສູ່ສະພາບປົກກະຕິໂດຍໄວ ແລ້ວສະເໜີໃຫ້ລັດຖະບານພິຈາລະນາ; ພ້ອມດຽວກັນນັ້ນ, ກໍ່ໃຫ້ລະດົມການຊ່ວຍເຫຼືອທັງພາຍໃນ ແລະ ພາຍນອກ ເຂົ້າໃສ່ການຟື້ນຟູດັ່ງກ່າວບົນຈິດໃຈຄວາມສາມັກຄີຮັກແພງທົ່ວປວງຊົນລາວທັງຊາດ ແລະ ສາມັກຄີຮັກແພງກັບປະເທດເພື່ອນມິດສາກົນ. ການປະເມີນຜົນເສຍຫາຍດັ່ງກ່າວ ຕ້ອງນຳໃຊ້ຫຼັກວິຊາການທີ່ເອກະພາບ ປະຕິບັດດ້ວຍຄວາມຮັບຜິດຊອບສູງ, ມີຄວາມລະອຽດຊັດເຈນ, ໂປ່ງໃສ ຫຼີກລ່ຽງການສວຍໂອກາດເພື່ອໃຫ້ໄດ້ຜົນປະໂຫຍດຂອງຝ່າຍໃດໜຶ່ງ; ການຟື້ນຟູ-ປົວແປງຜົນເສຍຫາຍດັ່ງກ່າວ ໃຫ້ແຍກເປັນ 2 ໝວດຄື: (1). ໂຄງການຟື້ນຟູ ໃຫ້ປະເມີນຄວາມເສຍຫາຍ ແລ້ວສັງລວມລາຍງານຕໍ່ລັດຖະບານ, ເມື່ອໄດ້ຮັບການອະນຸມັດຈຶ່ງສາມາດລົງມືປະຕິບັດໄດ້, (2). ໂຄງການແກ້ໄຂສະພາບສຸກເສີນ ດ້ານພື້ນຖານໂຄງລ່າງ ທີ່ບໍ່ແຕະຕ້ອງເຖິງສຸຂະພາບ ແລະ ຄວາມປອດໄພຂອງປະຊາຊົນໃນທັນທີ ໃຫ້ກວດກາແລ້ວລາຍງານດ່ວນຕໍ່ລັດຖະບານທັນທີ (ອາດເປັນແຕ່ລະໂຄງການກໍ່ໄດ້) ເພື່ອໃຫ້ລັດຖະບານພິຈາລະນາໂດຍດ່ວນ, ເມື່ອໄດ້ຮັບອະນຸມັດຈຶ່ງລົງມືປະຕິບັດ; ໃນກໍລະນີນີ້ ອາດຍົກເວັ້ນການປະມູນ ແຕ່ຕ້ອງນຳໃຊ້ຫົວໜ່ວຍລາຄາມາດຕະຖານຂອງຂະແໜງການກ່ຽວຂ້ອງ ແລະ ມີການກວດກາຄວາມຖືກຕ້ອງຢ່າງເຄັ່ງຄັດ.

11.5 ສົມທົບກັບຂະແໜງການທີ່ກ່ຽວຂ້ອງ ແລະ ພາກສ່ວນຕ່າງໆ ຕິດຕາມສະພາບເສດຖະກິດຂອງປະເທດ ແລະ ສາກົນ ໂດຍສະເພາະແມ່ນສະພາບເສດຖະກິດຂອງໂລກ, ສະພາບໜີ້ສິນຂອງບັນດາປະເທດໃນສະຫະພາບເອີຣົບ (EU) ແລະ ສະຫະລັດອາເມລິກາ, ສະພາບການແຂງຄ່າ-ອ່ອນຄ່າຂອງເງິນຕາຕ່າງປະເທດ ແລະ ເງິນກີບພ້ອມ ທັງຄົ້ນຄວ້າວິທີແກ້ໄຂບັນຫາທີ່ເກີດຂຶ້ນ ເພື່ອລາຍງານ ແລະ ສະເໜີຕໍ່ລັດຖະບານອອກມາດຕະການແກ້ໄຂຢ່າງທັນການ.

11.6 ເປັນເຈົ້າການກະກຽມຈັດກອງປະຊຸມໂຕະມົນ ປະຈຳປີ 2011 ເພື່ອແຈ້ງຜົນການຈັດຕັ້ງປະຕິບັດແຜນງານ, ໂຄງການຊ່ວຍເຫຼືອທາງການເພື່ອການພັດທະນາ; ພ້ອມດຽວກັນນັ້ນ, ກໍຕ້ອງຂຶ້ນແຜນຄວາມຕ້ອງການທຶນສົມທົບພາຍໃນຕໍ່ແຜນງານ, ໂຄງການຊ່ວຍເຫຼືອດັ່ງກ່າວໃຫ້ແທດເໝາະສົມເຫດສົມຜົນ; ສົມທົບກັບກະຊວງການເງິນ ແລະ ບັນດາຂະແໜງການທີ່ກ່ຽວຂ້ອງ ຄົ້ນຄວ້າກົນໄກການຄຸ້ມຄອງທຶນຊ່ວຍເຫລືອ ແລະ ກູ້ຢືມ ຈາກຕ່າງປະເທດ ໃຫ້ລວມສູນສະດວກແກ່ການຕິດຕາມ, ກວດກາ, ລາຍງານ ແລະ ຮັບປະກັນໃຫ້ການນຳໃຊ້ທຶນດັ່ງກ່າວໄປເຖິງປະຊາຊົນ, ມີປະສິດທິຜົນ, ໂປ່ງໃສ ແລະ ມີການປະສານງານທີ່ດີ.

11.7 ຕັ້ງໜ້າສ້າງບັນຍາກາດ ເອື້ອອຳນວຍໃຫ້ແກ່ການລົງທຶນຂອງພາກເອກະຊົນພາຍໃນ ແລະ ຕ່າງປະເທດ; ປະຕິບັດໂຄງການປັບປຸງກົນໄກການບໍລິການການລົງທຶນປະຕູດຽວໃຫ້ມີຄວາມເປັນເອກະພາບ, ວ່ອງໄວ, ໂປ່ງໃສ ແລະ ມີປະສິດທິຜົນ; ຮີບຮ້ອນຄົ້ນຄວ້າສ້າງບັນຊີຮຽກການລົງທຶນ, ສືບຕໍ່ໂຄສະນາດຶງດູດການລົງທຶນຂອງເອກະຊົນພາຍໃນ ແລະ ຕ່າງປະເທດ ໃຫ້ກວ້າງຂວາງ ແລະ ທົ່ວເຖິງ ເພື່ອສາມາດລະດົມແຫຼ່ງທຶນດັ່ງກ່າວໃຫ້ໄດ້ຕາມຄາດໝາຍຂອງແຜນການວາງໄວ້.

11.8 ດຳເນີນການສຳຫລວດສະພາບເສດຖະກິດທົ່ວປະເທດ, ສຳຫຼວດການຊົມໃຊ້ ແລະ ໃຊ້ຈ່າຍຂອງຄົວເຮືອນ ຄັ້ງທີ V (LECS5), ສ້າງສຳເລັດດຳລັດຈັດຕັ້ງປະຕິບັດກົດໝາຍສະຖິຕິ, ດຳເນີນການເຜີຍແຜ່ກົດໝາຍສະຖິຕິ ໃຫ້ກວ້າງຂວາງ ແລະ ທົ່ວເຖິງ. ປັບປຸງສາຍຕັ້ງສະຖິຕິ (ແຂວງ, ເມືອງ ແລະ ບ້ານ) ໃຫ້ສຳເລັດ ແລະ ເຄື່ອນໄຫວມີປະສິດທິຜົນ.

11.9 ສືບຕໍ່ປະສານສົມທົບກັບຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ຊຸກຍູ້, ເຜີຍແຜ່ ແລະ ຊອກຫາແຫຼ່ງທຶນເພື່ອຈັດຕັ້ງປະຕິບັດແຜນແມ່ບົດພັດທະນາອຸດສະຫະກຳພາກເໜືອ ແລະ ສືບຕໍ່ຈັດຕັ້ງປະຕິບັດແຜນແມ່ບົດຮ່ວມມືເຂດສາມຫລ່ຽມພັດທະນາ (CLV).

**ມາດຕາ 12: ມອບໃຫ້ ກະຊວງການເງິນ ປະຕິບັດດັ່ງນີ້ :**

12.1 ເອົາໃຈໃສ່ ສຶກສາອົບຮົມແນວຄິດການເມືອງ ໃຫ້ແກ່ພະນັກງານລັດຖະກອນຂະແໜງການເງິນ, ສ້າງ ແລະ ປະຕິບັດລະບອບ, ລະບຽບ, ມາດຕະການຕິດຕາມກວດກາຢ່າງເຂັ້ມງວດ, ອັດທຸກຊ່ອງຫວ່າງຂອງການຮົ່ວໄຫຼຂອງງົບປະມານ, ແກ້ໄຂບັນດາປະກົດການຫຍໍ້ທໍ້ຕ່າງໆເປັນຕົ້ນ ພະຍາດອາດຍາສິດ, ສວຍໃຊ້ໜ້າທີ່ຕຳແໜ່ງ ເພື່ອຫາຜົນປະໂຫຍດແກ່ຕົນເອງ, ສ້າງຄວາມບໍ່ສະດວກໃນການບໍລິການປະຊາຊົນ ແລະ ຜູ້ປະກອບການ ເຊິ່ງກະທົບເຖິງຄວາມເຊື່ອໝັ້ນຂອງປະຊາຊົນ ຕໍ່ການບໍລິຫານລັດ ທາງດ້ານການເງິນ ແລະ ກິດຈະການພັດທະນາ.

12.2 ເອົາໃຈໃສ່ການແບ່ງປັນຮ່ວງລາຍຈ່າຍບໍລິຫານ, ຊື້ໃໝ່ ແລະ ດັດສົມສິ່ງເສີມໃຫ້ໄປຕາມຄວາມຕ້ອງການທີ່ຈຳເປັນຕົວຈິງຂອງຂະແໜງການ ແລະ ທ້ອງຖິ່ນ ແຕ່ຕ້ອງເອົາໃຈໃສ່ເປັນພິເສດໃນການຈັດແບ່ງໃຫ້ແກ່ຫົວໜ່ວຍງົບປະມານພື້ນຖານຂັ້ນເມືອງໃຫ້ມີຈຳນວນເພີ່ມຂຶ້ນໃນແຕ່ລະປີ ແລະ ໃຫ້ສາມາດເຄື່ອນໄຫວວຽກງານວິຊາສະເພາະໄດ້ສະດວກຂຶ້ນ; ຮັບປະ ກັນການແບ່ງງົບປະມານໃຫ້ຫົວໜ່ວຍງົບປະມານທີ່ສ້າງຕັ້ງຂຶ້ນໃໝ່ ໃຫ້ສາມາດເຄື່ອນໄຫວວຽກງານໄດ້ຢ່າງເປັນປົກກະຕິແຕ່ຫົວທີ.

12.3 ຮັບປະກັນການແບ່ງປັນງົບປະມານຂອງລັດ ໃຫ້ຂົງເຂດສຶກສາ 17%, ສາທາລະນະສຸກ 9% ຮັບປະກັນໃຫ້ມີແຫຼ່ງທຶນພັດທະນາລະບົບປະກັນສັງຄົມ ແລະ ປະກັນສຸກຂະພາບໃຫ້ຄ່ອງຕົວດີຂຶ້ນກ່ວາເກົ່າ ແລະ ສາມາດຂະຫຍາຍໃຫ້ກວ້າງຂວາງລົງສູ່ຮາກຖານ, ປະຕິບັດນະໂຍບາຍຕໍ່ຜູ້ທີ່ມີຜົນງານຄວາມດີ ຕໍ່ປະເທດຊາດ ໃຫ້ໄດ້ຕາມແຜນການ.

12.4 ສຳລັບລາຍຈ່າຍເງິນເດືອນ ພາກ 10 ໃຫ້ຄິດໄລ່ບົນພື້ນຖານຂໍ້ມູນຈຳນວນພົນງວດ IV ຂອງສົກປີ 2010-2011 ແລະ ຄິດໄລ່ຕາມການເລື່ອນຊັ້ນ, ຂັ້ນ.

- ສຳລັບການເພີ່ມດັດສະນີເງິນເດືອນ ແມ່ນຈະໄດ້ເພີ່ມຂຶ້ນຈາກດັດສະນີ 3.000 ກີບ ມາເປັນ 3.500 ກີບຕໍ່ໜຶ່ງດັດສະນີ, ສ່ວນການຈັດຕັ້ງປະຕິບັດ ແມ່ນໃຫ້ເລີ່ມຈັດຕັ້ງປະຕິບັດໃນງວດ I ສົກປີ 2011- 2012.

12.5 ສຳລັບເງິນອຸດໜູນພະນັກງານທີ່ຢູ່ເຂດຫ່າງໄກສອກຫຼີກ ໃຫ້ກະຊວງການເງິນຂຶ້ນແຜນລາຍຈ່າຍລວມສູນບ່ອນດຽວ ສ່ວນການຈັດຕັ້ງປະຕິບັດ ຈະແຈ້ງໃຫ້ພາກສ່ວນກ່ຽວຂ້ອງຊາບ ພາຍຫຼັງທີ່ບັນດາແຂວງມີຂໍ້ມູນລະອຽດແລ້ວ.

12.6 ສືບຕໍ່ປັບປຸງບັນດານິຕິກຳ, ທີ່ຕິດພັນກັບການຄຸ້ມຄອງການເງິນເພື່ອໃຫ້ສອດຄ່ອງ ກັບສະພາບຕົວຈິງໃນແຕ່ລະໄລຍະ, ເປັນຕົ້ນສືບຕໍ່ປັບປຸງກົດໝາຍສ່ວຍສາອາກອນໃຫ້ສຳເລັດໂດຍໄວ, ຄົ້ນຄ້ວາບັນດາດຳລັດວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍຊັບສິນຂອງລັດ, ດຳລັດວ່າດ້ວຍການຫັນຊັບສິນຂອງລັດເປັນທຶນຂອງລັດ, ດຳລັດວ່າດ້ວຍການຄຸ້ມຄອງກອງທຶນຂອງລັດ, ສ້າງບົດແນະນຳກ່ຽວກັບການຄຸ້ມຄອງກວດກາຊັບພະຍາກອນທຳມະຊາດ, ສ້າງນິຕິກຳລຸ່ມກົດໝາຍກ່ຽວກັບການຄຸ້ມຄອງງົບປະມານແຫ່ງລັດ.

12.7 ຄຸ້ມຄອງຮ່ວງລາຍຮັບທີ່ລັດຖະບານໄດ້ກຳນົດລະບຽບການອອກ ໃຫ້ລວມສູນເຂົ້າງົບປະມານແຫ່ງລັດຕາມກົດໝາຍວ່າດ້ວຍງົບປະມານແຫ່ງລັດ ໃນນີ້ໃຫ້ສຸມໃສ່ບາງບັນຫາດັ່ງນີ້:

– ກຳນົດປະເພດລາຍຮັບທີ່ເປັນພູດຂອງສູນກາງ ແລະ ພູດຂອງທ້ອງຖິ່ນໃຫ້ລະອຽດ, ຊັດເຈນໂດຍອີງ ມາດຕາ 37 (ແຫຼ່ງລາຍຮັບທີ່ເປັນພູດຂອງສູນກາງ) ແລະ ມາດຕາ 38 (ແຫຼ່ງລາຍຮັບທີ່ເປັນພູດຂອງທ້ອງຖິ່ນ) ຂອງກົດໝາຍວ່າດ້ວຍງົບປະມານແຫ່ງລັດ.

– ຮີບຮ້ອນຄົ້ນຄວ້າກຳນົດມາດຕະການເພື່ອຂຸດຄົ້ນລາຍຮັບໃຫ້ສູງຂຶ້ນ, ສະກັດກັ້ນການຮົ່ວໄຫຼຂອງງົບປະມານ ດ້ວຍຮູບການ ແລະ ວິທີການທີ່ເໝາະສົມ.

– ເປັນເຈົ້າການໃນການປະສານສົມທົບກັບບັນດາຂະແໜງການ ແລະ ທ້ອງຖິ່ນຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ສົກປີ 2011-2012 ໃຫ້ໄດ້ຕາມຄາດໝາຍ, ໂດຍສຸມໃສ່ຂຸດຄົ້ນທຸກແຫຼ່ງລາຍຮັບ ແລະ ເກັບລາຍຮັບລວມສູນເຂົ້າງົບປະມານແຫ່ງລັດ ເພື່ອຮັບປະກັນການປະຕິບັດລາຍຈ່າຍງົບປະມານໄປຕາມແຜນລາຍຈ່າຍທີ່ສະພາແຫ່ງຊາດໄດ້ຮັບຮອງເອົາ.

– ຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການ ການເງິນຢ່າງເຂັ້ມງວດ, ເປັນເອກະພາບໃນຂອບເຂດທົ່ວປະເທດ, ຕ້ອງເດັດຂາດແກ້ໄຂປະກົດການຫຍໍ້ທໍ້ໃນຖັນແຖວພະນັກງານຂອງການຈັດຕັ້ງຂະແໜງການເງິນໃຫ້ໝົດໄປເທື່ອລະກ້າວ.

– ປັບປຸງຂອດບໍລິການຄຸ້ມຄອງການເກັບລາຍຮັບໃຫ້ກະທັດຮັດ, ວ່ອງໄວ, ຈະແຈ້ງ, ໂດຍການນຳໃຊ້ເຄື່ອງມືທັນສະໄໝ, ຫຼຸດຜ່ອນການເກັບລາຍຮັບເປັນເງິນສົດ, ປະຕິບັດການຊຳລະໂດຍບໍ່ໃຊ້ເງິນສົດເພີ່ມຂຶ້ນ ເພື່ອຮັບປະກັນຄວາມຖືກຕ້ອງຊັດເຈນ ແລະ ໂປ່ງໃສ, ບໍລິການໃຫ້ຜູ້ປະກອບການ ໃຫ້ມີຄວາມສະດວກວ່ອງໄວຂຶ້ນກວ່າເກົ່າ. ດຳເນີນການສະຫຼຸບຕີລາຄາ, ປະເມີນຜົນການຈັດຕັ້ງປະຕິບັດເກັບອາກອນມູ່ນຄ່າເພີ່ມເພື່ອຖອດຖອນບົດຮຽນ ແລະ ປັບປຸງແກ້ໄຂບັນຫາໃຫ້ທັນເວລາ, ຮີບຮ້ອນຄົ້ນຄວ້າປັບປຸງລະບົບການບັນຊີ, ມາດຖານການບັນຊີ ແລະ ລະບອບການນຳໃຊ້ໃບບິນອາກອນໃຫ້ມີຄວາມເຂັ້ມງວດ ແລະ ເປັນເຄື່ອງມືທີ່ສັກສິດໃນການຄຸ້ມຄອງ.

– ເພີ່ມທະວີການເກັບກູ້ ແລະ ແກ້ໄຂບັນຫາໜີ້ສິນຕ້ອງຮັບໃນລະບົບຄັງເງິນ, ໜີ້ໃຫ້ກູ້ແກ່ວິສະຫະກິດ ແລະ ຊັບສິນຈາກການຕັດສິນຄະດີຂອງສານ.

– ໃຫ້ສົມທົບກັບບັນດາຂະແໜງການທີ່ມີລາຍຮັບຄ່າທຳນຽມ ແລະ ລາຍຮັບວິຊາການ ເພື່ອພ້ອມກັນຄົ້ນຄວ້າກຳນົດກົນໄກ ວິທີການຄຸ້ມຄອງແຫຼ່ງລາຍຮັບ ແລະ ລາຍຈ່າຍບ້ວງເງິນດັ່ງກ່າວ ໃຫ້ລວມສູນຜ່ານງົບປະມານ ແລະ ໃຫ້ບັນຈຸຢູ່ໃນແຜນງົບປະມານທີ່ສະພາແຫ່ງຊາດຮັບຮອງເອົາ.

12.8 ໃຫ້ຄົ້ນຄວ້າສ້າງ ແລະ ປັບປຸງກົນໄກລະບຽບການຄຸ້ມຄອງ 3 ຂະແໜງສາຍຕັ້ງໃຫ້ມີຄວາມເໝາະສົມ ຮັດກຸມ ແລະ ສະດວກໃນການຄຸ້ມຄອງ, ບ່ອນໃດມີເງື່ອນໄຂເອື້ອອຳນວຍ ແມ່ນໃຫ້ສ້າງລະບົບຄຸ້ມຄອງລົງເຖິງຂັ້ນເມືອງ ເປັນຕົ້ນຢູ່ນະຄອນຫຼວງວຽງຈັນ ແລະ ບັນດາຕົວເມືອງໃຫຍ່ອື່ນໆ.

12.9 ປະສານສົມທົບກັບອຳນາດການປົກຄອງທ້ອງຖິ່ນ (ແຂວງ, ເມືອງ, ບ້ານ) ແບ່ງຄວາມຮັບຜິດຊອບເພື່ອຈັດເກັບອາກອນທີ່ດິນ ໂດຍໃຫ້ມີກົນໄກທີ່ຈະແຈ້ງ ແລະ ສ້າງຂໍ້ມູນສະຖິຕິ ເພື່ອເປັນພື້ນຖານໃຫ້ແກ່ການເກັບລາຍຮັບຈາກທີ່ດິນ.

12.10 ດ້ານລາຍຈ່າຍ: ຄຸ້ມຄອງການຈັດຕັ້ງປະຕິບັດລາຍຈ່າຍທີ່ສະພາແຫ່ງຊາດໄດ້ຮັບຮອງໃຫ້ຖືກຕ້ອງໂດຍໃຫ້ສຸມໃສ່ບາງວຽກດັ່ງນີ້:

– ການຈັດຕັ້ງປະຕິບັດລາຍຈ່າຍຕ້ອງໄປຕາມແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດທີ່ສະພາແຫ່ງຊາດໄດ້ຮັບຮອງເອົາແລ້ວນັ້ນ ເພື່ອຮັບປະກັນການກະຕຸ້ນເສດຖະກິດ ແລະ ການຜະລິດສິນຄ້າໃຫ້ມີທ່ວງທ່າດີຂຶ້ນ.

– ການປະຕິບັດລາຍຈ່າຍຕ້ອງປະຕິບັດຕາມລະບຽບການຂອງການເງິນ, ຕາມນະໂຍບາຍລາຍຈ່າຍແບບຮັດກຸມ, ປະຢັດມັດທະຍັດ ແລະ ເຂັ້ມງວດໃນການປະຕິບັດວິໄນການເງິນ.

– ເປັນເຈົ້າການໃນການຄຸ້ມຄອງ ແລະ ຊີ້ນຳການຈັດຕັ້ງປະຕິບັດລາຍຈ່າຍງົບປະມານຕົວຈິງທີ່ຂຶ້ນກັບຕົນຮັບຜິດຊອບ ໃຫ້ໄປຕາມແຜນບູລິມະສິດຂອງລັດຖະບານ ແລະ ໄປຕາມໂຄງປະກອບແຜນລາຍຈ່າຍທີ່ສະພາແຫ່ງຊາດຮັບຮອງ. ບໍ່ໃຫ້ຈ່າຍນອກແຜນ ຫຼື ເກີນແຜນໂດຍເດັດຂາດ.

12.11 ສຳລັບການນຳໃຊ້ເງິນເກີນແຜນ ບ້ວງຂອງແຂວງ ສົກປີ 2010-2011 ລັດຖະບານອະນຸຍາດໃຫ້ບັນດາແຂວງ ສ້າງແຜນລາຍຈ່າຍບ້ວງເງິນດັ່ງກ່າວບໍ່ໃຫ້ເກີນ 70% ຂອງລາຍຮັບເງິນເກີນແຜນທັງໝົດ ພາຍຫຼັງກວດກາ 00 ໂມງສຳເລັດ, ສ່ວນທີ່ເຫຼືອ 30% ແມ່ນຈະອະນຸຍາດໃຫ້ຈ່າຍພາຍຫຼັງກວດກາຂາດຕົວສຳເລັດກ່ອນຈະນຳໃຊ້. ເປົ້າໝາຍການຈ່າຍນັ້ນ ໃຫ້ນຳໃຊ້ເຂົ້າໃນວຽກງານການແກ້ໄຂໄພພິບັດ ທີ່ເກີດຂຶ້ນຈາກທຳມະຊາດ, ຊຳລະໜີ້ບັນດາໂຄງການລົງທຶນຂອງລັດພາຍໃນແຂວງຂອງຕົນ. ຂັ້ນຕອນການສະເໜີຂໍນຳໃຊ້ທຶນດັ່ງກ່າວນີ້ ໃຫ້ບັນດາແຂວງ ແລະ ນະຄອນຫຼວງວຽງຈັນນຳສະເໜີແຜນໃຊ້ຈ່າຍເຖິງກະຊວງການເງິນ, ພາຍຫຼັງກະຊວງການເງິນກວດກາຖືກຕ້ອງ ແລ້ວ ໃຫ້ສະເໜີທຶນທີ່ຈະນຳໃຊ້ເຂົ້າໃນການລົງທຶນຂອງລັດເຖິງກະຊວງແຜນການ ແລະ ການລົງທຶນ ເພື່ອຄົ້ນຄວ້າສັງລວມສະເໜີຂໍອະນຸມັດຈາກລັດຖະບານ, ສ່ວນກະຊວງການເງິນຈະຄົ້ນຄວ້າສັງລວມທຶນທີ່ຈະນຳໃຊ້ເຂົ້າໃນເປົ້າໝາຍອື່ນໆ ເພື່ອສະເໜີຂໍອະນຸມັດຈາກລັດຖະບານ; ລັດຖະບານຈະສະເໜີແຜນນຳໃຊ້ເງິນເກີນແຜນຕໍ່ສະພາແຫ່ງຊາດ ເພື່ອພິຈາລະນາອະນຸມັດຕາມລະບຽບການ.

12.12 ການແກ້ໄຂເຫດການສຸກເສີນ ທີ່ເກີດຈາກໄພພິບັດທຳມະຊາດ ເຊັ່ນ: ໄຟໄໝ້, ນ້ຳຖ້ວມ, ລົມພາຍຸ, ໂລກລະບາດ ແລະ ວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ໂດຍຫຼັກການແມ່ນນຳໃຊ້ເງິນແຮລັດຖະບານ, ເງິນແຮຂອງແຂວງ ແລະ ຄັງສະສົມແຫ່ງລັດ.

12.13 ໃນໄລຍະຕົ້ນປີທີ່ລາຍຮັບງົບປະມານບໍ່ທັນຮັບປະກັນໃຫ້ແກ່ການປະຕິບັດລາຍຈ່າຍໄດ້ນັ້ນ ໃຫ້ກະຊວງການເງິນມີສິດຢືມລ່ວງໜ້ານຳທະນາຄານແຫ່ງ ສປປ ລາວ ໃນວົງເງິນບໍ່ກາຍງົບປະມານງວດ I, ແຕ່ຕ້ອງມີກົນໄກສຳລະສະສາງຄືນໃຫ້ທະນາຄານ ພາຍໃນສົກງົບປະມານນັ້ນ ເພື່ອຮັບປະກັນໃຫ້ແກ່ການຮັກສາສະເຖຍລະພາບທາງດ້ານການເງິນແຫ່ງຊາດ ຕາມທີ່ເຄີຍປະຕິບັດຜ່ານມາ.

12.14 ໃຫ້ກະຊວງການເງິນສົມທົບກັບບັນດາຂະແໜງການທີ່ກ່ຽວຂ້ອງ ຄຸ້ມຄອງການນຳໃຊ້ແຫຼ່ງເງິນກູ້ຢືມ ແລະ ຊ່ວຍເຫຼືອລ້າຈາກຕ່າງປະເທດທີ່ບໍ່ມີເງື່ອນໄຂຜູກມັດ, ດອກເບ້ຍຕໍ່າ, ໄລຍະກູ້ຢືມຍາວ ເພື່ອປະຕິບັດໂຄງການພັດທະນາທີ່ເປັນບູລິມະສິດຂອງລັດຖະບານ ຢ່າງມີປະສິດທິຜົນ.

**ມາດຕາ 13: ມອບໃຫ້ ທະນາຄານແຫ່ງ ສປປ ລາວ ປະຕິບັດ ດັ່ງນີ້ :**

13.1 ສືບຕໍ່ຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ໝັ້ນທ່ຽງ ດ້ວຍການປັບປຸງ ແລະ ພັດທະນາບັນດາເຄື່ອງມືນະໂຍບາຍເງິນຕາ ໃຫ້ມີຄວາມຫຼາກຫຼາຍ, ພ້ອມທັງສ້າງກົນໄກຈັດຕັ້ງປະຕິບັດໃຫ້ສອດຄ່ອງກັບສະພາບແຕ່ລະໄລຍະ, ຄວບຄຸມປະລິມານເງິນລວມ (M2) ໃຫ້ຢູ່ໃນລະດັບທີ່ບໍ່ກະທົບຕໍ່ການເພີ່ມຂຶ້ນຂອງເງິນເຟີ້; ສະກັດກັ້ນ ແລະ ເຝົ້າລະວັງສະພາບອັດຕາເງິນເຟີ້ທີ່ມີທ່າອ່ຽງສູງຂຶ້ນ, ປະຕິບັດນະໂຍບາຍອັດຕາແລກປ່ຽນຕາມກົນໄກຕະຫລາດ ທີ່ມີການຄຸ້ມຄອງຂອງລັດ ເພີ່ມຄວາມສາມາດແຂ່ງຂັນ ແລະ ການເຊື່ອມໂຍງກັບສາກົນໃຫ້ສູງຂຶ້ນ, ປັບປຸງການບໍລິການໃຫ້ທັນສະໄໝ ແລະ ຂະຫຍາຍຕາໜ່າງການບໍລິການທະນາຄານໃຫ້ກວ້າງອອກຕື່ມ ສ້າງເງື່ອນໄຂສະດວກໃຫ້ປະຊາຊົນ ແລະ ຜູ້ປະກອບການເຂົ້າເຖິງການບໍລິການໄດ້ຢ່າງທົ່ວເຖິງ; ເພີ່ມທະວີການຄຸ້ມຄອງ ແລະ ກວດກາທະນາຄານທຸລະກິດ ແລະ ສະຖາບັນການເງິນ ໃຫ້ມີຄວາມໝັ້ນຄົງ ແລະ ປອດໄພ ເຄື່ອນໄຫວຖືກຕ້ອງຕາມລະ ບຽບກົດໝາຍ.

13.2 ເພີ່ມການຊີ້ນຳບັນດາທະນາຄານ ເປັນຕົ້ນ ທະນາຄານທຸລະກິດຂອງລັດ ໃນການລະດົມເງິນຝາກໃຫ້ໄດ້ຕາມຄາດໝາຍ ແລະ ປ່ອຍສິນເຊື່ອໃຫ້ໄດ້ ປະມານ 3.000 ຕື້ກີບ; ເພື່ອຊຸກຍູ້ການຜະລິດເຂົ້າ, ສະບຽງອາຫານ ແລະ ຜະລິດສິນຄ້າອື່ນໆ ເພື່ອຕອບສະໜອງຄວາມຕ້ອງການຂອງຕະຫລາດໃຫ້ໄດ້ຢ່າງພຽງພໍ, ໃນນີ້ ໃຫ້ເອົາໃຈໃສ່ເປັນພິເສດຕໍ່ການຕິດຕາມກວດກາການປ່ອຍສິນເຊື່ອໃຫ້ຖືກຕາມເປົ້າໝາຍ ແລະ ການນຳໃຊ້ສິນເຊື່ອໃຫ້ເກີດດອກອອກຜົນ. ການປ່ອຍສິນເຊື່ອຕ້ອງໄປຕາມກຸ່ມເປົ້າໝາຍ ແລະ ບັນດາໂຄງການຜະລິດເປັນສິນຄ້າແບບຍືນຍົງ ແລະ ສົ່ງເສີມທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ.

13.3 ສົ່ງເສີມການນຳໃຊ້ເງິນກີບ ໃຫ້ກວ້າງຂວາງກວ່າເກົ່າ, ປັບປຸງລະບົບທະນະຄານທຸລະກິດຂອງລັດ ແລະ ຫຸ້ນສ່ວນໃຫ້ມີຄວາມເຂັ້ມແຂງ ດ້ວຍການເພີ່ມທຶນໃຫ້ພຽງພໍ ແລະ ປັບປຸງການດຳເນີນງານ ໃຫ້ມີຄວາມສາມາດແຂ່ງຂັນສູງ ແລະ ມີຄວາມທັນສະໄໝຍິ່ງຂຶ້ນ; ສົ່ງເສີມການຊຳລະຜ່ານລະບົບທະນາຄານ, ເປີດກວ້າງການບໍລິການເບີກຈ່າຍເງິນເດືອນຂອງອົງການບໍລິຫານ ແລະ ວິສາຫະກິດຜ່ານບັນຊີຢູ່ທະນາຄານ; ຄຸ້ມຄອງກວດກາການເຄື່ອນໄຫວຂອງທະນາຄານທຸລະກິດ ແລະ ສະຖາບັນການເງິນຢ່າງຮັດກຸມຕາມລະບຽບກົດໝາຍ.

13.4 ຊຸກຍູ້ໃຫ້ຕະຫລາດຫລັກຊັບລາວ ມີການເຄື່ອນໄຫວຢ່າງຕັ້ງໜ້າ ແລະ ມີປະສິດທິຜົນສູງ, ຄົ້ນຄວ້າຄວາມສາມາດຂະຫຍາຍອອກຕື່ມ ເພື່ອລະດົມແຫຼ່ງທຶນຈາກທຸກພາກສ່ວນເສດຖະກິດເຂົ້າໃນການພັດທະນາ ເສດຖະກິດ-ສັງຄົມ.

**ມາດຕາ 14: ມອບໃຫ້ ກະຊວງກະສິກຳ-ປ່າໄມ້ ປະຕິບັດດັ່ງນີ້:**

14.1 ສຸມທຸກກຳລັງ ແລະ ປະຕິບັດມາດຕະການສົ່ງເສີມທີ່ຕັ້ງໜ້າ ເພື່ອເຮັດໃຫ້ການຜະລິດເຂົ້າ ແລະ ພືດເປັນສິນຄ້າໃຫ້ໄດ້ຕາມແຜນ, ຮັບປະກັນການຜະລິດທັງລະດູຝົນ ແລະ ລະດູແລ້ງ ເອົາໃຈໃສ່ການປູກ

ພືດສະບຽງ ແລະ ພືດເປັນສິນຄ້າ ໃຫ້ໄດ້ຮັບຜົນດີ; ປັບປຸງ ແລະ ສ້າງຕັ້ງກຸ່ມການຜະລິດໃຫ້ເຂັ້ມແຂງຂຶ້ນຕື່ມ.

14.2 ເອົາໃຈໃສ່ກະກຽມໃຫ້ແກ່ການຜະລິດລະດູແລ້ງຈະມາເຖິງນີ້: ບັນດາສູນ, ສະຖານີ ທີ່ເປັນຕາໜ່າງຂອງສະຖາບັນຄົ້ນຄວ້າກະສິກຳ ແລະ ປ່າໄມ້ແຫ່ງຊາດ ແລະ ກອງສົ່ງເສີມກະສິກຳ ແລະ ປ່າໄມ້ຢູ່ທ້ອງຖິ່ນຕ່າງໆ ກະກຽມແນວພັນເຂົ້າ, ພືດ, ສັດ ຢາປ້ອງກັນສັດຕູພືດ, ຢາປົ່ນປົວສັດ ແລະ ຢາປາບສັດຕູພືດໃຫ້ພຽງພໍ ຄຽງຄູ່ກັບການກວດກາຄືນລະບົບຊົນລະປະທານເປັນຕົ້ນ: ປະຕູນ້ຳ, ຝາຍນ້ຳລົ້ນ, ອ່າງເກັບນ້ຳ ແລະ ຄອງເໝືອງ ໃຫ້ມີຄວາມພ້ອມເພື່ອການຜະລິດລະດູແລ້ງ. ເອົາໃຈໃສ່ ແນະນຳ ແລະ ສົ່ງເສີມບ່ອນທີ່ມີເງື່ອນໄຂ ປັກດຳກ້າກັບດຽວ ໃຫ້ສາມາດຂະຫຍາຍເນື້ອທີ່ການຜະລິດ. ອອກລະບຽບການ ແລະ ແຈ້ງການຕ່າງໆ ເພື່ອຊຸກຍູ້ການຜະລິດໃຫ້ທ່ວງທັນກັບລະດູການ.

14.3 ອຳນວຍຄວາມສະດວກໃນການສະໜອງແນວພັນ, ຝຸ່ນປຸ໋ຍ, ການບໍລິການດ້ານເຕັກນິກ, ປັບປຸງ-ຟື້ນຟູລະບົບຊົນລະປະທານ; ປະກອບສ່ວນ ແລະ ເຂົ້າຮ່ວມເພື່ອຕ້ານແລ້ງ-ຕ້ານຖ້ວມ ແລະ ຜົນກະທົບຈາກໄພທຳມະຊາດ ໂດຍເອົາໃຈໃສ່ຕໍ່ເຂດທີ່ມີຄວາມສ່ຽງເພື່ອແກ້ໄຂໃຫ້ທັນການ ແລະ ມີປະສິດທິພາບ. ຮີບຮ້ອນປະຕິບັດໂຄງການຈຸດສຸມຂອງລັດຖະບານກ່ຽວກັບການຈັດສັນ ແລະ ພັດທະນາທີ່ດິນກະສິກຳ, ເຮັດກະເສດສຸມຄົບຊຸດ ແລະ ຮອບດ້ານເພື່ອຍົກຜະລິດຕະພາບ.

14.4 ສົມທົບກັບຂະແໜງພະລັງງານ-ບໍ່ແຮ່ ເພື່ອສືບຕໍ່ປະຕິບັດນະໂຍບາຍຫລຸດຜ່ອນຄ່າກະແສໄຟຟ້າ, ຂະຫຍາຍເນື້ອທີ່ທົດນ້ຳຢູ່ກ້ອງເຂື່ອນຕາມເປົ້າໝາຍ ແລະ ສ້າງແຜນຈັດສັນເຂດອ່າງຮັບນ້ຳ.

14.5 ຊຸກຍູ້ການຜະລິດກະສິກຳ ໃຫ້ຕິດພັນກັບອຸດສາຫະກຳປຸງແຕ່ງ ໂດຍສຸມໃສ່ການຂະຫຍາຍກຳລັງການຜະລິດ ແລະ ປັບປຸງການພົວພັນການຜະລິດໃຫ້ດີຂຶ້ນ. ສຸມທຶນຮອນເຂົ້າໃສ່ວຽກງານສົ່ງເສີມດ້ານວິຊາການ ເປັນຕົ້ນການຄົ້ນຄວ້າ-ທົດລອງ ແນວພັນພືດ ແລະ ແນວພັນສັດ, ການປ້ອງກັນພະຍາດພືດ-ສັດ ພ້ອມທັງຜັນຂະຫຍາຍຜົນສຳເລັດດັ່ງກ່າວເຂົ້າສູ່ຂະບວນການຜະລິດຕົວຈິງ.

14.6 ຂຶ້ນກຳລັງວິຊາການ, ຂະແໜງການສາຍຕັ້ງຂອງຕົນຢູ່ທ້ອງຖິ່ນ ໃຫ້ການບໍລິການ ແລະ ຊ່ວຍເຫລືອ ແນະນຳແນວພັນ, ເຕັກນິກວິຊາການດ້ານປູກຝັງ ແລະ ລ້ຽງສັດ, ປ້ອງກັນສັດຕູພືດ, ພະຍາດສັດ; ສົ່ງເສີມການນຳໃຊ້ກົນຈັກກະສິກຳ ເພື່ອແນໃສ່ຍົກສູງສະມັດຕະພາບການຜະລິດ. ປັບປຸງສູນບໍລິການເຕັກນິກກະສິກຳ-ປ່າໄມ້ ທີ່ມີແລ້ວ 268 ແຫ່ງ ໃຫ້ສາມາດຖ່າຍທອດເຕັກນິກ ແລະ ເຮັດໜ້າທີ່ບໍລິການໃຫ້ແກ່ຊາວກະສິກອນ. ຈັດຕັ້ງປະຕິບັດໂຄງການຊົນລະກະເສດ ເຊັ່ນ: ຊົນລະກະເສດນ້ຳເທີນ 2 ທົ່ງພຽງເຊບັ້ງໄຟ ແລະ ເຊບັ້ງຫຽງ, ຊົນລະກະເສດນ້ຳມັງ-ຕາມປ່ຽວຝັ່ງຊ້າຍນ້ຳງື່ມ ແຂວງວຽງຈັນ ແລະ ແຫ່ງອື່ນໆ. ສຳຫລວດອອກແບບໂຄງການໃໝ່ຈຳນວນໜຶ່ງທີ່ມີທິດທັນເປັນຊົນລະກະເສດໃນບ່ອນມີເງື່ອນໄຂ.

14.7 ປັບປຸງບັນດານິຕິກຳທີ່ເຫັນວ່າບໍ່ສອດຄ່ອງກັບຕົວຈິງ ແລະ ສ້າງນິຕິກຳໃໝເພື່ອທີ່ຊຸກຍູ້ ແລະ ສະໜັບສະ ໜູນໃນການພັດທະນາປ່າໄມ້.

14.8 ປະຕິບັດບັນດາທິດທາງ, ໜ້າທີ່ ແລະ ວຽກງານຈຸດສຸມດ້ານກະສິກຳ-ປ່າໄມ້ ເພື່ອບັນລຸຕາມຄາດໝາຍທີ່ກຳນົດໃນແຜນການສົກປີ 2011-2012.

**ມາດຕາ 15: ມອບໃຫ້ ກະຊວງອຸດສາຫະກຳ ແລະ ການຄ້າ ປະຕິບັດດັ່ງນີ້ :**

15.1 ເພີ່ມທະວີ ແລະ ສົ່ງເສີມການສົ່ງອອກຢ່າງແຂງແຮງ ດ້ວຍການປັບປຸງການບໍລິການ ໃຫ້ກະທັດຮັດ, ປັບປຸງບັນດານິຕິກຳທີ່ພົວພັນກັບການນຳເຂົ້າ ແລະ ສົ່ງອອກ ລວມທັງຂໍ້ກຳນົດຕ່າງໆ ກ່ຽວກັບການ

ຄ້າຊາຍແດນ, ຜ່ານແດນ ແລະ ຂາອອກຕໍ່ໃຫ້ຄ່ອງຕົວ; ສືບຕໍ່ສົມທົບກັບຂະແໜງການ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງ ຄົ້ນຄວ້ານະໂຍບາຍ, ກົດໝາຍ, ລະບຽບການຕ່າງໆ ເພື່ອພັດທະນາ ແລະ ຄຸ້ມຄອງເຂດນິຄົມອຸດສາຫະກຳ; ປັບປຸງກວດກາການເຄື່ອນຍ້າຍຜະລິດຕະພັນກະສິກຳ-ປ່າໄມ້ ເຂົ້າ-ອອກຕາມຈຸດດ່ານສາກົນຕ່າງໆ.

15.2 ຄົ້ນຄວ້າອອກນະໂຍບາຍ ເພື່ອສົ່ງເສີມການຜະລິດ ເພື່ອສົ່ງອອກສິນຄ້າ, ສຸມໃສ່ການຂະຫຍາຍຕະຫຼາດການສົ່ງອອກໃຫ້ກວ້າງອອກສູ່ສາກົນ, ເປີດຕະຫລາດໃໝ່ອອກສູ່ບັນດາປະເທດທີ່ມີທ່າແຮງ ແລະ ຄົ້ນຄວ້າ ສິນຄ້າໃໝ່ທີ່ມີທ່າແຮງບົ່ມຊ້ອນຂອງຊາດ; ສືບຕໍ່ກະກຽມບັນດານິຕິກຳ ແລະ ເອກະສານຕ່າງໆ ເພື່ອຊຸກຍູ້ການເຂົ້າເປັນສະມາຊິກອົງການການຄ້າໂລກ; ກະກຽມເຂົ້າຮ່ວມງານວາງສະແດງສິນຄ້າ ຢູ່ຕ່າງປະເທດ.

15.3 ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ແຜນແມ່ບົດພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ ເພື່ອຊຸກຍູ້ການຜະລິດໃຫ້ກວ້າງຂວາງຂຶ້ນກວ່າເກົ່າ ໂດຍສົ່ງເສີມໃຫ້ທຸກພາກສ່ວນເສດຖະກິດເຂົ້າ ຮ່ວມຢ່າງຕັ້ງໜ້າ.

15.4 ປະສານສົມທົບກັບ ສະພາອຸດສາຫະກຳ-ການຄ້າ ແລະ ທະນາຄານຄົ້ນຄວ້າສ້າງໂຄງການເພື່ອປ່ອຍສິນເຊື່ອຕາມກຸ່ມເປົ້າໝາຍ ແລະ ບັນດາໂຄງການຜະລິດເປັນສິນຄ້າແບບຍືນຍົງ.

15.5 ປະຕິບັດບົດບາດຄຸ້ມຄອງ-ດັດສົມຕະຫຼາດ, ຕິດຕາມ ແລະ ຄຸ້ມຄອງຢ່າງໃກ້ສິດສະພາບການເໜັງຕີງຂອງລາຄາສິນຄ້າ, ສະພາບການສະໜອງ ແລະ ຄວາມຕ້ອງການສິນຄ້າ ໂດຍສະເພາະແມ່ນສິນຄ້າຍຸດທະສາດ, ສິນຄ້າສະບຽງອາຫານ, ມີມາດຕະການຄຸ້ມຄອງສິນຄ້າ-ລາຄາ ພ້ອມທັງດຳເນີນມາດຕະການແຊກແຊງໃນເມື່ອຈຳເປັນ ເພື່ອໃຫ້ລາຄາມີຄວາມສະຫງົບສົມເຫດສົມຜົນ ຮັບປະກັນບໍ່ໃຫ້ເກີດສະພາບຂາດແຄນ, ສະກັດກັ້ນການກັກຕຸນ ເພື່ອສວຍໂອກາດຂຶ້ນລາຄາຕາມລຳພັງໃຈ; ຮີບຮ້ອນປັບປຸງລັດວິສາຫະກິດສະບຽງອາຫານ ໃຫ້ມີຄວາມເຂັ້ມແຂງຕິດພັນກັບການປັບປຸງກຸ່ມເກັບຊື້ ແລະ ກຸ່ມສະໜອງປັດໄຈຮັບໃຊ້ການຜະລິດ; ປັບປຸງຄັງແຮເຂົ້າຂອງລັດ ເພື່ອຮັບປະກັນການສະໜອງສະບຽງອາຫານ ແລະ ສ້າງຄັງແຮເຂົ້າໃຫ້ກຸ້ມກິນ 3 ເດືອນ; ອຳນວຍຄວາມສະດວກໃນການຈໍລະຈອນສິນຄ້າ.

15.6 ເອົາໃຈໃສ່ພັດທະນາຂະແໜງອຸດສາຫະກຳປຸງແຕ່ງ ທີ່ມີພື້ນຖານວັດຖຸດິບພາຍໃນ ໃຫ້ສາມາດສະໜອງຄວາມຕ້ອງການພາຍໃນໄດ້ໂດຍພື້ນຖານ. ພ້ອມກັນນັ້ນ ກໍ່ໃຫ້ຄວາມສຳຄັນແກ່ການຂະຫຍາຍຂະແໜງອຸດສາຫະກຳເບົາ ທີ່ນຳໃຊ້ວັດຖຸດິບຈາກພາຍໃນ ແລະ ຕ່າງປະເທດ ເພື່ອມາປຸງແຕ່ງຮັບໃຊ້ພາຍໃນ ແລະ ສົ່ງອອກ.

15.7 ຈັດຕັ້ງ ແລະ ປັບປຸງກຸ່ມຫັດຖະກຳໃຫ້ເຂັ້ມແຂງ, ເອົາໃຈໃສ່ຍົກລະດັບຄຸນນະພາບຜະລິດຕະພັນ ແລະ ຊອກຫາຕະຫລາດຫັດຖະກຳຢູ່ຕ່າງປະເທດ, ສົມທົບກັບຂະແໜງທ່ອງທ່ຽວເພື່ອຜະລິດເຄື່ອງທີ່ລະນຶກໃຫ້ຖືກກັບຄວາມຕ້ອງການຂອງນັກທ່ອງທ່ຽວ.

15.8 ຊີ້ນຳ ແລະ ໃຫ້ການສະໜັບສະໜູນດ້ານການຕະຫລາດ ແລະ ສົ່ງເສີມການຜະລິດແບບຜູກພັນ 2 ສົ້ນ ໂດຍໃຫ້ອົງການທີ່ກ່ຽວຂ້ອງຮັບຮູ້ ແລະ ຊ່ວຍໃນການຄຸ້ມຄອງການປະຕິບັດຂໍ້ຜູກພັນຂອງແຕ່ລະຝ່າຍ.

15.9 ຈັດຕັ້ງງານເທດສະການ ແລະ ຕະຫລາດນັດ ເປັນປະຈຳ ເພື່ອໂຄສະນາ ແລະ ຈຳໜ່າຍຜະລິດຕະພັນສິນຄ້າອຸດສາຫະກຳ-ຫັດຖະກຳ, ແລກປ່ຽນບົດຮຽນ ແລະ ຂໍ້ມູນຂ່າວສານຕ່າງໆ.

15.10 ປະຕິບັດບັນດາທິດທາງ, ໜ້າທີ່ ແລະ ວຽກງານຈຸດສຸມດ້ານອຸດສາຫະກຳ ແລະ ການຄ້າ ເພື່ອບັນລຸຕາມຄາດໝາຍທີ່ກຳນົດໃນແຜນການສົກປີ 2011-2012.

ມາດຕາ 16: ມອບໃຫ້ ກະຊວງພະລັງງານ ແລະ ບໍ່ແຮ່ ປະຕິບັດດັ່ງນີ້:

16.1 ຊຸກຍູ້ບັນດາໂຄງການກໍ່ສ້າງເຂື່ອນ ແລະ ໂຮງງານຜະລິດໄຟຟ້າ, ສາຍສົ່ງແຫ່ງຊາດໃຫ້ມີຜົນຄືບໜ້າ ແລະ ໃຫ້ສຳເລັດຕາມແຜນການ; ຕິດຕາມການປ່ຽນແປງຂອງລາຄາແຮ່ທາດໃນຕະຫລາດໂລກຢ່າງ ຈິດຈໍ່ ເພື່ອວາງແຜນການຂຸດຄົ້ນໃຫ້ເໝາະສົມ, ພິຈາລະນາຂໍ້ສະເໜີຕ່າງໆຂອງຜູ້ປະກອບການຢ່າງ ເໝາະສົມ ເພື່ອໃຫ້ໂຄງການດຳເນີນໄປໄດ້ປົກກະຕິ ແລະ ເປັນຜົນດີຕໍ່ທຸກຝ່າຍບົນພື້ນຖານການຍຶດ ໝັ້ນໃນສັນຍາ ແລະ ກົດໝາຍ; ສືບຕໍ່ປັບປຸງບັນດາລະບຽບການຕ່າງໆທີ່ຍັງບໍ່ທັນສອດຄ່ອງ, ມີຊ່ອງ ຫວ່າງ ແລະ ຊ້ຳຊ້ອນກັນ; ສ້າງລະບຽບການອັນຈຳເປັນ ເພື່ອອຳນວຍຄວາມສະດວກສົ່ງເສີມການຜະລິດ ແລະ ການລົງທຶນ.

16.2 ປະຕິບັດນະໂຍບາຍ ປະຢັດໄຟຟ້າ; ກວດກາ ແລະ ສ້ອມແປງສະຖານີໄຟຟ້າຮັບໃຊ້ຊົນລະປະທານ ຢູ່ ທຸກໆບ່ອນ.

16.3 ປະສານສົມທົບກັບກະຊວງກະສິກຳ-ປ່າໄມ້ ປະຕິບັດນະໂຍບາຍອຸດໜູນລາຄາພະລັງງານໄຟຟ້າສຳ ລັບຊົນລະປະທານ ເພື່ອຮັບໃຊ້ການຜະລິດກະສິກຳ ເປັນຕົ້ນແມ່ນການຜະລິດເຂົ້າ ແລະ ສະບຽງອາ ຫານ.

16.4 ປະຕິບັດບັນດາທິດທາງ, ໜ້າທີ່ ແລະ ວຽກງານຈຸດສຸມດ້ານພະລັງງານ ແລະ ບໍ່ແຮ່ ເພື່ອບັນລຸຕາມຄາດ ໝາຍທີ່ກຳນົດໃນແຜນການສົກປີ 2011-2012.

ມາດຕາ 17: ມອບໃຫ້ ຄະນະຊີ້ນຳພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ ປະຕິບັດດັ່ງນີ້:

17.1 ຄົ້ນຄວ້າປັບປຸງກົນໄກການປະສານງານ ລະຫວ່າງ ຂະແໜງການຂັ້ນສູນກາງດ້ວຍກັນ ແລະ ລະຫວ່າງ ສູນກາງ ກັບທ້ອງຖິ່ນ, ສ້າງລະບຽບການ ແລະ ກົນໄກຄຸ້ມຄອງນຳໃຊ້ທຶນຈາກແຫຼ່ງຕ່າງໆ ເຂົ້າໃນໂຄງ ການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ; ພ້ອມດຽວກັນນັ້ນ, ກໍ່ຊຸກຍູ້ຂະແໜງການ ແລະ ທ້ອງຖິ່ນປະຕິບັດລະບອບການລາຍງານວຽກງານດັ່ງກ່າວຢ່າງປົກກະຕິ.

17.2 ປະສານກັບຂະແໜງການ ແລະ ທ້ອງຖິ່ນ ຕິດຕາມຊຸກຍູ້ການຈັດຕັ້ງປະຕິບັດບັນດາໂຄງການທີ່ມີເປົ້າ ໝາຍຫຼຸດຜ່ອນຄວາມທຸກຍາກໂດຍສະເພາະ ໂຄງການຫຼຸດຜ່ອນຄວາມທຸກຍາກຢູ່ກຸ່ມບ້ານ ທີ່ລັດຖະ ບານ ຈັດສັນງົບປະມານໃຫ້ ໃນສົກປີ 2011-2012, ໂຄງການຈັດສັນພູມລຳເນົາ ແລະ ອາຊີບຄົງທີ່ໃຫ້ ປະຊາຊົນ, ກອງທຶນຫລຸດຜ່ອນຄວາມທຸກຍາກ, ກອງທຶນພັດທະນາຂັ້ນບ້ານ, ໂຄງການຈາກການປ່ອຍ ສິນເຊື່ອຂອງທະນາຄານນະໂຍບາຍ, ທະນາຄານສົ່ງເສີມກະສິກຳ ແລະ ໂຄງການແກ້ໄຂຄວາມ ທຸກຍາກທີ່ສະໜັບສະໜູນໂດຍ ພາກເອກະຊົນ ແລະ ບັນດາອົງການຈັດຕັ້ງສາກົນ.

17.3 ໂຄງການຫຼຸດຜ່ອນຄວາມທຸກຍາກຢູ່ກຸ່ມບ້ານທີ່ນອນໃນຂະແໜງໃດ ແມ່ນມອບໃຫ້ຂະແໜງການນັ້ນຢູ່ ທ້ອງຖິ່ນເປັນຜູ້ຄຸ້ມຄອງ, ຈັດຕັ້ງປະຕິບັດ ແລະ ສະຫລຸບລາຍງານຕາມກົດໝາຍ ແລະ ລະບຽບການ. ທ້ອງຖິ່ນບໍ່ສາມາດຍ້າຍ ຫລື ຍວ່າຍທຶນດັ່ງກ່າວໄປປະຕິບັດເປົ້າໝາຍອື່ນ.

17.4 ສົມທົບກັບບັນດາກະຊວງ-ອົງການກ່ຽວຂ້ອງ ຊຸກຍູ້ທະນາຄານນະໂຍບາຍ ແລະ ທະນາຄານຕ່າງໆ ເພີ່ມສິນເຊື່ອເພື່ອແກ້ໄຂຄວາມທຸກຍາກ; ຊຸກຍູ້ທະນາຄານນະໂຍບາຍ ຢູ່ແຕ່ລະຂັ້ນໃຫ້ເຄື່ອນໄຫວປ່ອຍ ເງິນກູ້ ໃຫ້ກຸ່ມເປົ້າໝາຍ, ອີງໃສ່ໂຄງການຜະລິດສິນຄ້າ ແລະ ລຶບລ້າງຄວາມທຸກຍາກຂອງທ້ອງຖິ່ນເພື່ອ ປ່ອຍເງິນກູ້ຢ່າງມີຈຸດສຸມ ແລະ ມີປະສິດທິຜົນ.

17.5 ເປັນໃຈກາງຈັດຕັ້ງປະຕິບັດວຽກງານກໍ່ສ້າງຮາກຖານການເມືອງ, ໂຄງການພັດທະນາເຂດຈຸດສຸມຊາຍແດນ; ດຳເນີນການເຜີຍແຜ່ຄຳສັ່ງແນະນຳ ເລກທີ 03/ກມສພ, ລົງວັນທີ 30 ພຶດສະພາ 2011 ວ່າດ້ວຍການສ້າງບ້ານເປັນຫົວໜ່ວຍພັດທະນາ, ສ້າງບ້ານໃຫຍ່ ໃຫ້ກາຍເປັນຕົວເມືອງນ້ອຍໃນຊົນນະບົດ.

17.6 ປະຕິບັດບັນດາທິດທາງ, ໜ້າທີ່ ແລະ ວຽກງານຈຸດສຸມດ້ານພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກເພື່ອບັນລຸຕາມຄາດໝາຍທີ່ກຳນົດໃນແຜນການ ສົກປີ 2011-2012.

**ມາດຕາ 18: ມອບໃຫ້ ກະຊວງໂຍທາທິການ ແລະ ຂົນສົ່ງ ປະຕິບັດດັ່ງນີ້:**

18.1 ສືບຕໍ່ຕິດຕາມຊຸກຍູ້ ບັນດາໂຄງການກໍ່ສ້າງຂົວ-ທາງ ແລະ ພື້ນຖານໂຄງລ່າງອື່ນໆ ໃຫ້ມີຜົນຄືບໜ້າ ແລະ ສຳເລັດຕາມສັນຍາ, ໃນນີ້ ໃຫ້ເອົາໃຈໃສ່ບັນດາໂຄງການທີ່ເປັນຍຸດທະສາດທາງຜ່ານເໜືອ-ໃຕ້ ແລະ ຕາເວັນອອກ-ຕາເວັນຕົກ.

18.2 ຊຸກຍູ້ໃຫ້ສະມາຄົມຂົນສົ່ງປັບປຸງຕົວເອງ ແລະ ຍົກລະດັບຄວາມສາມາດໃຫ້ທຽບທັນປະເທດອື່ນ; ເປັນເຈົ້າການສະເໜີເຈລະຈາເຮັດສັນຍາເປີດສາຍການບິນກັບປະເທດຕ່າງໆໃຫ້ຫລາຍຂຶ້ນ.

18.3 ສົມທົບກັບ ນະຄອນຫຼວງ ແລະ ແຂວງ ປັບປຸງວຽກງານໂຍທາທິການ ແລະ ຂົນສົ່ງ ໃນຕົວເມືອງໃຫຍ່ ໂດຍສະເພາະເສັ້ນທາງໃຫ້ມີຄວາມສະດວກ, ສະອາດ, ສວຍງາມ ແລະ ມີຄວາມປອດໄພ ໃນການສັນຈອນ; ສືບຕໍ່ພັດທະນາ ແລະ ຄຸ້ມຄອງບັນດາຕົວເມືອງໃຫ້ມີຄວາມເປັນລະບຽບຮຽບຮ້ອຍ, ສະອາດງາມຕາ ແລະ ມີສິ່ງແວດລ້ອມທີ່ດີ ໂດຍເລີ່ມຈາກການຫຼຸດຜ່ອນຂີ້ຝຸ່ນໃນເສັ້ນທາງຕົວເມືອງ ແລະ ປັບປຸງລະບົບການຂົນສົ່ງ ແລະ ກຳຈັດຂີ້ເຫຍື້ອ.

18.4 ສົມທົບກັບກະຊວງພາຍໃນ ແລະ ແຂວງກ່ຽວຂ້ອງຄົ້ນຄວ້າ, ປະເມີນຜົນການກໍ່ສ້າງເທດສະບານຂອງແຂວງ, ເມືອງຈຳນວນໜຶ່ງທີ່ໄດ້ກຳນົດໃນແຜນການປີ.

18.5 ກະກຽມຄວາມພ້ອມໃນການແກ້ໄຂສຸກເສີນ ຜົນກະທົບຈາກໄພທຳມະຊາດຕໍ່ບັນດາພື້ນຖານໂຄງລ່າງຄົມມະນາຄົມ-ຂົນສົ່ງ.

18.6 ປະຕິບັດບັນດາທິດທາງ, ໜ້າທີ່ ແລະ ວຽກງານຈຸດສຸມດ້ານໂຍທາທິການ ແລະ ຂົນສົ່ງ ເພື່ອບັນລຸຕາມຄາດໝາຍທີ່ກຳນົດໃນແຜນການສົກປີ 2011-2012.

**ມາດຕາ 19: ມອບໃຫ້ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ສື່ສານ ປະຕິບັດດັ່ງນີ້:**

19.1 ສ້າງ ແລະ ປັບປຸງບັນດານິຕິກຳຕ່າງໆທີ່ກ່ຽວຂ້ອງກັບວຽກງານໄປສະນີ, ໂທລະຄົມ ແລະ ອິນເຕີເນັດ ໃຫ້ແທດເໝາະກັບສະພາບການຂະຫຍາຍຕົວຂອງເສດຖະກິດ-ສັງຄົມ.

19.2 ຂະຫຍາຍຫ້ອງການໄປສະນີໃຫ້ໄດ້ຕື່ມ 4 ແຫ່ງ, ໂດຍໃຫ້ສຸມໃສ່ຂະຫຍາຍໄປສູ່ເຂດບ້ານຈຸດສຸມທີ່ມີເງື່ອນໄຂ.

19.3 ລວມສູນການສື່ສານແຫ່ງຊາດ ເຂົ້າອອກຜ່ານປະຕູດຽວ ເພື່ອໃຫ້ສາມາດຄຸ້ມຄອງຄວາມປອດໄພດ້ານຂໍ້ມູນຂ່າວສານ.

19.4 ສ້າງຕັ້ງກອງຄຸ້ມຄອງຄື້ນຄວາມຖີ່ວິທະຍຸ ແລະ ອຸປະກອນທັນສະໄໝ ໃຫ້ສາມາດຄຸ້ມຄອງ, ກວດກາ, ດັດສົມ ແລະ ວັດແທກຄື້ນຄວາມຖີ່ວິທະຍຸໃນຂອບເຂດທົ່ວປະເທດ.

19.5 ປະຕິບັດໂຄງການລັດຖະບານເອເລັກໂຕຣນິກ ແລະ ໂຄງການດາວທຽມ ໃຫ້ສຳເລັດຕາມແຜນການທີ່ກຳນົດ; ປັບປຸງ ແລະ ສ້າງລະບົບໂປຼແກຼມຂໍ້ມູນ ເຂົ້າໃນລະບົບບໍລິຫານລັດແບບເອເລັກໂຕຼນິກ ພ້ອມ

ທັງເຝິກອົບຮົມ ແລະ ເຜີຍແຜ່ລະບົບດັ່ງກ່າວ ໃຫ້ແກ່ຜູ້ຊົມໃຊ້ ນັບທັງພາກລັດ ແລະ ເອກະຊົນຢ່າງກວ້າງຂວາງ.

19.6 ປະຕິບັດບັນດາທິດທາງ, ໜ້າທີ່ ແລະ ວຽກງານຈຸດສຸມດ້ານໄປສະນີ, ໂທລະຄົມ ແລະ ສື່ສານ ເພື່ອບັນລຸຕາມຄາດໝາຍທີ່ກຳນົດໃນແຜນການສົກປີ 2011-2012.

**ມາດຕາ 20: ມອບໃຫ້ ກະຊວງສຶກສາທິການ ແລະ ກິລາ ປະຕິບັດດັ່ງນີ້:**

20.1 ສືບຕໍ່ປະຕິບັດຂອບພັດທະນາການສຶກສາ ແລະ ຍຸດທະສາດປະຕິຮູບການສຶກສາແຫ່ງຊາດ, ແຜນປະຕິບັດງານແຫ່ງຊາດການສຶກສາເພື່ອທຸກຄົນ; ເອົາໃຈໃສ່ການສຶກສາຂັ້ນອະນຸບານ, ການສຶກສານອກໂຮງຮຽນ; ເອົາໃຈໃສ່ສັບຊ້ອນບັນຈຸຄູໃຫ້ທ່ວງທັນກັບເວລາ, ແທດເໝາະກັບຄວາມຮຽກຮ້ອງຕ້ອງການຕົວຈິງຂອງທ້ອງຖິ່ນ; ປະຕິບັດນະໂຍບາຍຍົກຖານະບົດບາດຂອງຄູອາຈານໃຫ້ມີລັກສະນະເດັ່ນຊັດຂຶ້ນກວ່າເກົ່າໃນສັງຄົມ, ຍົກລະດັບຄູຈາກຂັ້ນຕົ້ນ ເປັນຂັ້ນກາງ ແລະ ຈາກຂັ້ນກາງເປັນຂັ້ນສູງ; ດຳເນີນການຈັດຕັ້ງປະຕິບັດ ແຜນຍຸດທະສາດການປະຕິຮູບລະບົບການສຶກສາແຫ່ງຊາດ ໄລຍະທີ 2.

20.2 ສືບຕໍ່ກໍ່ສ້າງ ແລະ ຂະຫຍາຍພື້ນຖານໂຄງລ່າງທີ່ຈຳເປັນ ເພື່ອສ້າງເງື່ອນໄຂອຳນວຍ ໃຫ້ແກ່ການສຶກສາ. ປຸກລະດົມພາກສ່ວນທຸລະກິດເອກະຊົນ ໃຫ້ເຂົ້າຮ່ວມຢ່າງຕັ້ງໜ້າໃນການພັດທະນາວຽກງານການສຶກສາໂດຍສະເພາະວຽກງານອາຊີວະສຶກສາ ແລະ ການສຶກສາຂັ້ນສູງ ໃຫ້ມີບາດກ້າວໃໝ່ ສາມາດຮັບປະກັນໄດ້ຄຸນນະພາບໃນລະດັບອັນແນ່ນອນ, ສາມາດຕອບສະໜອງຄວາມຕ້ອງການຂອງສັງຄົມໄດ້ໃນລະດັບດີ.

20.3 ພັດທະນາ ນັກກິລາລາວ ໃຫ້ມີຄວາມເຂັ້ມແຂງ ເພື່ອກຽມຄວາມພ້ອມເຂົ້າຮ່ວມການແຂ່ງຂັນລາຍການຕ່າງໆ ໃນລະດັບພາກພື້ນ ແລະ ສາກົນ; ຊຸກຍູ້ແຕ່ລະສະຫະພັນກິລາໃຫ້ສ້າງເງື່ອນໄຂຈັດການແຂ່ງຂັນໃນລະດັບປະເທດ ແລະ ພາກພື້ນ ຢ່າງຕໍ່ເນື່ອງ ເພື່ອສືບຕໍ່ພັດທະນາກິລາຂອງແຕ່ລະສະຫະພັນ.

20.4 ສືບຕໍ່ກະກຽມຈັດງານມະຫາກຳກິລາແຫ່ງຊາດ ຄັ້ງທີ IX ໃນທ້າຍປີ 2011 ທີ່ແຂວງຫລວງພະບາງ ໂດຍປຸກລະດົມໃຫ້ ທຸກພາກສ່ວນຂອງສັງຄົມ ເຂົ້າຮ່ວມ ແລະ ປະກອບສ່ວນໃນການແຂ່ງຂັນດັ່ງກ່າວ ໃຫ້ມີບັນຍາກາດຟົດຟື້ນຄືກັບການຈັດງານມະຫາກຳກິລາຊີເກມ ຄັ້ງທີ 25 ທີ່ນະຄອນຫຼວງວຽງຈັນ; ສືບຕໍ່ກະກຽມບັນດາພື້ນຖານໂຄງລ່າງດ້ານກິລາ ເພື່ອຮອງຮັບໃຫ້ແກ່ງານແຂ່ງຂັນກິລາມະຫາວິທະຍາໄລອາຊຽນ ໃນປີ 2012 ທີ່ລາວເປັນເຈົ້າພາບ ແລະ ການຈັດງານແຂ່ງຂັນກິລາແຫ່ງຊາດ ຄັ້ງທີ X ທີ່ແຂວງອຸດົມໄຊ ໃນປີ 2014.

20.5 ສືບຕໍ່ການພົວພັນຮ່ວມມື ແລະ ຍາດແຍ່ງທຶນຮອນຈາກບັນດາປະເທດເພື່ອນມິດ ແລະ ອົງການຈັດຕັ້ງສາກົນຕ່າງໆ ເພື່ອສົ່ງເສີມວຽກງານກິລາ-ກາຍະກຳ ໃຫ້ເຂັ້ມແຂງ; ປຸກລະດົມມວນຊົນໃຫ້ຕັ້ງໜ້າປະກອບສ່ວນເຂົ້າໃນການພັດທະນາກິລາລາວໃຫ້ເປັນຂະບວນຟົດຟື້ນກວ່າເກົ່າ.

20.6 ຄົ້ນຄວ້າກຳນົດປະເພດກິລາທີ່ເຫັນວ່າມີທ່າແຮງ ແລະ ມີເງື່ອນໄຂ ເພື່ອພັດທະນາໃຫ້ມີມາດຕະຖານໃກ້ກັບສາກົນ ເພື່ອໃຫ້ສາມາດຍາດໄດ້ຫຼຽນໄຊ ໃນລາຍການແຂ່ງຂັນລະດັບສາກົນ.

20.7 ປະຕິບັດບັນດາທິດທາງ, ໜ້າທີ່ ແລະ ວຽກງານຈຸດສຸມດ້ານການສຶກສາ ແລະ ກິລາ ເພື່ອບັນລຸຕາມຄາດໝາຍ ທີ່ກຳນົດໃນແຜນການສົກປີ 2011-2012.

**ມາດຕາ 21: ມອບໃຫ້ ກະຊວງສາທາລະນະສຸກ ປະຕິບັດດັ່ງນີ້:**

21.1 ປຸກລະດົມທົ່ວປວງຊົນໃຫ້ເຂົ້າຮ່ວມວຽກງານສາທາລະນະສຸກ ແລະ ຮັກສາສຸຂະພາບ, ຫັນເອົາວຽກງານສາທາລະນະສຸກລົງສູ່ຮາກຖານຫຼາຍຂຶ້ນ ໂດຍເລີ່ມຈາກການສ້າງບ້ານແບບຢ່າງສາທາລະນະສຸກ. ສ້າງໃຫ້ໄດ້ພະນັກງານທີ່ມີຈັນຍາບັນ, ທ່າທີຮັບໃຊ້ ແລະ ບໍລິການທີ່ດີ, ມີຄວາມຊຳນານງານ.

21.2 ປັບປຸງໂຄງລ່າງດ້ານສາທາລະນະສຸກ ໂດຍສະເພາະໂຮງໝໍສູນກາງ, ໂຮງໝໍພາກ ແລະ ໂຮງໝໍແຂວງ ພ້ອມທັງປັບປຸງຄຸນນະພາບການບໍລິການສາທາລະນະສຸກ ໂດຍເລີ່ມຈາກການນຳໃຊ້ວິທະຍາສາດການແພດທີ່ທັນສະໄໝ, ແພດໝໍທີ່ມີຄວາມສາມາດ ແລະ ການບໍລິການທີ່ດີ; ກະກຽມພາຫະນະ, ອຸປະກອນການແພດທີ່ຈຳເປັນ, ຕິດຕາມ ແລະ ເຝົ້າລະວັງການລະບາດຂອງ ພະຍາດຮ້າຍແຮງຕ່າງໆ.

21.3 ສືບຕໍ່ປະຕິບັດການປິ່ນປົວ ປະເພດເສຍຄ່າ ແລະ ບໍ່ເສຍຄ່າໃຫ້ສອດຄ່ອງກັບສະພາບຕົວຈິງ ໂດຍສະເພາະນະໂຍບາຍເກີດລູກບໍ່ເສຍຄ່າ; ຊຸກຍູ້ພາກເອກະຊົນໃຫ້ມີບົດບາດປະກອບສ່ວນໃນວຽກງານປິ່ນປົວ ແລະ ຮັກສາສຸຂະພາບຂອງປະຊາຊົນ; ຕັ້ງໜ້າສົ່ງເສີມໃຫ້ພາກເອກະຊົນປະກອບກິດຈະການດ້ານການປິ່ນປົວ ເປັນຕົ້ນ: ໂຮງໝໍທັນສະໄໝ, ສູນປິ່ນປົວ.

21.4 ເອົາໃຈໃສ່ກວດກາຄຸນນະພາບຂອງອາຫານ, ຢາປົວພະຍາດ ທັງມີມາດຕະການຕໍ່ຜູ້ລະເມີດລະບຽບກົດໝາຍ; ໂຄສະນາສຸຂະສຶກສາ ການຮັກສາສຸຂະພາບ ໂດຍເລີ່ມຈາກການປະຕິບັດວຽກງານອານາໄມ 3 ສະ ອາດ; ສົ່ງເສີມໃຫ້ຄອບຄົວປະຊາຊົນເອົາໃຈໃສ່ການຮັບປະທານອາຫານທີ່ຖືກຕາມຫຼັກອານາໄມ ແລະ ໄດ້ໂພສະນາການ; ເອົາໃຈໃສ່ຕິດຕາມສຸຂະພາບ, ພາລານາໄມ ແລະ ແນະນຳວິທີການຮັກສາສຸຂະພາບໃຫ້ຖືກຕາມຫຼັກສຸຂະອານາໄມ ຂອງປະຊາຊົນທີ່ໄດ້ຮັບຜົນກະທົບຈາກໄພທຳມະຊາດ.

21.5 ປະຕິບັດບັນດາທິດທາງ, ໜ້າທີ່ ແລະ ວຽກງານຈຸດສຸມດ້ານສາທາລະນະສຸກ ເພື່ອບັນລຸຕາມຄາດໝາຍທີ່ກຳນົດໃນແຜນການສົກປີ 2011-2012.

**ມາດຕາ 22: ມອບໃຫ້ ກະຊວງຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ປະຕິບັດດັ່ງນີ້:**

22.1 ຄົ້ນຄວ້າປັບປຸງເນື້ອໃນສື່ໂຄສະນາ ໃຫ້ດີຂຶ້ນດ້ວຍຫຼາຍຮູບຫຼາຍສີ, ວ່ອງໄວທັນການ, ເປັນສື່ໃນການໃຫ້ຄວາມຮູ້ຄວາມເຂົ້າໃຈ ທັງມີລັກສະນະສຶກສາອົບຮົມປະຊາຊົນທຸກຊັ້ນຄົນເຂົ້າໃຈຕໍ່ແນວທາງນະໂຍບາຍຂອງພັກ, ໃຫ້ຄວາມຮູ້ ແລະ ສາລະຫລາຍດ້ານ ເຊັ່ນ: ດ້ານລະບຽບກົດໝາຍ, ວິທະຍາສາດ ແລະ ວິຊາການຕ່າງໆ; ເອົາໃຈໃສ່ໂຄສະນາສົ່ງເສີມການຜະລິດສິນຄ້າໃຫ້ເປັນຂະບວນກວ້າງຂວາງ, ການແຂ່ງຂັນກິລາລະດັບຊາດ, ການສະເຫຼີມສະຫຼອງວັນບຸນສຳຄັນຂອງຊາດ ແລະ ໂຄສະນາໃຫ້ນັກທ່ອງທ່ຽວເຂົ້າມາທ່ອງທ່ຽວໃນປະເທດ.

22.2 ເຜີຍແຜ່ແນະນຳວັດທະນະທຳຮີດຄອງປະເພນີ, ຄວາມຮັ່ງມີຂອງທຳມະຊາດ, ແຫລ່ງທ່ອງທ່ຽວເພື່ອດຶງດູດນັກທ່ອງທ່ຽວເຂົ້າປະເທດ; ປູກຈິດສຳນຶກສ້າງຊາວໜຸ່ມ ແລະ ເຍົາວະຊົນ ມີແນວຄິດຮັກຊາດ, ຮັກລະບອບໃໝ່, ຮັກຄວາມກ້າວໜ້າ ແລະ ແນວຄິດປະຢັດມັດທະຍັດໃຫ້ເກີດຂຶ້ນຢ່າງແຜ່ຫຼາຍໃນສັງຄົມ; ປັບປຸງຄຸນນະພາບຂອງລາຍການວິທະຍຸ ແລະ ໂທລະພາບໃຫ້ດີຂຶ້ນ ເປັນຕົ້ນ; ການດຳເນີນລາຍການຕ້ອງໃຫ້ຂໍ້ມູນທີ່ຖືກຕ້ອງ, ຊັດເຈນ, ການໃຊ້ຄຳສັບທີ່ຖືກຕ້ອງຕາມພາສາທາງການ ແລະ ເພີ່ມລາຍການສຳລັບເດັກນ້ອຍເຍົາວະຊົນໃຫ້ຫຼາຍຕື່ມ.

22.3 ເພີ່ມທະວີການໂຄສະນາຂະຫຍາຍຕະຫລາດທ່ອງທ່ຽວຜ່ານສື່ຕ່າງໆທັງພາຍໃນ ແລະ ຕ່າງປະເທດ; ຈັດເທດສະການ, ງານຕະຫລາດນັດ ແລະ ຂະບວນຄາລາວານທ່ອງທ່ຽວ; ຂະຫຍາຍຕະຫລາດທ່ອງທ່ຽວພາຍໃນປະເທດ (ລາວທ່ອງທ່ຽວລາວ), ໃນອານຸພາກພື້ນ ແລະ ໃນໂລກ.

22.4 ກະກຽມຄວາມພ້ອມທຸກດ້ານໃນການເປີດປີທ່ອງທ່ຽວລາວ ໃນປີ 2012 ໃຫ້ມີບັນຍາກາດຟົດຟື້ນ ໂດຍຖື ເອົາທ່າແຮງທາງດ້ານປະເທດລາວເປັນເຂດພື້ນທີ່ສີຂຽວ ແລະ ອາກາດສົດຊື່ນ, ມໍລະດົກທາງທຳມະ ຊາດ, ປະຫວັດສາດ ແລະ ວັດທະນະທຳ ເປັນຈຸດດຶງດູດຄວາມສົນໃຈຂອງນັກທ່ອງທ່ຽວ.

22.5 ສົມທົບກັບກະຊວງການຕ່າງປະເທດ ຊີ້ນຳບັນດາສະຖານທູດ ແລະ ສະຖານກົງສູນລາວຢູ່ຕ່າງປະເທດ ເພື່ອຊ່ວຍເຫຼືອໃນການໂຄສະນາດຶງດູດນັກທ່ອງທ່ຽວ, ອຳນວຍຄວາມສະດວກອອກວີຊາກັບທີ່ ຢູ່ດ່ານສາ ກົນຕ່າງໆ ລວມທັງການເດີນທາງເຂົ້າ-ອອກປະເທດ, ຈັດຕັ້ງການຕໍ່ວີຊາໃຫ້ນັກທ່ອງທ່ຽວຢູ່ແຂວງ, ຂະ ຫຍາຍຂອບເຂດການນຳໃຊ້ບັດຜ່ານແດນ ສຳລັບນັກທ່ອງທ່ຽວທີ່ເຂົ້າມາເປັນກຸ່ມ ແລະ ຄົ້ນຄວ້າ ການຍົກເວັ້ນວີຊາໃຫ້ແກ່ພົນລະເມືອງປະເທດເພື່ອນມິດຈຳນວນໜຶ່ງຕື່ມ.

22.6 ສືບຕໍ່ສຳຫຼວດ, ຈັດສັນ ແລະ ພັດທະນາແຫຼ່ງທ່ອງທ່ຽວທາງທຳມະຊາດ, ປະຫວັດສາດ ແລະ ວັດທະນະ ທຳ ແລະ ກໍ່ສ້າງໂຄງລ່າງພື້ນຖານທ່ອງທ່ຽວໃຫ້ຫລາຍຂຶ້ນ; ປຸກລະດົມອຳນາດການປົກຄອງທຸກຂັ້ນ, ປະ ຊາຊົນ ແລະ ທຸກພາກສ່ວນເອົາໃຈໃສ່ວຽກງານການທ່ອງທ່ຽວ ເຮັດໃຫ້ຂະແໜງນີ້ປະກອບສ່ວນຢ່າງຕັ້ງ ໜ້າໃຫ້ແກ່ການເຕີບໂຕຂອງເສດຖະກິດ, ສ້າງລາຍໄດ້ ແລະ ລຶບລ້າງຄວາມທຸກຍາກຂອງປະຊາຊົນຢູ່ ທ້ອງຖິ່ນ.

22.7 ສົມທົບກັບຂະແໜງການຕ່າງໆ, ສະມາຄົມທຸລະກິດທ່ອງທ່ຽວ, ສະມາຄົມໂຮງແຮມ-ຮ້ານອາຫານ, ສະ ມາຄົມຂົນສົ່ງ ເພື່ອປັບປຸງມາດຕະຖານການບໍລິການໃຫ້ຂຶ້ນສູ່ລະດັບສາກົນ ເຮັດໃຫ້ການບໍລິການ ການ ທ່ອງທ່ຽວສາມາດແກ່ງແຍ້ງແຂ່ງຂັນໄດ້ ກັບບັນດາປະເທດຢູ່ໃນອານຸພາກພື້ນ ແລະ ພາກພື້ນ.

22.8 ປະຕິບັດບັນດາທິດທາງ, ໜ້າທີ່ ແລະ ວຽກງານຈຸດສຸມດ້ານຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເພື່ອບັນລຸຕາມຄາດໝາຍ ທີ່ກຳນົດໃນແຜນການສົກປີ 2011-2012.

**ມາດຕາ 23: ມອບໃຫ້ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ປະຕິບັດດັ່ງນີ້:**

23.1 ເອົາໃຈໃສ່ຈັດຕັ້ງເຜີຍແຜ່ບັນດາກົດໝາຍ ແລະ ນິຕິກຳຕ່າງໆທີ່ກ່ຽວຂ້ອງກັບຂະແໜງແຮງງານໃຫ້ສັງ ຄົມຮັບຮູ້ຢ່າງກວ້າງຂວາງ; ຄົ້ນຄວ້າ ແລະ ປະກາດໃຊ້ລະບຽບການຄຸ້ມຄອງແຮງງານຕ່າງດ້າວ ທີ່ເຮັດ ວຽກໃນ ສປປ ລາວ ພ້ອມທັງປະຕິບັດໃຫ້ເຂັ້ມງວດ; ຊຸກຍູ້ໃຫ້ຜູ້ລົງທຶນປະຕິບັດລະບຽບການໃຊ້ແຮງງານ ລາວຢ່າງເຂັ້ມງວດ ຕາມທີ່ລະບຸໄວ້ໃນກົດໝາຍວ່າດ້ວຍແຮງງານ, ສົມທົບກັບສະຫະພັນກຳມະບານ ລາວລົງເຜີຍແຜ່ ແລະ ສຶກສາອົບຮົມກຳມະກອນຢູ່ໃນບັນດາໂຮງຈັກ-ໂຮງງານ ໃຫ້ເຂົ້າໃຈຕໍ່ກົດໝາຍ ແລະ ລະບຽບການ, ຮູ້ເຖິງຂອບເຂດສິດຜົນປະໂຫຍດທີ່ຕົນຄວນໄດ້ຮັບ ແລະ ເປັນເຈົ້າການປະຕິບັດ ຢ່າງຖືກຕ້ອງ.

23.2 ສົມທົບກັບກະຊວງການຕ່າງປະເທດຊີ້ນຳສະຖານທູດ ແລະ ສະຖານກົງສູນລາວຢູ່ຕ່າງປະເທດ ເພີ່ມ ຄວາມເອົາໃຈໃສ່ໃນການຕິດຕາມ, ຄຸ້ມຄອງ, ຊ່ວຍເຫລືອແຮງງານລາວຢູ່ຕ່າງປະເທດ ໃນກໍລະນີ ເກີດເຫດການຕ່າງໆທີ່ມີຜົນກະທົບຕໍ່ແຮງງານດັ່ງກ່າວ.

23.3 ຄົ້ນຄວ້າ ແລະ ວິໄຈກ່ຽວກັບການເຄື່ອນຍ້າຍແຮງງານ ແລະ ຄວາມອາດສາມາດດຸນດ່ຽງແຮງງານ ໃນລະ ບົບເສດຖະກິດ, ສ້າງສູນຂໍ້ມູນຂ່າວສານ ແລະ ສູນບໍລິການຈັດຫາງານຢູ່ບັນດາຕົວເມືອງໃຫຍ່; ເອົາ ໃຈໃສ່ຄຸ້ມຄອງແຮງງານຕ່າງປະເທດທີ່ເຂົ້າມາອອກແຮງງານຢູ່ ສປປ ລາວ ຢ່າງເຂັ້ມງວດບົນພື້ນຖານ ລະບຽບກົດໝາຍ ຂອງ ສປປ ລາວ.

23.4 ຕັ້ງໜ້າປະຕິບັດນະໂຍບາຍຕໍ່ຜູ້ທີ່ມີຄຸນງາມຄວາມດີຕໍ່ປະເທດຊາດ, ໃຫ້ການຊ່ວຍເຫລືອຜູ້ປະສົບໄພ ຕ່າງໆ ແລະ ພັດທະນາຜູ້ດ້ອຍໂອກາດ.

23.5 ປະຕິບັດບັນດາທິດທາງ, ໜ້າທີ່ ແລະ ວຽກງານຈຸດສຸມດ້ານແຮງງານ ແລະ ສະຫວັດດີການສັງຄົມເພື່ອບັນລຸຕາມຄາດໝາຍທີ່ກຳນົດໃນແຜນການສົກປີ 2011-2012.

**ມາດຕາ 24: ມອບໃຫ້ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ປະຕິບັດດັ່ງນີ້:**

24.1 ປັບປຸງ ແລະ ສ້າງນິຕິກຳທາງດ້ານວຽກງານວິທະຍາສາດ ແລະ ເຕັກໂນໂລຊີ, ຊັບສິນທາງປັນຍາ ແລະ ມາດຖານວັດແທກ ເປັນຕົ້ນແມ່ນຮ່າງກົດໝາຍວ່າດ້ວຍວິທະຍາສາດ ແລະ ເຕັກໂນໂລຊີ, ຮ່າງດຳລັດວ່າດ້ວຍການຖ່າຍທອດເຕັກໂນໂລຊີ, ຮ່າງດຳລັດວ່າດ້ວຍການສະເຫລີມສະຫລອງສັບປະດາວິທະຍາສາດ ແລະ ເຕັກໂນໂລຊີແຫ່ງຊາດ, ຮ່າງດຳລັດວ່າດ້ວຍກອງທຶນວິທະຍາສາດ ແລະ ເຕັກໂນໂລຊີ, ກົດໝາຍວ່າດ້ວຍຊັບສິນທາງປັນຍາ, ກົດໝາຍວ່າດ້ວຍວັດແທກ, ກົດໝາຍວ່າດ້ວຍມາດຕະຖານ, ພ້ອມທັງສືບຕໍ່ປັບປຸງດຳລັດຕ່າງໆທີ່ຕິດພັນກັບການຈັດຕັ້ງປະຕິບັດບັນດາກົດໝາຍທີ່ກ່າວມານັ້ນ.

24.2 ສືບຕໍ່ສ້າງເຄືອຂ່າຍສັງຄົມຂອງຜູ້ບໍລິການວິທະຍາສາດ ແລະ ນະວັດຕະກຳ, ຜູ້ຊົມໃຊ້ສູນບໍລິການແບບອີເລັກໂຕຼນິກ, ພ້ອມທັງລະດົມການຊ່ວຍເຫລືອ ເພື່ອມາສ້າງສູນ ໃຫ້ໄດ້ເພີ່ມອີກຢ່າງໜ້ອຍ 01 ສູນ.

24.3 ສືບຕໍ່ໃຫ້ການບໍລິການດ້ານຊັບສິນທາງປັນຍາ, ດ້ານມາດຕະຖານ ແລະ ວັດແທກ ໂດຍສະເພາະຂົງເຂດທາງດ້ານຊັບສິນອຸດສາຫະກຳ ແລະ ລິຂະສິດ, ປົກປ້ອງສິດຜູ້ນຳໃຊ້ ແລະ ບໍລິການໃຫ້ມີຄວາມເປັນທຳແກ່ສັງຄົມ.

24.4 ສົມທົບກັບບັນດາສູນ, ສະຖາບັນຄົ້ນຄວ້າວິທະຍາສາດ ຂຶ້ນແຜນ ແລະ ດຳເນີນການຄົ້ນຄວ້າທາງດ້ານວິທະຍາສາດ ເພື່ອນຳໃຊ້ຜົນຂອງການຄົ້ນຄວ້າ ເຂົ້າໃນການພັດທະນາເສດຖະກິດ-ສັງຄົມ.

24.5 ການສະເໜີເອົາໂຄງການເຂົ້າແຜນ ແລະ ຈັດຕັ້ງປະຕິບັດໂຄງການຄົ້ນຄວ້າວິທະຍາສາດ ໃຫ້ປະຕິບັດຄືກັບໂຄງການລົງທຶນຂອງລັດປົກກະຕິ. ການສະເໜີເອົາໂຄງການເຂົ້າແຜນຕ້ອງສ້າງເອກະສານຄົບຖ້ວນ ແລະ ໄດ້ຮັບການປະເມີນຈາກພາກສ່ວນທີ່ກ່ຽວຂ້ອງ ດັ່ງທີ່ໄດ້ກຳນົດໃນມາດຕາ 40 ກ່ຽວກັບການຕິດຕາມ, ກວດກາ, ກວດການ ແລະ ປະເມີນຜົນໂຄງການລົງທຶນຂອງລັດ ຂອງກົດໝາຍວ່າດ້ວຍການລົງທຶນຂອງລັດ. ຫຼັງຈາກສະພາແຫ່ງຊາດຮັບຮອງແຜນການລົງທຶນຂອງລັດປະຈຳປີ, ລັດຖະບານຈະແຈ້ງບັນຊີໂຄງການ ແລະ ເລກລະຫັດໂຄງການໃຫ້ກະຊວງທີ່ຮັບຜິດຊອບ ຈຶ່ງສາມາດຈັດຕັ້ງປະຕິບັດໄດ້. ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ຕ້ອງໄດ້ແຈ້ງໃຫ້ບັນດາກະຊວງ, ອົງການ, ນະຄອນຫຼວງວຽງຈັນ ແລະ ແຂວງຕ່າງໆ ທີ່ຮັບຜິດຊອບ ແຕ່ລະໂຄງການ (ຫົວຂໍ້ຄົ້ນຄວ້າ) ເພື່ອມອບໃຫ້ຈັດຕັ້ງປະຕິບັດໃຫ້ສຳເລັດຕາມຈຸດປະສົງຄາດໝາຍຂອງໂຄງການ. ຂັ້ນຕອນການຂໍເບີກຖອນງົບປະມານໂຄງການແມ່ນໃຫ້ບັນດາກະຊວງ ອົງການ, ນະຄອນຫຼວງວຽງຈັນ ແລະ ແຂວງຕ່າງໆ ປະກອບເອກະສານຄົບຖ້ວນ ຕາມລະບຽບຂອງກະຊວງການເງິນ ສະເໜີເຖິງກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ກວດກາ ແລ້ວຈຶ່ງສະເໜີກະຊວງແຜນການ ແລະ ການລົງທຶນ ເພື່ອຄົ້ນຄວ້າອະນຸມັດຕາມລະບຽບການ. ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ເປັນຜູ້ຄົ້ນຄ້ວາ ສະຫຼຸບລາຍງານການຈັດຕັ້ງປະຕິບັດໂຄງການຄົ້ນຄ້ວາວິທະຍາສາດຕໍ່ກະຊວງແຜນການ ແລະ ການລົງທຶນ ແລະ ຕໍ່ລັດຖະບານ.

24.6 ສືບຕໍ່ຄົ້ນຄວ້າ ແລະ ພັດທະນາພະລັງງານທົດແທນເຊັ່ນ: ສ້າງ ແລະ ທົດລອງເຄື່ອງສະກັດນ້ຳມັນໝາກເຍົາ, ພະລັງຊີວະມວນ, ຄົ້ນຄວ້າ ແລະ ທົດລອງສິ່ງເສດເຫລືອຈາກໝາກເຍົາມາຜະລິດເປັນແກັສ ແລະ ຝຸ່ນຊີວະພາບ.

24.7 ປະຕິບັດບັນດາທິດທາງ, ໜ້າທີ່ ແລະ ວຽກງານຈຸດສຸມດ້ານວິທະຍາສາດ ແລະ ເຕັກໂນໂລຊີເພື່ອບັນລຸຕາມຄາດໝາຍທີ່ກຳນົດໃນແຜນການສົກປີ 2011-2012.

ມາດຕາ 25: ມອບໃຫ້ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ປະຕິບັດດັ່ງນີ້:

25.1 ສືບຕໍ່ປັບປຸງກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ, ກົດໝາຍວ່າດ້ວຍນ້ຳ ແລະ ຊັບພະຍາກອນນ້ຳ, ສ້າງ ແລະ ປະກາດໃຊ້ມາດຖານຄຸນນະພາບສິ່ງແວດລ້ອມ; ດຳເນີນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມຂອງບັນດາໂຄງການຕ່າງໆ ແລະ ຕິດຕາມກວດກາການປະຕິບັດມາດຕະການຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ຈາກດ້ານຕ່າງໆ.

25.2 ຈັດຕັ້ງປະຕິບັດການຄຸ້ມຄອງຊັບພະຍາກອນນ້ຳແບບປະສົມປະສານ ໃນລະດັບອ່າງແມ່ນ້ຳຂອງ ແລະ ອ່າງຍ່ອຍ ພ້ອມທັງສ້າງຕັ້ງຄະນະກຳມະການຄຸ້ມຄອງອ່າງແມ່ນ້ຳ ຢູ່ອ່າງນ້ຳງື່ມ ແລະ ອ່າງນ້ຳເທີນ-ນ້ຳກະດິງ ແລະ ອື່ນໆ; ສ້າງລະບົບການເຕືອນລະວັງໄພພິບັດທຳມະຊາດ; ຜັນຂະຫຍາຍຍຸດທະສາດກ່ຽວກັບການປ່ຽນແປງດິນຟ້າອາກາດ ເຂົ້າເປັນແຜນງານປັບຕົວ ແລະ ຫລຸດຜ່ອນຜົນກະທົບຕໍ່ການປ່ຽນແປງດິນຟ້າອາກາດ ເພື່ອເຊື່ອມເຂົ້າແຜນພັດທະນາເສດຖະກິດ-ສັງຄົມຄັ້ງທີ VII.

25.3 ສ້າງຈິດສຳນຶກຂອງປວງຊົນ ກ່ຽວກັບການປົກປັກຮັກສາສິ່ງແວດລ້ອມ ແລະ ໄພຂົ່ມຂູ່ຈາກການປ່ຽນແປງດິນຟ້າອາກາດ ເປັນຕົ້ນ ແມ່ນການຮັກສາແຫຼ່ງນ້ຳ ແລະ ການຈຳກັດມົນລະພິດ; ຕິດຕາມ ແລະ ພະຍາກອນສະພາບອາກາດ ເພື່ອອອກຂ່າວເປັນປົກກະຕິ, ສະໜອງຂໍ້ມູນອຸຕຸການບິນເປັນປົກກະຕິ.

25.4 ຊຸກຍູ້ສົ່ງເສີມການຮ່ວມມືໃນຂອບອານຸພາກພື້ນແມ່ນ້ຳຂອງ (GMS) ແລະ ຄະນະກຳມະການແມ່ນ້ຳຂອງສາກົນ.

25.5 ຜັນຂະຫຍາຍຍຸດທະສາດປ່າໄມ້ຮອດປີ 2020 ອອກເປັນໂຄງການ ແລະ ແຜນວຽກລະອຽດ; ສົມທົບກັບກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງກະສິກຳ-ປ່າໄມ້ ແລະ ທ້ອງຖິ່ນຕ່າງໆ ປະຕິບັດຄຳສັ່ງເລກທີ 17/ນຍ, ລົງວັນທີ 22/09/2008 ວ່າດ້ວຍການ ເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງ, ປົກປັກຮັກສາປ່າໄມ້ ແລະ ການປະສານງານໃນການຄຸ້ມຄອງປ່າໄມ້ ແລະ ທຸລະກິດໄມ້ ຢ່າງເຂັ້ມງວດ.

25.6 ສືບຕໍ່ປັບປຸງ ແລະ ຂະຫຍາຍຕາໜ່າງຄຸ້ມຄອງປ່າສະຫງວນແຫ່ງຊາດ 24 ແຫ່ງ ແລະ ເຂດເຊື່ອມຕໍ່ 2 ແຫ່ງ; ເອົາໃຈໃສ່ສຳຫລວດ ແລະ ຈັດສັນ 3 ປະເພດປ່າ ໃຫ້ໄດ້ 60%, ສຶກສາສຳຫລວດ ແລະ ກຳນົດເຂດປ່າປ້ອງກັນຍອດນ້ຳ ແລະ ສາຂາຍ່ອຍຕ່າງໆ ໃຫ້ໄດ້ 8,2 ລ້ານເຮັກຕາ, ດຳເນີນການຟື້ນຟູປ່າທຳມະຊາດ ໃຫ້ໄດ້ 3,9 ລ້ານເຮັກຕາ ແລະ ພ້ອມທັງປຸກລະດົມການປູກໄມ້ ໃຫ້ໄດ້ 450.000 ລ້ານເຮັກຕາ ຕາມຍຸດທະສາດປ່າໄມ້.

25.7 ເຂັ້ມງວດກວດກາການບຸກລຸກເຂົ້າເຂດປ່າສະຫງວນ ໂດຍນຳໃຊ້ມາດຕະການທາງດ້ານກົດໝາຍຢ່າງເດັດຂາດ.

25.8 ເອົາໃຈໃສ່ປຸກລະດົມເອົາປະຊາຊົນເຂົ້າມາມີສ່ວນຮ່ວມໃນການຄຸ້ມຄອງປ່າຜະລິດ ແລະ ໃນພື້ນທີ່ນອກເຂດສາມປະເພດປ່າ ໂດຍຮູບການຈັດສັນປ່າໄມ້ບ້ານ ເພື່ອເພີ່ມການປົກປັກຮັກສາປ່າໄມ້ໂດຍຕິດພັນກັບການສົ່ງເສີມ, ສ້າງລາຍຮັບໃຫ້ຄອບຄົວ ແລະ ປັບປຸງຊີວິດການເປັນຢູ່ຂອງປະຊາຊົນ; ຈັດຕັ້ງ ແລະ ຄຸ້ມຄອງ ການຂຸດຄົ້ນໄມ້ໃຫ້ໄດ້ ຕາມຈຳນວນໂກຕາ ທີ່ລັດຖະບານ ແລະ ສະພາແຫ່ງຊາດອະນຸມັດ ແລະ ຮັບຮອງ.

25.9 ເລັ່ງສຶກສາກຳນົດຄ່າຄຳນວນ ສຳລັບການປະເມີນຄ່າທາດກາກບອນຂອງປ່າ ແລະ ທີ່ດິນປ່າໄມ້ ລວມທັງຄຸນຄ່າການບໍລິການຂອງລະບົບນິເວດ ເພື່ອທົດແທນສ້າງຕົວແບບ ຈ່າຍທົດແທນການໃຊ້ບໍລິການລະບົບນິເວດ; ລິເລີ່ມການຈັດຕັ້ງປະຕິບັດການສ້າງຄວາມພ້ອມດ້ານຕ່າງໆ ສຳລັບວຽກງານຫຼຸດຜ່ອນອາຍພິດເຮືອນແກ້ວ.

25.10 ປັບປຸງລະບົບກວດກາປ່າໄມ້ ຢູ່ຕາມຈຸດລໍ່ແຫຼມ ລຽບຕາມຊາຍແດນ ແລະ ຕາມຈຸດຕ່າງໆ ທີ່ເຫັນວ່າມີຄວາມຈຳເປັນ; ກວດກາລາດຕະເວນສະຖານທີ່ຂຸດຄົ້ນໄມ້, ເສັ້ນທາງລຳລຽງໄມ້, ໂຮງງານທີ່ນຳໃຊ້ໄມ້ເປັນພະລັງງານ ແລະ ສະຖານທີ່ອື່ນໆ ທີ່ເຫັນວ່າມີຄວາມຈຳເປັນ.

25.11 ສືບຕໍ່ສຳຫຼວດຈັດສັນທີ່ດິນ, ຈັດແບ່ງເຂດ, ແບ່ງປະເພດ; ສ້າງແຜນແມ່ບົດຈັດສັນທີ່ດິນແຫ່ງຊາດໃຫ້ສາມາດໃຊ້ໄດ້ໃນໄລຍະຂອງແຜນການ 5 ປີ (2011-2015).

25.12 ຄຸ້ມຄອງ, ຕິດຕາມ, ຊຸກຍູ້ ແລະ ກວດກາການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍປ່າໄມ້, ກົດໝາຍວ່າດ້ວຍທີ່ດິນ ແລະ ນິຕິກຳອື່ນໆທີ່ກ່ຽວຂ້ອງຢ່າງເຂັ້ມງວດ; ເພີ່ມທະວີເອົາໃຈໃສ່ຕໍ່ກັບການຫັນປ່ຽນປະເພດດິນ, ການອະນຸມັດໃຫ້ເຊົ່າ ແລະ ສຳປະທານທີ່ດິນ. ການໃຫ້ເຊົ່າ ແລະ ສຳປະທານທີ່ດິນຂອງລັດຕ້ອງປະຕິບັດຕາມດຳລັດ 135/ນຍ ລົງວັນທີ 25 ພຶດສະພາ 2009 ວ່າດ້ວຍການເອົາທີ່ດິນລັດໃຫ້ເຊົ່າ ຫລື ສຳປະທານ ຢ່າງເຂັ້ມງວດ.

25.13 ຈັດຕັ້ງປະຕິບັດການອອກໃບຕາດິນ, ການມອບດິນ-ມອບປ່າໃຫ້ປະຊາຊົນ ຢ່າງເປັນລະບົບ ໂດຍຈັດສັນເນື້ອທີ່ການຜະລິດແບບຄົງທີ່ ແລະ ທີ່ຢູ່ອາໄສ ໃຫ້ສອດຄ່ອງກັບມາດຕະການປົກປັກຮັກສາສະພາບແວດລ້ອມທີ່ຍືນນານ; ພ້ອມກັນນັ້ນ, ກໍ່ກວດກາຄືນການອອກໃບຕາດິນທີ່ຊ້ຳຊ້ອນກັນໃນໄລຍະຜ່ານມາ ແລະ ມີມາດຕະການແກ້ໄຂຢ່າງສອດຄ່ອງ.

25.14 ປະສານສົມທົບກັບອຳນາດການປົກຄອງທ້ອງຖິ່ນ (ແຂວງ, ເມືອງ, ບ້ານ) ເພື່ອຈັດເກັບຄ່າທຳນຽມທີ່ດິນ ແລະ ຄ່າວິຊາການ ໂດຍໃຫ້ມີກົນໄກທີ່ຈະແຈ້ງ ແລະ ສ້າງຂໍ້ມູນສະຖິຕິເພື່ອເປັນພື້ນຖານໃຫ້ແກ່ການຂະຫຍາຍລາຍຮັບຈາກທີ່ດິນ; ກວດກາຄືນການຊົດເຊີຍສິດນຳໃຊ້ທີ່ດິນໃນບ່ອນທີ່ຍັງມີບັນຫາ.

25.15 ຮີບຮ້ອນຄົ້ນຄວ້າສ້າງນິຕິກຳທີ່ຈຳເປັນ ພ້ອມທັງວາງນະໂຍບາຍ ແລະ ກົນໄກການຄຸ້ມຄອງທີ່ດິນໃຫ້ຊັດເຈນ ແລະ ຮັດກຸມ; ມີ ມາດຕະການສະກັດກັ້ນການຈັບຈອງທີ່ດິນ, ການມອບໂອນສິດນຳໃຊ້ທີ່ດິນທີ່ບໍ່ຖືກຕ້ອງຕາມກົດໝາຍ; ພ້ອມກັນນັ້ນ, ກໍດຳເນີນການເຜີຍແຜ່ກົດໝາຍ ແລະ ນິຕິກຳຕ່າງໆທີ່ກ່ຽວຂ້ອງໃຫ້ກວ້າງຂວາງ ແລະ ທົ່ວເຖິງ.

25.16 ດຳເນີນການກວດກາບັນດາກິດຈະການສຳຫລວດ ແລະ ຂຸດຄົ້ນແຮ່ທາດ, ມີມາດຕະການແກ້ໄຂທີ່ແທດເໝາະ ແລະ ຄ່ອງຕົວ ບົນພື້ນຖານສັນຍາ ແລະ ລະບຽບກົດໝາຍ, ເອົາໃຈໃສ່ຊຸກຍູ້ ແລະ ກວດກາໃຫ້ຜູ້ສຳປະທານ ຟື້ນຟູສະພາບແວດລ້ອມພາຍຫຼັງດຳເນີນການຂຸດຄົ້ນແຮ່ທາດສຳເລັດ, ຮັບປະກັນຜົນປະໂຫຍດອັນຊອບທຳຂອງທຸກຝ່າຍ.

25.17 ປະຕິບັດບັນດາທິດທາງ, ໜ້າທີ່ ແລະ ວຽກງານຈຸດສຸມດ້ານການຄຸ້ມຄອງ ນ້ຳ, ປ່າໄມ້, ທີ່ດິນ ແລະ ສິ່ງແວດລ້ອມ ເພື່ອບັນລຸຕາມຄາດໝາຍທີ່ກຳນົດໃນແຜນການ ສົກປີ 2011-2012.

**ມາດຕາ 26: ມອບໃຫ້ ຄະນະປັບປຸງທຸລະກິດ ປະຕິບັດດັ່ງນີ້:**

26.1 ປະສານສົມທົບກັບບັນດາກະຊວງ-ອົງການ ແລະ ທ້ອງຖິ່ນ ປັບປຸງລະບົບການຈັດຕັ້ງ, ການຄຸ້ມຄອງການເງິນ, ການບໍລິຫານທຸລະກິດ ແລະ ການຕະຫຼາດຂອງລັດວິສາຫະກິດ, ວິສະຫະກິດປະສົມ ແລະ ທຸລະກິດຮ່ວມມືກັບປະຊາຊົນ ໃຫ້ເຂັ້ມແຂງ ສາມາດແກ່ງແຍ້ງຕາມກົນໄກຕະຫລາດ.

26.2 ປະສານສົມທົບກັບບັນດາກະຊວງ-ອົງການ, ທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງທຸກຂັ້ນສຶກສາອົບຮົມປຸກລະດົມພາກສ່ວນທຸລະກິດ ປະຕິບັດລະບຽບກົດໝາຍທຸລະກິດ, ກົດໝາຍບັນຊີ, ພາສີອາກອນ ແລະ ກົດໝາຍອື່ນໆ ຢ່າງເຂັ້ມງວດ.

26.3 ສົມທົບກັບກະຊວງການເງິນ, ກະຊວງອຸດສາຫະກຳ ແລະ ການຄ້າ, ທະນາຄານ ແລະ ອົງການ ທີ່ກ່ຽວຂ້ອງຄົ້ນຄວ້າວິທີແກ້ໄຂໜີ້ສິນທີ່ຄຸມເຄືອ ລະຫວ່າງລັດບໍລິຫານ ແລະ ທຸລະກິດ, ລະຫວ່າງທຸລະກິດກັບທຸລະກິດ ທີ່ແກ່ຍາວຫລາຍປີ ໃຫ້ສຳເລັດເທື່ອລະກ້າວ; ປັບປຸງຖານະການເງິນຂອງລັດວິສາຫະກິດ ໃຫ້ດີຂຶ້ນ ແລະ ສາມາດກວດສອບໄດ້.

26.4 ປະສານສົມທົບກັບກະຊວງການເງິນ ເປັນເຈົ້າການທັບຊັບສິນທີ່ລັດລົງທຶນໃຫ້ບໍລິສັດຂອງລັດສາມາດເປັນເຈົ້າຂອງກຳມະສິດຢ່າງຂາດຕົວຕາມກົດໝາຍວິສາຫະກິດ; ປັບປຸງບາງລັດວິສະຫະກິດ ທີ່ມີທ່າແຮງ ໃຫ້ມີຄວາມເຂັ້ມແຂງ ເພື່ອກະກຽມນຳເຂົ້າຕະຫລາດຫລັກຊັບ.

26.5 ປະຕິບັດບັນດາທິດທາງ, ໜ້າທີ່ ແລະ ວຽກງານຈຸດສຸມດ້ານການປັບປຸງທຸລະກິດ ເພື່ອບັນລຸຕາມຄາດໝາຍທີ່ກຳນົດໃນແຜນການ ສົກປີ 2011-2012.

**ມາດຕາ 27: ມອບໃຫ້ ກະຊວງປ້ອງກັນປະເທດ-ກະຊວງປ້ອງກັນຄວາມສະຫງົບ ປະຕິບັດດັ່ງນີ້:**

27.1 ສືບຕໍ່ເອົາໃຈໃສ່ວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ແນໃສ່ເຮັດໃຫ້ທົ່ວປະເທດມີຄວາມສະຫງົບຢ່າງໜັກແໜ້ນ; ສ້າງສະພາບແວດລ້ອມທີ່ອຳນວຍໃຫ້ການສ້າງສາພັດທະນາເສດຖະກິດ-ສັງຄົມໃນທຸກພື້ນທີ່ຂອງປະເທດ; ປຸກລະດົມຂົນຂວາຍ ແລະ ຈັດຕັ້ງມະຫາຊົນເຂົ້າຮ່ວມວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບຢູ່ຮາກຖານຢ່າງກວ້າງຂວາງ; ປະຕິບັດໂຄງການພັດທະນາຂະແໜງການຕົນຢ່າງມີປະສິດທິຜົນ.

27.2 ມອບໃຫ້ຄະນະພັກ-ອຳນາດການປົກຄອງທຸກຂັ້ນ ເຮັດວຽກງານປ້ອງກັນຊາດ ແລະ ປ້ອງກັນຄວາມສະຫງົບ ແນໃສ່ຮັກສາສະຖຽນລະພາບດ້ານການເມືອງ, ຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍໃນສັງຄົມ ດ້ວຍມາດຕະການທັນລົງກໍ່ສ້າງຮາກຖານ-ການເມືອງ, ປະຕິບັດຄຳສັ່ງແນະນຳ ເລກທີ 03/ກມສພ, ລົງວັນທີ 30 ພຶດສະພາ 2011 ວ່າດ້ວຍ ການສ້າງບ້ານເປັນທີ່ວໜ່ວຍພັດທະນາ, ສ້າງບ້ານໃຫຍ່ໃຫ້ກາຍເປັນຕົວເມືອງນ້ອຍໃນຊົນນະບົດ.

27.3 ສົມທົບກັບພາກສ່ວນກ່ຽວຂ້ອງແກ້ໄຂປະກົດການຫຍໍ້ທໍ້ໃນສັງຄົມ ເປັນຕົ້ນແມ່ນບັນຫາຢາເສບຕິດ, ອາຊະຍາກຳຕ່າງໆ, ອຸປະຕິເຫດບົນທ້ອງຖະໜົນ ແລະ ການມົ້ວສຸມທີ່ຜິດລະບຽບກົດໝາຍ ໂດຍມີມາດຕະການປະຕິບັດຢ່າງລະອຽດ ແລະ ເດັດຂາດ.

27.4 ເອົາໃຈໃສ່ກໍ່ສ້າງກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃຫ້ໜັກແໜ້ນເຂັ້ມແຂງ, ມີຄວາມສາມາດ ແລະ ກຳລັງແຮງສູ້ຮົບ.

27.5 ປະຕິບັດບັນດາທິດທາງ, ໜ້າທີ່ ແລະ ວຽກງານຈຸດສຸມດ້ານປ້ອງກັນປະເທດ-ກະຊວງປ້ອງກັນຄວາມສະຫງົບ ເພື່ອບັນລຸຕາມຄາດໝາຍທີ່ກຳນົດໃນແຜນການ ສົກປີ 2011-2012.

**ມາດຕາ 28: ມອບໃຫ້ ກະຊວງຍຸຕິທຳ ປະຕິບັດດັ່ງນີ້:**

28.1 ສົມທົບກັບບັນດາກະຊວງທີ່ກ່ຽວຂ້ອງ ຄົ້ນຄວ້າສ້າງ ແລະ ປັບປຸງກົດໝາຍ ແລະ ນິຕິກຳອື່ນໆ ທີ່ຈະນຳເຂົ້າຜ່ານກອງປະຊຸມສະໄໝສາມັນ ເທື່ອທີ 2 ແລະ ເທື່ອທີ 3 ຂອງສະພາແຫ່ງຊາດຊຸດທີ VII; ເພີ່ມທະວີການໂຄສະນາເຜີຍແຜ່ກົດໝາຍຢ່າງເປັນລະບົບ ແລະ ກວ້າງຂວາງ ແນໃສ່ເຮັດໃຫ້ທົ່ວສັງຄົມຮັບຮູ້, ເຂົ້າໃຈດີຂຶ້ນ ແລະ ມີສະຕິເຄົາລົບກົດໝາຍສູງຂຶ້ນ; ພ້ອມກັນນີ້, ກໍ່ໃຫ້ຈັດຕັ້ງການກວດກາ ແລະ ປະເມີນຜົນຄືນ ການຈັດຕັ້ງປະຕິບັດກົດໝາຍທີ່ໄດ້ປະກາດໃຊ້ແລ້ວ.

28.2 ປັບປຸງແບບແຜນວິທີເຮັດວຽກ, ຈັນຍາບັນ ແລະ ຈັນຍາທຳຂອງພະນັກງານ ໃນຂົງເຂດຍຸຕິທຳ ແນໃສ່ສ້າງຄວາມເຊື່ອໝັ້ນຂອງສັງຄົມຕໍ່ອົງການປົກປ້ອງກົດໝາຍແຕ່ລະຂັ້ນໃຫ້ນັບມື້ນັບສູງຂຶ້ນ; ຍົກສູງຄວາມຖືກຕ້ອງໃນການຕັດສິນຄະດີຄຽງຄູ່ກັບການເພີ່ມຄວາມສັກສິດ ແລະ ເດັດຂາດໃນການປະຕິບັດ ຄຳຕັດສິນຂອງສານ.

28.3 ປະຕິບັດບັນດາທິດທາງ, ໜ້າທີ່ ແລະ ວຽກງານຈຸດສຸມດ້ານຍຸຕິທຳ ເພື່ອບັນລຸຕາມຄາດໝາຍທີ່ກຳນົດໃນແຜນການ ສົກປີ 2011-2012.

**ມາດຕາ 29: ມອບໃຫ້ ກະຊວງພາຍໃນ ປະຕິບັດດັ່ງນີ້:**

29.1 ສືບຕໍ່ປັບປຸງກົດໝາຍວ່າດ້ວຍລັດຖະບານ ແລະ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ລວມທັງຄົ້ນຄວ້າປັບປຸງນະໂຍບາຍ ແລະ ມາດຕະການຕ່າງໆ ໃນການຜັນຂະຫຍາຍບັນດາກົດໝາຍດັ່ງກ່າວ; ຄົ້ນຄວ້າການແບ່ງຂັ້ນຄຸ້ມຄອງ ລະຫວ່າງສູນກາງ ແລະ ທ້ອງຖິ່ນ ໃຫ້ສອດຄ່ອງ, ຈະແຈ້ງໃນການຄຸ້ມຄອງເສດຖະກິດ-ສັງຄົມ.

29.2 ຕິດຕາມເພື່ອກຳສະພາບການປະຕິບັດໜ້າທີ່ຂອງພະນັກງານ ທີ່ປະຕິບັດວຽກງານຢູ່ເຂດຫ່າງໄກສອກຫຼີກ ພ້ອມທັງຊຸກຍູ້ຂະແໜງການ ແລະ ທ້ອງຖິ່ນປະຕິບັດນະໂຍບາຍຕ່າງໆຕາມທີ່ໄດ້ກຳນົດໄວ້.

29.3 ປະຕິບັດບັນດາທິດທາງ, ໜ້າທີ່ ແລະ ວຽກງານຈຸດສຸມດ້ານການຄຸ້ມຄອງລັດຖະກອນ ເພື່ອບັນລຸຕາມຄາດໝາຍທີ່ກຳນົດ ໃນແຜນການ ສົກປີ 2011- 2012.

**ມາດຕາ 30: ມອບໃຫ້ສະຖາບັນວິທະຍາສາດສັງຄົມ, ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ, ສະຖາບັນຄົ້ນຄວ້າກະສິກຳ ແລະ ປ່າໄມ້ ປະຕິບັດດັ່ງນີ້:**

30.1 ສະຖາບັນວິທະຍາສາດສັງຄົມ ສືບຕໍ່ຄົ້ນຄວ້າປະຫວັດສາດລາວ ໃນໄລຍະຕໍ່ຕ້ານ ແລະ ເປັນທິວເມືອງຂຶ້ນຂອງຕ່າງຊາດ, ຄວາມສະເໝີພາບລະຫວ່າງບັນດາເຜົ່າຕໍ່ໜ້າກົດໝາຍ ໃນການພັດທະນາເສດຖະກິດ-ສັງຄົມ ແລະ ການເຄື່ອນຍ້າຍຂອງເຜົ່າລາວຈາກເຂດພາກໃຕ້ຂອງຈີນ; ຄົ້ນຄວ້າຄຳຮ່ວມຕະກູນພາສາ ລາວ-ໄທ.

30.2 ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ ກະຊວງແຜນການ ແລະ ການລົງທຶນ ສືບຕໍ່ສຶກສາຄວາມເປັນໄປໄດ້ຂອງໂຄງການລະດັບຊາດ ຂອງແຜນການ 5 ປີ ຄັ້ງທີ VII (2011-2015) ເພື່ອຄົ້ນຄວ້າເອົາເຂົ້າແຜນປະຈຳປີ; ສືບຕໍ່ຄົ້ນຄວ້າການຫັນເປັນອຸດສາຫະກຳ ແລະ ທັນສະໄໝ ໂດຍເລັ່ງໃສ່ຂະແໜງການ ແລະ ທ້ອງຖິ່ນ ທີ່ມີທ່າແຮງ.

30.3 ສະຖາບັນຄົ້ນຄວ້າກະສິກຳ ແລະ ປ່າໄມ້, ກະຊວງກະສິກຳ ແລະ ປ່າໄມ້ ສືບຕໍ່ຄົ້ນຄວ້າແນວພັນພືດ, ແນວພັນສັດ, ແນວພັນສັດນ້ຳ ແລະ ແນວພັນເຄື່ອງປ່າຂອງດົງ, ຜະລິດກະສິກຳສະອາດ, ພ້ອມກັນນັ້ນໃຫ້ເອົາໃຈໃສ່ເຜີຍແຜ່ແນະນຳໃຫ້ຊາວກະສິກອນຢ່າງກວ້າງຂວາງ ໂດຍຜ່ານບັນດາສູນ ທົດລອງ.

**ມາດຕາ 31: ມອບໃຫ້ ຫ້ອງວ່າການລັດຖະບານ ປະຕິບັດດັ່ງນີ້:**

31.1 ເປັນໃຈກາງປະສານກັບບັນດາຂະແໜງການ ແລະ ທ້ອງຖິ່ນ ດຳເນີນການກວດກາຄືນໂດຍໄວ ບັນດານິຕິກຳ ເປັນຕົ້ນແມ່ນ ຄຳສັ່ງ ແລະ ລະບຽບການຕ່າງໆຂອງລັດຖະບານ, ຂອງກະຊວງ-ອົງການ

ແລະ ຂອງທ້ອງຖິ່ນ, ຖ້າຫາກເຫັນວ່າອັນໃດບໍ່ສອດຄ່ອງກັບນະໂຍບາຍ, ລະບຽບການ ຫລື ກົດໝາຍທີ່ວາງອອກ ໃຫ້ຮີບຮ້ອນປັບປຸງແກ້ໄຂ, ງົດການປະຕິບັດ ຫລື ລົບລ້າງ.

31.2 ໃຫ້ສືບຕໍ່ປັບປຸງ ແລະ ສ້າງກົນໄກປະສານງານທີ່ມີປະສິດທິຜົນ ລະຫວ່າງ ຫ້ອງວ່າການສູນກາງພັກ, ຫ້ອງວ່າການສະພາແຫ່ງຊາດ, ຫ້ອງວ່າການສຳນັກງານປະທານປະເທດ ແລະ ຫ້ອງວ່າການລັດຖະບານ, ພ້ອມທັງມີລະບົບສ່ອງແສງລາຍງານການຈັດຕັ້ງປະຕິບັດວຽກງານຂອງລັດຖະບານ ໃຫ້ສະພາແຫ່ງຊາດເປັນປົກກະຕິ.

31.3 ປັບປຸງລະບອບປະສານງານ ໃນການແກ້ໄຂບັນຫາຕ່າງໆລະຫວ່າງກະຊວງ, ອົງການດ້ວຍກັນ ແລະ ລະຫວ່າງກະຊວງ-ອົງການ ກັບທ້ອງຖິ່ນ ເພື່ອໃຫ້ມີຄວາມກົມກຽວ ເປັນເອກະພາບ ແລະ ເກີດກຳລັງແຮງສັງລວມໃນການແກ້ໄຂບັນຫາຕ່າງໆ ເຮັດໃຫ້ການປະຕິບັດທິດທາງ ແລະ ມາດຕະການຕ່າງໆ ທີ່ວາງອອກມີຄວາມສັກສິດ.

31.4 ຊ່ວຍລັດຖະບານໃນການຕິດຕາມ ຊຸກຍູ້ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ສົກປີ 2011-2012 ໃຫ້ບັນລຸຄາດໝາຍ ແລະ ໄປຕາມທິດທີ່ວາງໄວ້.

**ມາດຕາ 32: ມອບໃຫ້ ອົງການຂອງພັກ, ແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ ປະຕິບັດດັ່ງນີ້:**

32.1 ປະຕິບັດຕາມຂອບເຂດສິດ ແລະ ໜ້າທີ່ຄວາມຮັບຜິດຊອບຂອງຕົນທີ່ໄດ້ຮັບມອບໝາຍຈາກພັກ-ລັດຖະບານ; ປະຕິບັດບັນດາທິດທາງ, ໜ້າທີ່ ແລະ ວຽກງານຈຸດສຸມໃນການພັດທະນາວຽກງານຂອງຕົນເພື່ອສະໜັບສະໜູນແກ່ການບັນລຸຕາມຄາດໝາຍທີ່ກຳນົດໃນແຜນການ ສົກປີ 2011-2012. ສຶກສາອົບຮົມ, ເຕົ້າໂຮມຄວາມສາມັກຄີປະຊາຊົນບັນດາເຜົ່າ ແລະ ປຸກລະດົມມວນຊົນເຂົ້າຮ່ວມໃນການພັດທະນາເສດຖະກິດ-ສັງຄົມ, ປະຕິບັດລະບຽບກົດໝາຍ ແລະ ແກ້ໄຂບັນຫາປະກົດການຫຍໍ້ທໍ້ດ້ານສັງຄົມ.

32.2 ຈັດຕັ້ງປະຕິບັດມາດຕະການໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນການລົງທຶນຂອງລັດ ແລະ ແຜນງົບປະມານຂອງລັດ ສົກປີ 2011-2012 ແລະ ຈັດຕັ້ງປະຕິບັດມາດຕະການແກ້ໄຂໜີ້ສິນຂອງລັດທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້.

**ມາດຕາ 33: ມອບໃຫ້ ອົງການກວດກາລັດຖະບານ ແລະ ອົງການກວດສອບແຫ່ງລັດປະຕິບັດດັ່ງນີ້:**

33.1 ເພີ່ມທະວີການຕິດຕາມ, ກວດກາ ແລະ ກວດສອບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ແຜນການລົງທຶນຂອງລັດ ຂອງບັນດາກະຊວງ, ອົງການ, ນະຄອນຫຼວງ ແລະ ແຂວງ ລົງຮອດຂັ້ນເມືອງ ແລະ ບ້ານ ເພື່ອຮັບປະກັນໃຫ້ການປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ ກໍ່ຄື ແຜນການລົງທຶນຂອງລັດໄປຕາມແຜນການທີ່ສະພາແຫ່ງຊາດຮັບຮອງ ແລ້ວລາຍງານໃຫ້ລັດຖະບານຢ່າງເປັນປົກກະຕິ; ປະຕິບັດມາດຕະການເຂັ້ມງວດໃນການຕ້ານການສໍ້ລາດບັງຫລວງ ແລະ ເອົາໃຈໃສ່ການຄົ້ນຄວ້າ ແກ້ໄຂຄຳຮ້ອງທຸກຂໍຄວາມເປັນທຳຂອງປະຊາຊົນ.

33.2 ກວດກາຄວາມຖືກຕ້ອງໃນການຄຸ້ມຄອງນຳໃຊ້ກອງທຶນຕ່າງໆ ທີ່ຂະແໜງການສູນກາງ ແລະ ທ້ອງຖິ່ນສ້າງຕັ້ງຂຶ້ນ ເພື່ອເຮັດໃຫ້ລາຍຮັບ ແລະ ລາຍຈ່າຍລວມສູນຜ່ານບັນຊີງົບປະມານແຫ່ງລັດຕາມກົດໝາຍກຳນົດໄວ້ ແລະ ເພື່ອເສີມຂະຫຍາຍຄຸນປະໂຫຍດຂອງແຫຼ່ງທຶນຕ່າງໆຂຶ້ນຕື່ມອີກ.

**ມາດຕາ 34: ມອບໃຫ້ ບັນດາກະຊວງ, ອົງການຂັ້ນສູນກາງ, ນະຄອນຫຼວງວຽງຈັນ ແລະ ແຂວງ ປະຕິບັດດັ່ງນີ້:**

34.1 ບັນດາກະຊວງ, ອົງການຂັ້ນສູນກາງ, ນະຄອນຫຼວງ ແລະ ແຂວງ ຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະ ແຜນການລົງທຶນຂອງລັດ ຕາມຂອບເຂດສິດທີ່ຕົນຮັບຜິດຊອບ; ເອົາໃຈໃສ່ປະຕິບັດແຜນລາຍຈ່າຍງົບປະມານໃຫ້ໄປຕາມແຜນການທີ່ສະພາແຫ່ງຊາດອະນຸມັດ, ຮັບປະກັນຈິດໃຈປະຢັດມັດທະຍັດ, ຖືກຕ້ອງຕາມຈຸດປະສົງເປົ້າໝາຍ ແລະ ບໍ່ປະຕິບັດເກີນແຜນ ຫລື ນອກການອະນຸມັດຢ່າງເດັດຂາດ. ບັນດາກະຊວງ, ອົງການ, ນະຄອນຫຼວງ ແລະ ແຂວງ ສ້າງເງື່ອນໄຂ, ລະດົມ ແລະ ສົ່ງເສີມທຸກພາກສ່ວນເສດຖະກິດ ເຂົ້າຮ່ວມໃນການລົງທຶນຜະລິດສິນຄ້າ ແລະ ບໍລິການ ຕາມຂອບນະໂຍບາຍ ແລະ ກົດໝາຍຂອງລັດຖະບານ.

34.2 ນະຄອນຫລວງ ແລະ ແຂວງຕ່າງໆ ຈັດເກັບລາຍຮັບພູດຂອງທ້ອງຖິ່ນໃຫ້ໄດ້ຕາມແຜນ ຫລື ລື່ນແຜນ, ພ້ອມກັນນັ້ນ ກໍອຳນວຍຄວາມສະດວກໃຫ້ແກ່ການເກັບລາຍຮັບຂອງ 3 ຂະແໜງການສາຍຕັ້ງທີ່ຂຶ້ນກັບກະຊວງການເງິນ ເພື່ອໃຫ້ການເກັບລາຍຮັບພູດຂອງສູນກາງບັນລຸຕາມແຜນ ຫລື ລື່ນແຜນ; ປະສານສົມທົບໃຫ້ການຮ່ວມມື ແລະ ອຳນວຍຄວາມສະດວກ ໃນການຈັດຕັ້ງປະຕິບັດວຽກງານ ແລະ ໂຄງການຂອງບັນດາກະຊວງ-ອົງການ ຂັ້ນສູນກາງຕາມຂອບເຂດສິດຂອງຕົນ.

34.3 ຂະແໜງການ, ທ້ອງຖິ່ນ, ບຸກຄົນໃດໜຶ່ງ ບໍ່ສາມາດຫຼຸດຜ່ອນ ຫຼື ຍົກເວັ້ນພາສີອາກອນ ແລະ ຄ່າທຳນຽມທຸກປະເພດທີ່ບໍ່ເປັນໄປຕາມກົດໝາຍ ແລະ ລະບຽບການຕາມລຳພັງ. ທຸກການຍົກເວັ້ນດັ່ງກ່າວນັ້ນ ແມ່ນລັດຖະບານເປັນຜູ້ຕົກລົງ ໂດຍຜ່ານການຄົ້ນຄວ້າສະເໜີຂອງກະຊວງການເງິນ ຖ້າຂະແໜງການ, ທ້ອງຖິ່ນ ຫຼື ບຸກຄົນໃດຫາກຝ່າຝືນ ແມ່ນຈະຖືກພິຈາລະນາດ້ານວິໄນຢ່າງເຂັ້ມງວດ. ຫ້າມບຸກຄົນ ແລະ ການຈັດຕັ້ງເກັບຄ່າທຳນຽມ ແລະ ຄ່າບໍລິການທີ່ບໍ່ນອນຢູ່ໃນລະບຽບກົດໝາຍ.

34.4 ບັນດາຂະແໜງການ ແລະ ທ້ອງຖິ່ນ ກ່ອນຈະອະນຸມັດເຊັນສັນຍາປະຕິບັດໂຄງການຕ່າງໆ ຕ້ອງໄດ້ຄຳນຶງເຖິງລະບຽບກົດໝາຍກ່ຽວກັບພາສີ, ສ່ວຍສາອາກອນ ແລະ ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ເພື່ອຮັບປະກັນໃຫ້ສັນຍາໂຄງການດັ່ງກ່າວສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

34.5 ອົງການການປົກຄອງທ້ອງຖິ່ນເອົາໃຈໃສ່ຊຸກຍູ້ການຜະລິດຂອງປະຊາຊົນ ແລະ ສ້າງເງື່ອນໄຂໃຫ້ປະຊາຊົນ ໄດ້ເຂົ້າເຖິງປັດໄຈການຜະລິດ; ຊຸກຍູ້ໃຫ້ມີການລະດົມກຳລັງການຜະລິດທີ່ເປັນເອກະເທດກະແຈກກະຈາຍເຂົ້າກັນ ໂດຍຄຳນຶງເຖິງການມີສ່ວນຮ່ວມ, ການແບ່ງຜົນປະໂຫຍດທີ່ເໝາະສົມ, ມີຄວາມຕື່ນຕົວສະໝັກໃຈ ໂດຍມີຕົວແບບທີ່ສາມາດເຮັດໃຫ້ປະຊາຊົນເຫັນໄດ້ຜົນຂອງການເຂົ້າຮ່ວມ ພ້ອມທັງຈັດຕັ້ງໃຫ້ມີການລະດົມທຶນດ້ວຍຮູບການສະຫະກອນສິນເຊື່ອໄປພ້ອມ.

34.6 ອົງການປົກຄອງທ້ອງຖິ່ນ ຄົ້ນຄວ້າຂຶ້ນໂຄງການຈັດສັນພູມລຳເນົາ ແລະ ບ່ອນທຳມາຫາກິນຖາວອນໃຫ້ປະຊາຊົນ ໂດຍມີການຈັດລະດັບຄວາມສຳຄັນ ແລະ ຄວາມຈຳເປັນ ຫລື ລະດັບບູລິມະສິດຢ່າງຈະແຈ້ງ ສົ່ງໃຫ້ລັດຖະບານ ສ້າງເປັນແຜນກວມລວມທົ່ວປະເທດໃນແຕ່ລະສົກປີ.

34.7 ບັນດາກະຊວງ-ອົງການ ແລະ ທ້ອງຖິ່ນປະກອບສ່ວນ ແລະ ປຸກລະດົມພະນັກງານ, ສະມາຊິກພັກ, ກຳລັງປ້ອງກັນຊາດ-ປ້ອງກັນສະຫງົບ, ຫົວໜ່ວຍເສດຖະກິດ ແລະ ປະຊາຊົນເຂົ້າຮ່ວມການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ຢ່າງເປັນຂະບວນການຟົດຟື້ນ.

34.8 ກະຊວງ, ອົງການທຽບເທົ່າ, ອົງການປົກຄອງທຸກຂັ້ນ, ຫົວໜ່ວຍວິສາຫະກິດ ຂອງລັດ ແລະ ເອກະຊົນ, ທຸກພາກສ່ວນເສດຖະກິດ ຕ້ອງປັບປຸງແບບແຜນວິທີເຄື່ອນໄຫວຂອງຕົນໃຫ້ມີປະສິດທິຜົນ ແລະ ແບບ

ແຜນເຮັດວຽກຕາມກົດໝາຍກຳນົດ ແລະ ຕັ້ງໜ້າເຂົ້າຮ່ວມການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ປະຈຳສົກປີ 2011-2012, ຖືແຜນພັດທະນາດັ່ງກ່າວເປັນຄວາມຮັບຜິດຊອບ ແລະ ເປັນພັນທະຂອງຕົນ, ອອກແຮງແຂ່ງຂັນຮັກສາ-ພັດທະນາ ສຳເລັດໜ້າທີ່ ແລະ ຄາດໝາຍຂອງຕົນເປັນຢ່າງດີ; ປັບປຸງການປະສານງານລະຫວ່າງສູນກາງ ແລະ ທ້ອງຖິ່ນຕາມທິດທາງຂອງພັກທີ່ວ່າ: ຂະແໜງການສູນກາງ ເຮັດບົດບາດຄຸ້ມຄອງມະຫາພາກ ແລະ ທ້ອງຖິ່ນ ເຮັດບົດບາດຈັດຕັ້ງປະຕິບັດ; ສ້າງແຂວງ ໃຫ້ເປັນຫົວໜ່ວຍຍຸດທະສາດ, ເມືອງ ເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ບ້ານ ເປັນຫົວໜ່ວຍພັດທະນາ. ລັດຖະບານຍ້ອງຍໍຊົມເຊີຍທຸກພາກສ່ວນທີ່ເຮັດດີ ຫຼື ບັນລຸຄາດໝາຍ ແລະ ຖືກກັບກົດໝາຍ.

34.9 ອົງການປົກຄອງທ້ອງຖິ່ນ ມີຄວາມຮັບຜິດຊອບໂດຍກົງໃນການຈັດຕັ້ງປະຕິບັດແຜນການລົງທຶນຂອງລັດໃນຂັ້ນຂອງຕົນ ໃຫ້ຖືກຕ້ອງຕາມລະບຽບກົດຫມາຍ ແລະ ມີປະສິດທິຜົນ. ໃນກໍລະນີທີ່ບັນດາກະຊວງ ແລະ ອົງການ ໄດ້ມອບໂຄງການລົງທຶນຂອງລັດໃຫ້ທ້ອງຖິ່ນຈັດຕັ້ງປະຕິບັດນັ້ນ ກໍ່ໃຫ້ທ້ອງຖິ່ນນັ້ນປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງເພື່ອຈັດຕັ້ງປະຕິບັດໃຫ້ມີຜົນສຳເລັດ.

34.10 ປະຕິບັດບັນດາທິດທາງ, ໜ້າທີ່ ແລະ ວຽກງານຈຸດສຸມຂອງແຜນພັດທະນາເສດຖະກິດ-ສັງຄົມ ທີ່ກ່ຽວພັນກັບຄວາມຮັບຜິດຊອບຂອງຕົນດ້ວຍຄວາມຮັບຜິດຊອບສູງ.

## ໝວດທີ IV
## ມາດຕະການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ສົກປີ 2011-2012

**ມາດຕາ 35: ການຊຸກຍູ້ການເຕີບໂຕທາງດ້ານເສດຖະກິດ, ຮັກສາສະຖຽນລະພາບທາງດ້ານເສດຖະກິດມະຫາພາກ ແລະ ການພັດທະນາແບບຍືນຍົງ:**

35.1 ຕັ້ງໜ້າຊຸກຍູ້ການເຕີບໂຕທາງດ້ານເສດຖະກິດແຫ່ງຊາດໃຫ້ຂະຫຍາຍຕົວຢ່າງຕໍ່ເນື່ອງ ດ້ວຍການສົ່ງເສີມການຜະລິດທຸລະກິດໃນທົ່ວສັງຄົມ; ໃຫ້ບູລິມະສິດຕໍ່ການສົ່ງອອກ, ສ້າງງານ ແລະ ວຽກເຮັດງານທຳເພີ່ມຂຶ້ນ ແລະ ຫຼຸດຜ່ອນບັນຫາການຫວ່າງງານບົ່ມຊ້ອນ; ເສີມຂະຫຍາຍກຳລັງແຮງຂອງທຸກພາກສ່ວນເສດຖະກິດ ທັງພາຍໃນ ແລະ ຕ່າງປະເທດ; ອອກແຮງລະດົມການລົງທຶນໃຫ້ໄດ້ຢ່າງຕ່ຳ 33% ຂອງ GDP.

35.2 ນຳໃຊ້ທຶນຮອນງົບປະມານພາຍໃນທີ່ມີຈຳກັດ ເພື່ອສຸມໃສ່ການຜະລິດພາຍໃນໃຫ້ແຂງແຮງ ແລະ ໂຄງການບູລິມະສິດ ທີ່ເປັນຫົວຈັກແກ່ດຶງການພັດທະນາເສດຖະກິດ; ລົງທຶນໃສ່ໂຄງການລົງທຶນຂອງລັດທີ່ມີປະສິດທິຜົນທາງດ້ານເສດຖະກິດສູງ; ຊຸກຍູ້ໂຄງການລົງທຶນຂະໜາດໃຫຍ່ໃນຂະແໜງໄຟຟ້າ, ບໍ່ແຮ່ ແລະ ໂຄງການໃນຂະແໜງການຜະລິດອື່ນໆ ໃຫ້ປະຕິບັດໄປຕາມແຜນ; ຊຸກຍູ້ໃຫ້ມີການຜະລິດ ແລະ ສ້າງຖານລາຍຮັບໃໝ່ເຂົ້າໃນລາຍໄດ້ແຫ່ງຊາດ ໂດຍຕິດພັນກັບການຮັບປະກັນການປ້ອງກັນທາງດ້ານສັງຄົມ ແລະ ສິ່ງແວດລ້ອມ; ເອົາໃຈໃສ່ການບໍລິການຄົມມະນາຄົມຂົນສົ່ງ, ການບໍລິການທ່ອງທ່ຽວ ແລະ ອື່ນໆ.

35.3 ເພີ່ມທະວີປະຕິບັດການດຸ່ນດ່ຽງ ເປັນຕົ້ນການດຸ່ນດ່ຽງແຫລ່ງທຶນ, ດຸ່ນດ່ຽງງົບປະມານ, ດຸ່ນດ່ຽງສິນຄ້າ, ດຸ່ນດ່ຽງວັດຖຸດິບ, ການດຸ່ນດ່ຽງແຮງງານ; ຄຸ້ມຄອງ-ຄວບຄຸມລາຄາ, ສືບຕໍ່ພິຈາລະນາມາດຕະການ

ຄວບຄຸມສິນຄ້າຕາມທີ່ໄດ້ກຳນົດໄວ້ກ່ອນໜ້ານີ້ ໂດຍສະເພາະບັນດາປະເພດສິນຄ້າຄວບຄຸມ ທີ່ຕ້ອງໄດ້ມີການຕິດປ້າຍລາຄາຢ່າງເຂັ້ມງວດ, ມີການປັບລາຄາຂຶ້ນ ແລະ ລົງຕາມການດຸນດ່ຽງຕົວຈິງຂອງຕະຫຼາດ ເພື່ອບໍ່ໃຫ້ມີການສວຍໂອກາດ; ຄຸ້ມຄອງລາຄານ້ຳມັນໃຫ້ເຂັ້ມງວດ, ຖ້າຈຳເປັນໃຫ້ດຳເນີນການຖົ່ມຂຸມລາຄານ້ຳມັນ (ຫາກສູງກວ່າ 11.000 ກີບຕໍ່ລິດສຳລັບແອັດຊັງ ແລະ 10.000 ກີບ ຕໍ່ລິດສຳລັບກາຊວນ) ດ້ວຍການຫລຸດຜ່ອນພາສີນຳເຂົ້ານ້ຳມັນ.

35.4 ສົ່ງເສີມການຜະລິດດ້ານກະສິກຳໃຫ້ໄດ້ຄາດໝາຍ ແລະ ແຈກຢາຍສະບຽງອາຫານໄປໃນເຂດທີ່ຂາດເຂີນ ດ້ວຍການເອົາໃຈໃສ່ແກ້ໄຂປັດໄຈການຜະລິດ ແລະ ສ້າງສິ່ງອຳນວຍຄວາມສະດວກຕ່າງໆ ໃຫ້ໄດ້ດີ; ໂຄສະນາອົບຮົມ ແລະ ໃຫ້ຂໍ້ມູນຂ່າວສານທີ່ຖືກຕ້ອງ ເພື່ອບໍ່ໃຫ້ສັງຄົມມີການແຕກຕື່ນ; ສົ່ງເສີມການໃຊ້ຈ່າຍແບບປະຢັດ ແລະ ສະກັດກັ້ນການສວຍໂອກາດ.

**ມາດຕາ 36: ການແກ້ໄຂຄວາມທຸກຍາກ ແລະ ພັດທະນາຊົນນະບົດ:**

36.1 ສູ້ຊົນເຮັດໃຫ້ອັດຕາຄວາມທຸກຍາກຫລຸດລົງຍັງເຫລືອປະມານ 22% ຂອງຈຳນວນປະຊາກອນທົ່ວປະເທດ ແລະ ອັດຕາຄົວເຮືອນທຸກຍາກໃຫ້ຍັງເຫລືອ ປະມານ 17% ຂອງຄົວເຮືອນທັງຫມົດ ໃນທ້າຍປີ 2012; ສືບຕໍ່ທັນລົງກໍ່ສ້າງຮາກຖານ-ການເມືອງ ຕິດພັນກັບການສ້າງບ້ານ ແລະ ກຸ່ມບ້ານພັດທະນາຕາມ 4 ເນື້ອໃນ 4 ຄາດໝາຍ, ສ້າງບ້ານພັດທະນາໃນເຂດຊົນນະບົດຂອງທຸກເມືອງໃຫ້ໄດ້ 5-10% ຂອງຈຳ ນວນບ້ານຊົນນະບົດ, ເອົາໃຈໃສ່ພັດທະນາຊົນນະບົດເຂດທີ່ໝັ້ນປະຕິວັດ, ເຂດຈຸດສຸມພັດທະນາ ແລະ ແກ້ໄຂຄວາມທຸກຍາກຂອງສູນກາງ ແລະ ທ້ອງຖິ່ນ; ຂະຫຍາຍການສຶກສາອະນາໄມ-ປ້ອງກັນພະຍາດ-ຮັກສາສຸຂະພາບ; ຕັ້ງໜ້າຈັດຕັ້ງປະຕິບັດນະໂຍບາຍສົ່ງເສີມການຜະລິດການລົງທຶນຢູ່ເມືອງເປົ້າໝາຍ ລຶບລ້າງຄວາມທຸກຍາກ; ຊຸກຍູ້ສົ່ງເສີມການລົງທຶນເຂົ້າໄປສູ່ເຂດທຸກຍາກ ແລະ ມອບໃຫ້ ບໍລິສັດໃຫຍ່ ທີ່ລົງທຶນໃນເຂດທຸກຍາກນັ້ນ ມີສ່ວນຮ່ວມຮັບຜິດຊອບພັດທະນາ, ສ້າງວຽກເຮັດງານທຳ ຕາມຄວາມສາມາດ, ເຮັດໃຫ້ປະຊາຊົນມີລາຍຮັບເພີ່ມຂຶ້ນ; ປະຕິບັດໂຄງການສ້າງເສັ້ນທາງ, ໄຟຟ້າ, ນ້ຳສະອາດ, ສຸກສາລາ, ໂຮງຮຽນຢູ່ໃນບ້ານ ຈຸດສຸມຂອງແຂວງ, ສູນກາງທີ່ໄດ້ກຳນົດໄວ້ໃນ ສົກປີ 2011-2012.

36.2 ຄະນະຊີ້ນຳພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ ສົມທົບກັບຫ້ອງການກໍ່ສ້າງຮາກຖານ ແລະ ພັດທະນາຊົນນະບົດ ຂັ້ນແຂວງ ກຳນົດເຂດ ແລະ ເປົ້າໝາຍ ໃນການຈັດສັນເພື່ອສ້າງທີ່ຢູ່ອາໄສ ແລະ ອາຊີບ ຄົງທີ່ ຫລື ເຕົ້າໂຮມບ້ານນ້ອຍເປັນບ້ານໃຫຍ່.

36.3 ສົ່ງເສີມການຜະລິດເປັນສິນຄ້າ ໃນເຂດຊົນນະບົດ, ໂດຍລັດຕ້ອງກຳນົດ ແລະ ຊີ້ນຳການຜະລິດຂອງປະຊາຊົນວ່າຈະຜະລິດຫຍັງ ເພື່ອໃຫ້ສອດຄ່ອງກັບທ່າແຮງຕົວຈິງ ແລະ ຄວາມຕ້ອງການຂອງຕະຫລາດ, ພ້ອມກັນນັ້ນ ກໍ່ສະໜອງແນວພັນ ແລະ ການຝຶກອົບຮົມໃຫ້ກຸ່ມຜະລິດ ໂດຍສະເພາະການຝຶກອົບຮົມ ໄລຍະສັ້ນ ເພື່ອສົ່ງເສີມການຜະລິດເປັນສິນຄ້າ, ທັງມີການຕິດຕາມ ຊຸກຍູ້ ແນະນຳ ແລະ ໃຫ້ການຊ່ວຍເຫລືອແກ່ເຂົາເຈົ້າ.

36.4 ສຸມໃສ່ພັດທະນາ 64 ຈຸດສຸມບູລິມະສິດ ໃນທົ່ວປະເທດ, ໃນນັ້ນ ຈຸດສຸມຂອງທ້ອງຖິ່ນ 54 ຈຸດ ແລະ ຂອງລັດຖະບານ 10 ຈຸດ ໃຫ້ມີການຫັນປ່ຽນທັງກາຍເປັນຕົວແບບ.

36.5 ສູ້ຊົນແກ້ໄຂບັນຫາການເຄື່ອນຍ້າຍແບບຊະຊາຍຂອງພົນລະເມືອງ ໃຫ້ໄດ້ໂດຍພື້ນຖານ ໂດຍສຸມໃສ່ຈັດສັນພູມລຳເນົາ ແລະ ບ່ອນທຳມາຫາກິນຄົງທີ່ ໃຫ້ໄດ້ 114 ຈຸດ ເຊິ່ງນອນຢູ່ໃນ 64 ເມືອງ, 17 ແຂວງ, ໃນນັ້ນສຸມໃສ່ 7 ຈຸດ ໃຫ້ເປັນຕົວແບບ ຄື: ກຸ່ມບ້ານໂພນຄຳ (ເຂດຜັກເບືອກ ເມືອງບໍລິຄັນ

ແຂວງບໍລິຄໍາໄຊ), ເຂດປຸ່ງຫຼັກ, ເຂດໜອງສານ ເມືອງກາສີ ແຂວງວຽງຈັນ, ກຸ່ມບ້ານໂພນທອງ, ກຸ່ມບ້ານນໍ້າບໍ່, ກຸ່ມບ້ານກະຕ່າງສະເລື່ອງ, ກຸ່ມບ້ານຈອມຈຽງ ເມືອງໂພນໄຊ ແຂວງຫຼວງພະບາງ.

36.6 ສົ່ງເສີມ ແລະ ຂະຫຍາຍການຜະລິດ, ທຸລະກິດ, ການລົງທຶນ ເຂົ້າໄປສູ່ເຂດຫ່າງໄກສອກຫລີກທຸລະກັນດານ ໃຫ້ໄດ້ 64 ຈຸດ ແລະ ພື້ນທີ່ທີ່ມີອັດຕາຄວາມທຸກຍາກສູງ ແລະ ລະດົມການສົງເຄາະໄປຍັງເປົ້າໝາຍອຶດຫິວ.

**ມາດຕາ 37: ການຈັດຕັ້ງປະຕິບັດເປົ້າໝາຍສະຫັດສະຫວັດດ້ານການພັດທະນາ ແລະ ຄາດໝາຍດ້ານສັງຄົມ:**

37.1 ເອົາໃຈໃສ່ຈັດຕັ້ງປະຕິບັດເປົ້າໝາຍສະຫັດສະວັດດ້ານການພັດທະນາ (MDGs) ເຊິ່ງມີ 9 ເປົ້າໝາຍໃຫ້ມີໝາກຜົນສູງ, ໃນນັ້ນ:

1.) ຄະນະຊີ້ນໍາພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ ແລະ ກະຊວງກະສິກໍາ-ປ່າໄມ້ ເປັນໃຈກາງໃນການປະສານງານ ກັບສາຍຕັ້ງຂອງຕົນ ແລະ ພາກສ່ວນກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດ ເປົ້າໝາຍທີ 1 (ລຶບລ້າງຄວາມທຸກຍາກ ແລະ ໄພອຶດຫິວ) ໃຫ້ມີໝາກຜົນສູງ.

2.) ກະຊວງສຶກສາທິການ ເປັນໃຈກາງປະສານສົມທົບລະອຽດກັບສາຍຕັ້ງຂອງຕົນ ແລະ ພາກສ່ວນກ່ຽວຂ້ອງຕ່າງໆ ເພື່ອຈັດຕັ້ງປະຕິບັດ ເປົ້າໝາຍທີ 2 (ໃຫ້ທຸກຄົນໄດ້ຮັບການສຶກສາຢ່າງທົ່ວເຖິງ) ໃຫ້ມີໝາກຜົນສູງ. ພ້ອມກັນນັ້ນກໍ່ເອົາໃຈໃສ່ເຊື່ອມສານວຽກງານໂພຊະນາການເຂົ້າໃນລະບົບການຮຽນ-ການສອນຢ່າງທົ່ວເຖິງ.

3.) ຄະນະກໍາມາທິການເພື່ອຄວາມກ້າວໜ້າຂອງແມ່ຍິງແຫ່ງຊາດ ແລະ ສູນກາງສະຫະພັນຍິງ ເປັນໃຈກາງໃນການປະສານງານກັບພາກສ່ວນກ່ຽວຂ້ອງ ຈັດຕັ້ງປະຕິບັດ ເປົ້າໝາຍທີ 3 (ສົ່ງເສີມບົດບາດຍິງ-ຊາຍ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ) ໃຫ້ມີໝາກຜົນສູງ.

4.) ກະຊວງສາທາລະນະສຸກ ເປັນໃຈກາງໃນການປະສານງານກັບສາຍຕັ້ງຂອງຕົນ ແລະ ພາກສ່ວນກ່ຽວຂ້ອງ ຈັດຕັ້ງປະຕິບັດ ເປົ້າໝາຍທີ 4 (ຫລຸດຜ່ອນການເສຍຊີວິດຂອງ ເດັກນ້ອຍ), ເປົ້າໝາຍທີ 5 (ສົ່ງເສີມສຸຂະພາບຂອງແມ່), ເປົ້າໝາຍທີ 6 (ສະກັດກັ້ນການແຜ່ລະບາດຂອງ HIV, ໄຂ້ຍຸງ ແລະ ພະຍາດຕິດຕໍ່ອື່ນໆ) ໃຫ້ມີໝາກຜົນສູງ. ນອກຈາກນັ້ນກໍ່ເປັນເຈົ້າການປະ ສານກັບທຸກພາກສ່ວນ ເພື່ອຈັດຕັ້ງປະຕິບັດຍຸດທະສາດວ່າດ້ວຍການຄໍ້າປະກັນສະບຽງອາຫານ ແລະໂພຊະນາການໃຫ້ໄດ້ຮັບໝາກຜົນສູງ.

5.) ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ເປັນໃຈກາງປະສານງານກັບສາຍຕັ້ງຂອງຕົນ ແລະ ພາກສ່ວນກ່ຽວຂ້ອງ ຈັດຕັ້ງປະຕິບັດ ເປົ້າໝາຍທີ 7 (ຮັບປະກັນຄວາມຍືນຍົງດ້ານສິ່ງແວດລ້ອມ) ໃຫ້ມີໝາກຜົນສູງສຸດ.

6.) ກະຊວງການຕ່າງປະເທດ, ກະຊວງແຜນການ ແລະ ການລົງທຶນ ເປັນໃຈກາງ ປະສານງານກັບພາກສ່ວນທີ່ກ່ຽວຂ້ອງຈັດຕັ້ງປະຕິບັດ ເປົ້າໝາຍທີ 8 (ສ້າງຄູ່ຮ່ວມພັດທະນາໃນຂອບເຂດທົ່ວໂລກ) ໃຫ້ມີໝາກຜົນສູງ.

7.) ກະຊວງການຕ່າງປະເທດ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແລະ ພາກສ່ວນກ່ຽວຂ້ອງເປັນໃຈກາງຈັດຕັ້ງປະຕິບັດ ເປົ້າໝາຍທີ 9 (ຫຼຸດຜ່ອນຜົນກະທົບຂອງລະເບີດບໍ່ທັນແຕກໃນ ສປປ ລາວ) ໃຫ້ມີໝາກຜົນສູງ.

– ອົງການກ່ຽວຂ້ອງຂອງລັດຖະບານ ເຊັ່ນ: ກະຊວງການຕ່າງປະເທດ, ກະຊວງແຜນການ ແລະ ການລົງທຶນ, ກະຊວງການເງິນ ເປັນເຈົ້າການຕິດຕາມກວດກາ ແລະ ສະຫລຸບລາຍງານກ່ຽວກັບການຈັດຕັ້ງເປົ້າໝາຍ MDGs ຢ່າງເປັນລະບົບປົກະຕິ. ຄຽງຄູ່ກັນນັ້ນ ກໍ່ສົມທົບກັບອົງການຈັດຕັ້ງສາກົນເພື່ອລະດົມ, ຈັດສັນແຫລ່ງທຶນເຂົ້າໃສ່ເປົ້າໝາຍ, ຄາດໝາຍ, ກິດຈະກຳ, ແນະນຳວິທີການຈັດສັນທຶນໃຫ້ໄປຮອດໄປເຖິງປະຊາຊົນ, ໂປ່ງໃສ, ສາມາດກວດສອບໄດ້; ເພີ່ມທະວີປະສານສົມທົບກັບຄູ່ຮ່ວມພັດທະນາ ແລະ ປະເທດເພື່ອນມິດໃນການຈັດຕັ້ງປະຕິບັດແຕ່ລະເປົ້າໝາຍ, ກິດຈະກຳ ໃຫ້ສອດຄ່ອງ ແລະ ມີໝາກຜົນ.

37.2 ໃຫ້ບັນດາຂະແໜງການ ແລະ ທ້ອງຖິ່ນ ເຜີຍແຜ່ແນະນຳ ແລະ ຈັດຕັ້ງຜັນຂະຫຍາຍເປົ້າໝາຍສະຫັດສະຫວັດດ້ານການພັດທະນາຕາມ 9 ເປົ້າໝາຍ 18 ຄາດໝາຍ 57 ຕົວຊີ້ວັດ; ສົ່ງເສີມການສ້າງລາຍໄດ້ໃຫ້ປະຊາຊົນເຂົ້າເຖິງການສຶກສາ, ການບໍລິການສາທາລະນະສຸກ; ສົມທົບແໜ້ນລະຫວ່າງການຍູ້ການເຕີບໂຕເສດຖະກິດ ໄປພ້ອມກັບການແກ້ໄຂຄວາມສະເໝີພາບ ແລະ ຄວາມກ້າວໜ້າ ທາງສັງຄົມ; ກໍ່ສ້າງ ແລະ ບູລະນະລະບົບສະຫວັດດີການສັງຄົມໃຫ້ດີຂຶ້ນ, ປ້ອງກັນໄພສັງຄົມ ແລະ ສຸຂະພາບພະລາໄມຂອງສັງຄົມ; ເປີດກວ້າງການຮ່ວມມືສາກົນ, ປະຕິບັດຄຳໝັ້ນສັນຍາ, ພັນທະກັບສາກົນ ແລະ ກັບຄູ່ຮ່ວມພັດທະນາ; ສົ່ງເສີມທຸກພາກສ່ວນເສດຖະກິດ ແລະ ເພີ່ມການລົງທຶນເຂົ້າໃນຂະແໜງສັງຄົມ ເລີ່ມແຕ່ສົກງົບປະມານ 2011-2012 ໃຫ້ໄດ້ 35% ຂອງການລົງທຶນລັດ; ປັບປຸງນະໂຍບາຍຕໍ່ພະນັກງານຜູ້ທີ່ລົງໄປເຮັດວຽກຢູ່ເຂດພູດອຍຫ່າງໄກສອກຫລີກທີ່ຍັງຫຍຸ້ງຍາກໃຫ້ເໝາະສົມ.

37.3 ກະຊວງສາທາລະນະສຸກ ສ້າງເງື່ອນໄຂໃຫ້ປະຊາຊົນລາວທຸກທົ່ວໜ້າ ມີໂພຊະນາການທີ່ດີ ແລະ ສາມາດຄ້ຳປະກັນສະບຽງອາຫານຢ່າງພຽງພໍ, ສຸມໃສ່ແກ້ໄຂບັນຫາການຂາດສານອາຫານ ໃນກຸ່ມຜູ້ດ້ອຍໂອກາດ ແລະ ແມ່ຍິງໃນໄວຈະເລີນພັນ ໂດຍສະເພາະແມ່ນ ແມ່ຍິງຖືພາ, ແມ່ຍິງຫລັງເກີດລູກ ແລະ ລ້ຽງລູກດ້ວຍນົມແມ່, ເດັກທີ່ມີອາຍຸຕ່ຳກວ່າ 5 ປີ ແລະ ເດັກໃນເກນເຂົ້າຮຽນ ເພື່ອຫລຸດຜ່ອນອັດຕາການຂາດສານອາຫານ ແລະ ອັດຕາການຕາຍຂອງແມ່ ແລະ ເດັກ.

**ມາດຕາ 38: ເພີ່ມທະວີການຮ່ວມມືສາກົນ ຕິດພັນກັບການປົກປັກຮັກສາຄວາມສະຫງົບພາຍໃນປະເທດ:**

38.1 ສືບຕໍ່ເປີດກວ້າງການພົວພັນຮ່ວມມື ເພື່ອການພັດທະນາກັບສາກົນ ໂດຍຮັກສາບັນຍາກາດຂອງການຮ່ວມມືຊ່ວຍເຫລືອກັນກັບບັນດາປະເທດ ແລະ ອົງການຈັດຕັ້ງສາກົນຕ່າງໆ ໃຫ້ເປັນປົກກະຕິ ແລະ ໃຫ້ນັບມື້ນັບຂະຫຍາຍຕົວ, ບັນລຸການປະຕິບັດຂໍ້ຜູກພັນສັນຍາຕ່າງໆກັບອົງການສາກົນ; ຍົກສູງປະສິດທິຜົນຂອງການຮ່ວມມືໂດຍເລັ່ງໃສ່ປັບປຸງຂະບວນການໂຕະມົນ ແລະ ປັບປຸງບັນດາກົນໄກຄຸ້ມຄອງທຶນ, ນຳໃຊ້ການຊ່ວຍເຫລືອເພື່ອການພັດທະນາໃຫ້ມີປະສິດທິຜົນ; ຮັບປະກັນການປະຕິບັດແນວທາງການຕ່າງປະເທດໃນການເປີດກວ້າງການພົວພັນກັບບັນດາປະເທດ ແລະ ອົງການຈັດຕັ້ງສາກົນແບບຫລາຍທິດ-ຫລາຍຝ່າຍ ແລະ ຫລາຍລະດັບບົນພື້ນຖານການຢຶດໝັ້ນຜົນປະໂຫຍດຂອງຊາດ; ພ້ອມທັງສ້າງສະພາບແວດລ້ອມເອື້ອອຳນວຍໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ ແລະ ການປົກປັກຮັກສາປະເທດຊາດຢ່າງເປັນເຈົ້າການ; ເພີ່ມທະວີການພົວພັນມິດຕະພາບ, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານກັບ ສ.ສ ຫວຽດນາມ, ເສີມຂະຫຍາຍສາຍພົວພັນທີ່ເປັນມູນເຊື້ອກັບ ສປ ຈີນ ບົນຈິດໃຈເປັນເພື່ອນມິດທີ່ດີ ແລະ ເປັນຄູ່ຮ່ວມມືທີ່ໄວ້ວາງໃຈ, ພົວພັນຮ່ວມມືກັບບັນດາປະເທດໃກ້ຄຽງທີ່ມີຊາຍແດນຮ່ວມກັນ, ຕັ້ງໜ້າເຂົ້າຮ່ວມການເຄື່ອນໄຫວຂອງອາຊຽນບົນພື້ນຖານຜົນປະໂຫຍດລວມ ແລະ ຊ່ວຍເຫຼືອເຊິ່ງກັນ ແລະ ກັນຕາມຫລັກການພື້ນຖານຂອງອາຊຽນ.

38.2 ເພີ່ມທະວີການປັບປຸງ, ກໍ່ສ້າງກໍາລັງປະກອບອາວຸດ ປກຊ-ປກສ ໃຫ້ໜັກແໜ້ນເຂັ້ມແຂງ. ເອົາໃຈໃສ່ຕໍ່ການປະກອບພາຫະນະ ແລະ ອຸປະກອນຮັບໃຊ້ວຽກງານໃຫ້ກໍາລັງ ປກຊ ຢູ່ບັນດາພື້ນທີ່ຈຸດສຸມສໍາຄັນ, ພູດອຍ, ຊາຍແດນ ເພື່ອມີເງື່ອນໄຂພຽງພໍ ໃຫ້ການສະກັດກັ້ນ ແລະ ຕ້ານທຸກກົນລະບົບສັບສົນ ແລະ ກໍ່ຄວາມບໍ່ສະຫງົບທາງການເມືອງ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ; ເອົາໃຈໃສ່ຄຸ້ມຄອງ, ປ້ອງກັນຊາຍແດນ, ເຂດນ່ານຟ້າຂອງປະເທດຊາດ ໂດຍການສ້າງເຂດເສດຖະກິດປ້ອງກັນຊາດຕ່າງໆ ຢູ່ ບັນດາພື້ນທີ່ຍຸດທະສາດ, ສຸມໃສ່ກໍ່ສ້າງພື້ນຖານໂຄງລ່າງເສດຖະກິດ-ສັງຄົມ ຢູ່ຕາມເສັ້ນຊາຍແດນຕ່າງໆ ໂດຍສະເພາະແມ່ນຢູ່ບັນດາເຂດຍຸດທະສາດ, ຊຸກຍູ້ການກໍ່ສ້າງລະບົບເສັ້ນທາງກວດກາລາດຕະເວນ ຕາມຊາຍແດນທິດຕາເວັນຕົກ, ເສັ້ນທາງອອກສູ່ຊາຍແດນ ແລະ ສ້າງລະບົບຄ້າຍປ້ອງກັນຊາຍແດນ.

38.3 ປຸກລະດົມພໍ່ແມ່ປະຊາຊົນປະກອບສ່ວນເຂົ້າໃນວຽກງານປ້ອງກັນຄວາມສະຫງົບ ຖືເອົາວຽກງານປ້ອງກັນຄວາມສະຫງົບເປັນໜ້າທີ່ການເມືອງ ແລະ ເປັນຄວາມຮັບຜິດຊອບຂອງພົນລະເມືອງທຸກຄົນ; ຕ້ອງສະດຸ້ງໄວ ແລະ ຄົ້ນຄວ້າແຕ່ຫົວທີ ເພື່ອຊອກຫາຈຸດຊ່ອງຫວ່າງ ຫລື ສັດຕູ ແລະ ຄົນບໍ່ດີທີ່ອາດຈະແຊກແຊງພາຍໃນໂດຍຜ່ານກົນໄກຮ່ວມມື ແລະ ການລົງທຶນຂອງຕ່າງປະເທດ; ເພີ່ມທະວີພື້ນຖານວັດຖຸ, ເຕັກນິກໃຫ້ແກ່ການປະຕິບັດໂຄງການແຫ່ງຊາດ ກ່ຽວກັບການສະກັດກັ້ນຜູ້ຝ່າຝືນກົດໝາຍ, ການປາບປາມຢາເສບຕິດ, ຄວາມປອດໄພທາງຄົມມະນາຄົມ, ການດັບເພີງ; ເພີ່ມທະວີຄວາມສາມາດຂອງກໍາລັງໃນການແກ້ໄຂໄພທໍາມະຊາດ ແລະ ການກໍ່ອາດສະຍາກໍາປະເພດຕ່າງໆ; ສືບຕໍ່ສົ່ງພະນັກງານລົງກໍ່ສ້າງຮາກຖານພັດທະນາບ້ານຢ່າງຕໍ່ເນື່ອງ, ປັບປຸງກໍາລັງກອງຫລອນ-ປກສ ຂັ້ນບ້ານ ແລະ ກຸ່ມບ້ານ ໃຫ້ເປັນລະບົບຄົບຊຸດ ແລະ ມີຄວາມເຂັ້ມແຂງທາງດ້ານວິຊາສະເພາະ.

**ມາດຕາ 39: ເພີ່ມທະວີຄວາມຮັບຜິດຊອບ ແລະ ຄວາມສັກສິດຂອງການຄຸ້ມຄອງລັດ ຕໍ່ເສດຖະກິດ-ສັງຄົມ:**

39.1 ເພີ່ມທະວີການໂຄສະນາອົບຮົມ, ເຜີຍແຜ່ ມະຕິ 9 ຂອງພັກ, ມະຕິຕິກລົງຂອງສະພາແຫ່ງຊາດ, ແຜນພັດທະນາເສດຖະກິດ-ສັງຄົມ 5 ປີຄັ້ງທີ VII, ແຜນພັດທະນາເສດຖະກິດ-ສັງຄົມປະຈໍາປີ, ບັນດາລະບຽບກົດໝາຍໃຫ້ພະນັກງານລັດຖະກອນຂັ້ນຜູ້ບໍລິຫານ, ຂັ້ນວິຊາການ ແລະ ປະຊາຊົນບັນເຜົ່າ ເພື່ອໃຫ້ເຂົ້າໃຈຢ່າງເລິກຊຶ້ງ ເປັນໄປຕາມນະໂຍບາຍຂອງພັກ-ລັດ ແລະ ລະບຽບກົດໝາຍ.

39.2 ຍົກສູງຄວາມຮັບຜິດຊອບ ແລະ ເປັນເຈົ້າການຂອງຂະແໜງການ ແລະ ທ້ອງຖິ່ນ ໃນການເຄົາລົບ ແລະ ປະຕິບັດລະບຽບການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ ແລະ ສັງຄົມ, ເພີ່ມທະວີວຽກງານຕິດຕາມ, ກວດກາຢູ່ທຸກຂົງເຂດລັດ; ຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຕ້ານການສໍ້ລາດບັງຫລວງ ແລະ ເພີ່ມທະວີຄວາມສັກສິດໃນການຄຸ້ມຄອງລັດ, ຄຸ້ມຄອງສັງຄົມດ້ວຍລະບຽບກົດໝາຍ.

39.3 ເອົາໃຈໃສ່ຝຶກຝົນຫລໍ່ຫລອມຄຸນສົມບັດ ສິນທໍາປະຕິວັດຂອງພະນັກງານ, ສະມາຊິກພັກທຸກຂັ້ນ, ປັບປຸງແບບແຜນດໍາລົງຊີວິດ, ຄວາມເປັນແບບຢ່າງ, ຕ້ານບັນດາປະກົດການຫຍໍ້ທໍ້ທາງສັງຄົມ ເປັນຕົ້ນແມ່ນການສໍ້ລາດບັງຫລວງ, ຢາເສບຕິດ, ອຸບັດຕິເຫດຕາມທ້ອງຖະໜົນ ແລະ ອື່ນໆ ໂດຍປຸກລະດົມທຸກຊັ້ນຄົນທຸກເພດໄວເຂົ້າຮ່ວມໃນຂະບວນການດັ່ງກ່າວ ດ້ວຍຫລາຍຮູບຫລາຍສີ ຢ່າງແຂງແຮງ.

39.4 ເອົາໃຈໃສ່ພັດທະນາຄວາມຮູ້ຄວາມສາມາດ ຂອງພະນັກງານລັດຖະກອນຂັ້ນຕ່າງໆ ໃນຂະແໜງການ ແລະ ທ້ອງຖິ່ນຕົນ ເພື່ອໃຫ້ສາມາດຕອບສະໜອງໃນການຄຸ້ມຄອງເສດຖະກິດ-ສັງຄົມ ໃນສະເພາະໜ້າ ແລະ ຍາວນານ ໂດຍຖືສໍາຄັນທາງດ້ານຄຸນນະພາບ, ຮັບປະກັນລັກສະນະຊົນຊັ້ນຂອງພັກ, ມີ

ຫລັກໝັ້ນການເມືອງໜັກແໜ້ນ, ມີຄຸນສົມບັດສິນທຳປະຕິວັດ, ມີຄວາມສາມາດນຳພາ-ຄຸ້ມຄອງເສດຖະກິດ-ສັງຄົມ ໃນລະດັບແນ່ນອນ.

39.5 ນຳໃຊ້ບັນດາສູນຝຶກອົບຮົມຂອງແຕ່ລະຂະແໜງການທີ່ມີ ເພື່ອເປັນສະຖາບັນຍົກລະດັບຄວາມຮູ້-ຄວາມສາມາດດ້ານວິຊາສະເພາະຂອງຂະແໜງການຕົນ; ດຶງດູດ ແລະ ຍາດແຍ່ງເອົາທຶນຮອນ ລວມທັງບົດຮຽນຈາກບັນດາປະເທດເພື່ອນມິດ, ປະເທດຕ່າງໆ ຕະຫລອດເຖິງບັນດາອົງການ ແລະ ປະເທດຜູ້ໃຫ້ທຶນຕ່າງໆ ເພື່ອຍາດແຍ່ງຄວາມຮູ້ທີ່ສອດຄ່ອງກັບຍຸກແຫ່ງການເຊື່ອມໂຍງເສດຖະກິດຢ່າງແທ້ຈິງ.

**ມາດຕາ 40: ການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດ, ການແບ່ງຄວາມຮັບຜິດຊອບ ແລະ ກົນໄກການປະສານງານແບ່ງຂັ້ນຄຸ້ມຄອງ:**

40.1 ການຈັດຕັ້ງປະຕິບັດແຜນການລົງທຶນຂອງລັດ ສົກປີ 2011-2012 ຕ້ອງປະຕິບັດຕາມກົດໝາຍວ່າດ້ວຍການລົງທຶນຂອງລັດ ສະບັບເລກທີ 08/ສພຊ, ລົງວັນທີ 26 ພະຈິກ 2009 ຢ່າງເຂັ້ມງວດ; ຫ້າມບໍ່ໃຫ້ຂະແໜງການ ແລະ ທ້ອງຖິ່ນ ປະຕິບັດໂຄງການລົງທຶນນອກການຮັບຮອງຂອງສະພາແຫ່ງຊາດ; ທຸກອົງການຈັດຕັ້ງທີ່ໄດ້ຮັບການເບີກຈ່າຍຈາກງົບປະມານຂອງລັດ ຕ້ອງປະຕິບັດຕາມຮ່ວງລາຍຈ່າຍຂອງແຜນງົບປະມານທີ່ສະພາແຫ່ງຊາດໄດ້ຮັບຮອງເອົາຢ່າງເຄັ່ງຄັດ ຖ້າມີການລະເມີດຈະຖືກປະຕິບັດວິໄນຕາມລະບຽບການ ແລະ ລັດຖະບານຈະບໍ່ຮັບຮູ້ໂຄງການລົງທຶນຂອງລັດ ທີ່ບໍ່ໄດ້ປະຕິບັດຕາມກົດໝາຍວ່າດ້ວຍການລົງທຶນຂອງລັດ.

40.2 ມອບໃຫ້ຂະແໜງການ ແລະ ທ້ອງຖິ່ນ ຮັບຜິດຊອບຈັດຕັ້ງປະຕິບັດ ແລະ ຄຸ້ມຄອງໂຄງການຕາມປະເພດຂອງໂຄງການ ຄື:

ກ). ໂຄງການໃຫຍ່ລະດັບຊາດ ແລະ ປະເພດ I (ມູນຄ່າແຕ່ 50 ຕື້ກີບຂຶ້ນໄປ): ລັດຖະບານຮັບຜິດຊອບ ແລະ ລັດຖະບານ ມອບໝາຍການຄຸ້ມຄອງໃຫ້ຂະແໜງການທີ່ກ່ຽວຂ້ອງ (ກະຊວງ-ອົງການທຽບເທົ່າ).

ຂ). ໂຄງການປະເພດ II (ມູນຄ່າແຕ່ 5-50 ຕື້ກີບ):ໃຫ້ຂະແໜງການ ແລະ ແຂວງຮັບຜິດຊອບຈັດຕັ້ງປະຕິບັດ.

ຄ). ໂຄງການປະເພດ III (ມູນຄ່າຕ່ຳກວ່າ 5 ຕື້ກີບ): ໂຄງການຢູ່ແຂວງໃດ ໃຫ້ແຂວງນັ້ນຄົ້ນຄວ້າມອບໃຫ້ເມືອງທີ່ເຫັນວ່າມີຄວາມສາມາດ ເປັນຜູ້ຈັດຕັ້ງປະຕິບັດ ຕາມທິດນຳ "ສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ສ້າງບ້ານເປັນຫົວໜ່ວຍພັດທະນາ".

ການແບ່ງຄວາມຮັບຜິດຊອບດັ່ງກ່າວນີ້ແມ່ນເລັງໃສ່ບັນດາໂຄງການກໍ່ສ້າງ-ພື້ນຖານໂຄງລ່າງ ແລະ ການສະໜອງວັດຖຸ-ເຕັກນິກຮັບໃຊ້ການພັດທະນາຕາມຂະແໜງການ.

40.3 ການຄິດໄລ່-ອອກແບບ ແລະ ປະເມີນມູນຄ່າໂຄງການລົງທຶນຂອງລັດ ຕ້ອງອີງໃສ່ຫຼັກວິຊາການ, ໃຫ້ມີການປະເມີນ ແລະ ຢັ້ງຢືນຈາກໜ່ວຍງານວິຊາການຂອງລັດຢ່າງຄັກແນ່; ຈຳກັດທຸກຮູບການສວຍໂອກາດ ເພື່ອເພີ່ມມູນຄ່າໂຄງການແບບບໍ່ສົມເຫດສົມຜົນ; ຫ້າມທຸກຮູບການປະມູນ, ການຈັດຊື້ ແລະ ການຈັດຈ້າງ ທີ່ບໍ່ຖືກຕ້ອງຕາມດຳລັດເລກທີ 03/ນຍ ລົງວັນທີ 09/01/2004 ວ່າດ້ວຍການປະມູນຈັດຊື້ສິນຄ້າ, ການກໍ່ສ້າງ, ການສ້ອມແປງ ແລະ ການບໍລິການດ້ວຍທຶນຂອງລັດ. ສຳລັບໂຄງການທີ່ມີເງື່ອນໄຂ, ມີຜົນຕອບແທນທາງດ້ານເສດຖະກິດສູງ ໃຫ້ຊຸກຍູ້ເອກະຊົນລົງທຶນດ້ວຍຮູບແບບກໍ່ສ້າງ-ດຳເນີນ

ການ-ມອບໂອນໃຫ້ລັດຖະບານ (BOT) ໂດຍໃຫ້ຂະແໜງການກ່ຽວຂ້ອງເປັນຜູ້ຄົ້ນຄວ້າ ແລ້ວສະເໜີຕໍ່ລັດຖະບານ. ການປະຕິບັດດັ່ງກ່າວຕ້ອງຮັບປະກັນຜົນປະໂຫຍດ ແລະ ສອດຄ່ອງກັບກົດໝາຍ ແລະ ລະບຽບການກ່ຽວຂ້ອງ.

40.4 ໃນຂັ້ນຕອນເຈລະຈາຮ່າງສັນຍາຮັບເໝົາກໍ່ສ້າງ ແລະ ຈັດຊື້-ຈັດຈ້າງໂຄງການລົງທຶນຂອງລັດ ຕ້ອງໃຫ້ຂະແໜງແຜນການ ແລະ ການລົງທຶນ ແລະ ຂະແໜງການເງິນ ເຂົ້າຮ່ວມຕັ້ງແຕ່ຕົ້ນເພື່ອເບິ່ງຄວາມສາມາດຂອງງົບປະມານ ແລະ ລະບຽບການທາງດ້ານແຜນການ-ການເງິນ; ພ້ອມກັນນັ້ນ, ທຸກສັນຍາຈັດຊື້-ຈັດຈ້າງໂຄງການລົງທຶນຂອງລັດ (ປະເພດ 1, 2 ແລະ 3) ແລະ ການສະເໜີຂໍເບີກຈ່າຍຄ່າໂຄງການ ຕ້ອງໄດ້ຮັບການເຊັນຢັ້ງຢືນຈາກຂະແໜງແຜນການ ແລະ ການລົງທຶນ ຈຶ່ງຖືວ່າໃຊ້ໄດ້.

40.5 ທຸກໆໂຄງການຂອງກະຊວງ-ອົງການ ທີ່ກ່ຽວຂ້ອງກັບເປົ້າໝາຍພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ທີ່ໄປຈັດຕັ້ງປະຕິບັດຢູ່ທ້ອງຖິ່ນ ຕ້ອງໄດ້ແຈ້ງໃຫ້ອຳນາດການປົກຄອງທ້ອງຖິ່ນຮັບຮູ້ເພື່ອເຂົ້າຮ່ວມ ແລະ ຕິດຕາມການຈັດຕັ້ງປະຕິບັດຕາມຂອບເຂດສິດຢ່າງເໝາະສົມ.

40.6 ອຳນາດການປົກຄອງທ້ອງຖິ່ນ ຕ້ອງໄດ້ປຸກລະດົມປະຊາຊົນປະກອບສ່ວນດ້ານທຶນຮອນ, ແຮງງານ ແລະ ວັດສະດຸຂອງທ້ອງຖິ່ນ ເຂົ້າໃສ່ໂຄງການລົງທຶນຂອງລັດຢ່າງຕັ້ງໜ້າ ແລະ ໄປຕາມຂອບເຂດຂອງລະບຽບກົດໝາຍທີ່ກ່ຽວຂ້ອງ; ໃຫ້ຖືໂຄງການທີ່ມີທຶນສົມທົບຂອງປະຊາຊົນ ເປັນບູລິມະສິດໜຶ່ງສຳລັບການລົງທຶນ.

40.7 ຂະແໜງການ ແລະ ທ້ອງຖິ່ນໃດ ຫາກມີແຫລ່ງທຶນອື່ນ ເພື່ອຊຳລະໃຫ້ໂຄງການລົງທຶນຂອງລັດ ກໍ່ໃຫ້ແຈ້ງເຖິງກະຊວງແຜນການ ແລະ ການລົງທຶນເພື່ອໃຫ້ສາມາດຕິດຕາມການຊຳລະຄ່າໂຄງການລົງທຶນຂອງ ລັດໄດ້.

40.8 ໃຫ້ປະຕິບັດຕາມກົດໝາຍງົບປະມານແຫ່ງລັດ, ກ ົດໝາຍການລົງທຶນຂອງລັດ ແລະ ນິຕິກຳອື່ນໆທີ່ກ່ຽວຂ້ອງຢ່າງເຂັ້ມງວດ.

**ມາດຕາ 41: ການແກ້ໄຂໜີ້ສິນໃນສົກປີ 2011-2012, ໃຫ້ປະຕິບັດດັ່ງນີ້:**

41.1 ກະຊວງແຜນການ ແລະ ການລົງທຶນ ສືບຕໍ່ສົມທົບກັບຂະແໜງການ ແລະ ທ້ອງຖິ່ນ ເກັບກຳ ແລະ ກວດກາຄວາມຖືກຕ້ອງຂອງໜີ້ສິນທັງໝົດໃຫ້ສຳເລັດ ແລະ ແຍກໃຫ້ເຫັນລະອຽດແຕ່ລະປະເພດໜີ້ເພື່ອຈັດໂຄງສ້າງໜີ້ສິນ ແລະ ຈັດບູລິມະສິດໃນການແກ້ໄຂ ແລ້ວນຳສະເໜີຕໍ່ລັດຖະບານ; ພ້ອມກັນນັ້ນກໍໃຫ້ຈັດກອງປະຊຸມຮ່ວມກັບບັນດາຂະແໜງການ ແລະ ທ້ອງຖິ່ນ ທີ່ກ່ຽວຂ້ອງເພື່ອຄົ້ນຄ້ວາແຫຼ່ງທຶນ ແລະ ຊອກວິທີການແກ້ໄຂທີ່ເໝາະສົມ, ຈັດບູລິມະສິດໜີ້ສິນທີ່ຕ້ອງຊຳລະໃນສົກປີງົບປະມານຕໍ່ໜ້າໃຫ້ທັນການ ແລະ ຖືກທິດ.

41.2 ໃຫ້ແຕ່ລະຂະແໜງການ ແລະ ທ້ອງຖິ່ນທີ່ມີໜີ້ສິນ ຈັດຕັ້ງປະຕິບັດການຊຳລະໜີ້ໂຄງການລົງທຶນ ຕາມແຜນທີ່ສະພາແຫ່ງຊາດອະນຸມັດຢ່າງເຂັ້ມງວດ, ບໍ່ເຮັດໂຄງການນອກການຕົກລົງຂອງສະພາແຫ່ງຊາດ. ການປະຕິບັດໂຄງການ ແລະ ການຊຳລະໂຄງການນອກການຕົກລົງຂອງສະພາແຫ່ງຊາດ ຖືເປັນຄວາມຜິດທາງວິໄນບໍລິຫານ, ເວັ້ນເສຍແຕ່ການຊຳລະດັ່ງກ່າວບໍ່ນຳໃຊ້ງົບປະມານຂອງລັດຖະບານ (ໄດ້ຮັບທຶນຈາກແຫຼ່ງອື່ນ).

41.3 ກະຊວງການເງິນ ຄົ້ນຄວ້າມາດຕະການ, ວິທີການແກ້ໄຂບັນຫາໜີ້ສິນທີ່ມີແລ້ວນັ້ນໃຫ້ໝົດໄປໂດຍໄວບົນຫຼັກການ:

– ຮັບປະກັນຄວາມຄ່ອງຕົວຂອງງົບປະມານແຫ່ງລັດ ແລະ ການເງິນລັດວິສະຫະກິດ.

- ຮັບປະກັນສະເຖຍລະພາບທາງດ້ານເສດຖະກິດມະຫາພາກ.
- ປະຕິບັດຕາມຫຼັກການລວມສູນງົບປະມານແຫ່ງລັດຕາມທີ່ກົດໝາຍໄດ້ກໍານົດໄວ້.
- ປະຕິບັດຕາມກົນໄກຄຸ້ມຄອງ ແກ້ໄຂໜີ້ສິນພາຍໃນແບບລວມສູນຢູ່ກະຊວງການເງິນ ຕາມທີ່ກົດໝາຍວ່າດ້ວຍງົບປະມານ ມາດຕາ 62 ໄດ້ກໍານົດໄວ້.

**ມາດຕາ 42: ການຈັດຕັ້ງປະຕິບັດງົບປະມານແຫ່ງລັດ:**

42.1 ເອົາໃຈໃສ່ຄົ້ນຄວ້າອອກນິຕິກໍາ ແລະ ມາດຕະການຕົວຈິງໃນການຄຸ້ມຄອງລາຍຮັບວິຊາການ, ກອງທຶນພັດທະນາ, ເງິນຊ່ວຍເຫຼືອຂອງບັນດາຫົວໜ່ວຍງົບປະມານຂອງລັດ; ຄົ້ນຄວ້າລະບຽບການຄຸ້ມຄອງລາຍຈ່າຍດັ່ງກ່າວໃຫ້ສອດຄ່ອງ ແລະ ຮັດກຸມ, ຮັບປະກັນການຮັບໃຊ້ວຽກງານວິຊາການຂອງແຕ່ລະຫົວໜ່ວຍວິຊາການຕ່າງໆ. ໃນກໍລະນີທາກກວດເຫັນການລະເມີດລະບຽບກົດໝາຍໃນຂັ້ນກວດສອບຄັ້ງຕໍ່ໄປ ແມ່ນໃຫ້ປະຕິບັດມາດຕະການ ໂດຍຫັກອອກຈາກງົບປະມານທີ່ຈະໄດ້ຈັດແບ່ງໃຫ້ ໃນສົກງົບປະມານປີຕໍ່ໄປ ແຕ່ 50% ຫາ 100% ຂອງຈໍານວນເງິນ ທີ່ຫົວໜ່ວຍງົບປະມານໄດ້ໃຊ້ຈ່າຍໄປ ລວມທັງສໍາຫລວດກວດກາຄວາມຮັບຜິດຊອບດ້ານການເມືອງ ຂອງຜູ້ຮັບຜິດຊອບໃນຫົວໜ່ວຍງົບປະມານນັ້ນໆ.

42.2 ເຜີຍແຜ່ແນະນໍາ ກ່ຽວກັບລະບຽບກົດໝາຍຂອງຂະແໜງການເງິນ ໃຫ້ບັນດາເປົ້າໝາຍ ທີ່ມີໜ້າທີ່ມອບພັນທະເຂົ້າງົບປະມານ; ເພີ່ມທະວີການຝຶກອົບຮົມທາງດ້ານວິຊາສະເພາະ ເພື່ອຍົກລະດັບຄຸນນະພາບຂອງວຽກງານ ແລະ ຫຼຸດຜ່ອນຂັ້ນຕອນການບໍລິການທີ່ມີຫຼາຍຂອດ.

42.3 ຈັດຕັ້ງ, ຄຸ້ມຄອງການເກັບລາຍຮັບ ຂະແໜງສ່ວຍສາອາກອນ, ພາສີ, ລາຍຮັບຄຸ້ມຄອງຊັບສິນຂອງລັດ, ຄ່າທໍານຽມ, ພາສີທີ່ດິນ, ເງິນປັນຜົນຂອງບັນດາລັດວິສາຫະກິດ ແລະ ລາຍຮັບອື່ນໆໃຫ້ຖືກຕ້ອງຕາມລະບຽບກົດໝາຍ; ມອບພັນທະໃຫ້ຄົບຖ້ວນ ແລະ ທັນກໍານົດເວລາ.

42.4 ຈັດຕັ້ງປະຕິບັດກົດໝາຍອາກອນມູນຄ່າເພີ່ມ ໂດຍສະເພາະແມ່ນຄວບຄຸມລະບຽບສົ່ງຄືນອາກອນມູນຄ່າເພີ່ມໃຫ້ຖືກຕ້ອງຕາມລະບຽບກົດໝາຍ.

42.5 ເລັ່ງທວງ, ກ່າວເຕືອນ, ປັບໄໝ ເມື່ອພົບເຫັນອົງການຈັດຕັ້ງ, ບຸກຄົນ ຫຼື ນິຕິບຸກຄົນ ມອບລາຍຮັບເຂົ້າງົບປະມານຊັກຊ້າ ໂດຍບໍ່ມີເຫດຜົນພຽງພໍ ແລະ ສະເໜີໃຫ້ດໍາເນີນຄະດີຕາມຂະບວນການຍຸຕິທໍາໃນກໍລະນີທີ່ມີການລະເມີດຢ່າງຮ້າຍແຮງ.

42.6 ການປະຕິບັດລາຍຈ່າຍງົບປະມານຕ້ອງໄປຕາມຫລັກການ ແລະ ຂັ້ນຕອນການຄຸ້ມຄອງລາຍຈ່າຍງົບປະມານແຫ່ງລັດ, ຕ້ອງຢູ່ໃນແຜນງົບປະມານປະຈໍາສົກປີ, ຕ້ອງໄດ້ຮັບການອະນຸມັດຖືກຕ້ອງຕາມຮ່ອງສາລະບານລາຍຈ່າຍງົບປະມານ, ຖືກຕ້ອງຕາມເປົ້າໝາຍລາຍຈ່າຍ; ຕ້ອງຄິດໄລ່ໃຫ້ຖືກຕ້ອງຕາມກໍານົດໝາຍລາຍຈ່າຍ ແລະ ຈົດກ່າຍໃຫ້ໄປຕາມລະບົບການບັນຊີແຫ່ງລັດ.

42.7 ປະຕິບັດຢ່າງເດັດຂາດຫຼັກການລວມສູນບັນຊີດຽວ ຂອງຄັງເງິນແຫ່ງຊາດ; ເອົາໃຈໃສ່ເກັບອາກອນລາຍໄດ້ບຸກຄົນ ແລະ ລາຍຮັບຈາກກິດຈະກໍາອະສັງຫາລິມະຊັບທີ່ຊື້-ຂາຍ ຫຼື ແລກປ່ຽນໃນປະເທດ; ເອົາລາຍຮັບວິຊາການ ແລະ ລາຍຮັບກອງທຶນຂອງລັດທຸກປະເພດເຂົ້າລວມສູນ, ຫຼີກເວັ້ນການສວຍໂອກາດ ຈົດຮັບ-ຈົດຈ່າຍຢູ່ໃນກະຊວງ-ຂະແໜງການ ແລະ ທ້ອງຖິ່ນ ເຊິ່ງເປັນການລະເມີດກົດໝາຍວ່າດ້ວຍງົບປະມານ.

42.8 ທຸກຂະແໜງການ ແລະ ທ້ອງຖິ່ນ ປະຕິບັດຕົວເລກລາຍຮັບ-ລາຍຈ່າຍທີ່ໄດ້ແບ່ງປັນໃຫ້ຢ່າງເຂັ້ມງວດ ໂດຍຮັບປະກັນການປະຕິບັດລາຍຮັບໃຫ້ໄດ້ຕາມແຜນ ຫລື ລື່ນແຜນຂອງຕົນ; ພ້ອມກັນນັ້ນ ກໍ່ໃຫ້ປະຕິບັດລາຍຈ່າຍໄປຕາມຕົວເລກທີ່ສະພາແຫ່ງຊາດອະນຸມັດຢ່າງເຄັ່ງຄັດ, ປະຕິບັດນະໂຍບາຍປະຢັດມັດທະຍັດທົ່ວສັງຄົມ, ແກ້ໄຂຂອດຕົກເຮ່ຍເສຍຫາຍຕ່າງໆ ໃນການຈັດເກັບ ແລະ ໃຊ້ຈ່າຍງົບປະມານ ໂດຍການເພີ່ມທະວີການກວດກາ ແລະ ກວດສອບບັນຊີ ໃຫ້ມີຄວາມເຂັ້ມງວດຕາມວິໄນການເງິນ.

**ມາດຕາ 43: ວິທີຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ:**

43.1 ມອບໃຫ້ກະຊວງແຜນການ ແລະ ການລົງທຶນ ແລະ ກະຊວງການເງິນ ອີງໃສ່ດຳລັດສະບັບນີ້ອອກແຈ້ງການ ແລະ ບົດແນະນຳລະອຽດ ເຖິງບັນດາກະຊວງ, ອົງການທຽບເທົ່າ, ນະຄອນຫລວງ ແລະ ແຂວງຕ່າງໆ ເພື່ອຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະ ແຜນການລົງທຶນຂອງລັດ ປະຈຳສົກປີ 2011-2012.

43.2 ມອບໃຫ້ຂະແໜງການ ສ້າງບົດແນະນຳ ກ່ຽວກັບວິທີຈັດຕັ້ງປະຕິບັດດຳລັດສະບັບນີ້ ແລະ ສ້າງແຜນດຳເນີນງານລະອຽດດ້ານວິຊາສະເພາະທີ່ກ່ຽວຂ້ອງຂອງຕົນ ນັບແຕ່ສູນກາງລົງຮອດທ້ອງຖິ່ນ ສຳລັບສົກປີ 2011-2012.

43.3 ມອບໃຫ້ນະຄອນຫລວງວຽງຈັນ ແລະ ແຂວງຕ່າງໆ ອີງໃສ່ບົດແນະນຳຂອງກະຊວງແຜນການ ແລະ ການລົງທຶນ, ກະຊວງການເງິນ ແລະ ກະຊວງຕ່າງໆ ຄົ້ນຄວ້າອອກບົດແນະນຳໃຫ້ບັນດາພະແນກການອ້ອມຂ້າງ ແລະ ເມືອງຕ່າງໆ ໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ ແລະ ແຜນການລົງທຶນຂອງລັດ ສົກປີ 2011-2012 ໃຫ້ມີປະສິດທິຜົນ.

43.4 ມອບໃຫ້ກະຊວງແຜນການ ແລະ ການລົງທຶນ ແລະ ກະຊວງການເງິນ ສົມທົບກັບຂະແໜງການ ແລະ ທ້ອງຖິ່ນຕ່າງໆ ເປັນເຈົ້າການໂຄສະນາເຜີຍແຜ່ກ່ຽວກັບທິດທາງ, ໜ້າທີ່, ຄາດໝາຍ ແລະ ວຽກງານຈຸດສຸມຂອງແຜນພັດທະນາເສດຖະກິດ-ສັງຄົມ ແລະ ຄາດໝາຍຂອງແຜນງົບປະມານແຫ່ງລັດ, ປຸກລະດົມ ອົງການຈັດຕັ້ງຂອງລັດທຸກຂັ້ນ, ອົງການຈັດຕັ້ງມະຫາຊົນ, ທຸກພາກສ່ວນເສດຖະກິດ ແລະ ຊັ້ນຄົນຕ່າງໆ ເຂົ້າຮ່ວມໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດຕາມຂອບເຂດຄວາມຮັບຜິດຊອບຂອງຕົນ.

**ມາດຕາ 44 : ກ່ຽວກັບການປະຕິບັດລະບຽບລາຍງານ ໃຫ້ປະຕິບັດດັ່ງນີ້:**

44.1 ໃຫ້ກະຊວງ, ອົງການ, ນະຄອນຫລວງ ແລະ ແຂວງ ສະຫລຸບລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະ ແຜນການລົງທຶນຂອງລັດ ສົກປີ 2011- 2012 ແລະ ປະຕິບັດລະບຽບລາຍງານ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍງົບປະມານ, ກົດໝາຍການລົງທຶນຂອງລັດ, ດຳລັດ 135/ນຍ ວ່າດ້ວຍການສ້າງ ແລະ ຄຸ້ມຄອງແຜນພັດທະນາເສດຖະກິດ-ສັງຄົມ.

44.2 ໃຫ້ກະຊວງແຜນການ ແລະ ການລົງທຶນ ສະຫລຸບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ສົກປີ 2011-2012, ກະຊວງການເງິນສະຫລຸບການຈັດຕັ້ງແຜນງົບປະມານແຫ່ງລັດ ສົກປີ 2011-2012, ທະນາຄານແຫ່ງ ສປປ ລາວ ສະຫລຸບລາຍງານກ່ຽວກັບການດຸ່ນດ່ຽງ ແລະ ຄຸ້ມຄອງນະໂຍບາຍ ການເງິນ-ເງິນຕາ ສົກປີ 2011-2012 ລາຍງານຕໍ່ລັດຖະບານ ຕາມລະບຽບລາຍງານທີ່ກຳນົດໄວ້.

44.3 ໃຫ້ອົງການກວດກາລັດຖະບານ ແລະ ອົງການກວດສອບແຫ່ງລັດ ດຳເນີນການຕິດຕາມ, ກວດກາ ແລະ ກວດສອບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະ ໂຄງການລົງທຶນຂອງລັດ ຕາມພາລະບົດບາດຂອງຕົນແຕ່ທົ່ວທີ ແລ້ວສະຫລຸບລາຍງານ ຕໍ່ລັດຖະບານ.

## ໝວດທີ V
## ການກະກຽມສ້າງແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ສົກປີ 2012-2013

**ມາດຕາ 45: ກ່ຽວກັບການກະກຽມສ້າງແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ສົກປີ 2012-2013 ໃຫ້ປະຕິບັດດັ່ງນີ້:**

45.1 ມອບໃຫ້ກະຊວງແຜນການ ແລະ ການລົງທຶນ, ກະຊວງການເງິນ ແລະ ກະຊວງກ່ຽວຂ້ອງ ອີງໃສ່ດຳລັດສະບັບນີ້ ອອກແຈ້ງການ ແລະ ບົດແນະນຳ ເຖິງບັນດາກະຊວງ, ອົງການ, ນະຄອນຫລວງ ແລະ ແຂວງ ຕ່າງໆ ເພື່ອສ້າງຮ່າງແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະ ແຜນການລົງ ທຶນຂອງລັດ ສົກປີ 2012-2013.

45.2 ການສ້າງແຜນສົກປີ 2012-2013 ໃຫ້ອີງໃສ່ຜົນສຳເລັດ ແລະ ຂໍ້ຄົງຄ້າງໃນການຈັດຕັ້ງປະຕິບັດແຜນການໃນໄລຍະຜ່ານມາ, ກົດໝາຍງົບປະມານ, ກົດໝາຍວ່າດ້ວຍການລົງທຶນຂອງລັດ, ດຳລັດ 135/ນຍ ວ່າດ້ວຍການສ້າງ ແລະ ຄຸ້ມຄອງແຜນພັດທະນາເສດຖະກິດ-ສັງຄົມ, ທິດທາງໜ້າທີ່ ແລະ ຄາດໝາຍຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VII (2011-2015) ສົມທົບກັບຍຸດທະສາດການພັດທະນາຂະແໜງການ ແລະ ທ້ອງຖິ່ນ, ຈຸດພິເສດ, ທ່າແຮງ ແລະ ກາລະໂອກາດຂອງຂະແໜງການ ແລະ ທ້ອງຖິ່ນ ສົ່ງໃຫ້ກະຊວງແຜນການ ແລະ ການລົງທຶນ ເພື່ອຄົ້ນຄວ້າສັງລວມ ສະເໜີຕໍ່ລັດຖະ ບານພິຈາລະນາ ເພື່ອນຳສະເໜີສະພາແຫ່ງຊາດຮັບຮອງ.

45.3 ໂຄງການລົງທຶນຂອງລັດລວມທັງໂຄງການຫຼຸດຜ່ອນຄວາມທຸກຍາກ ຢູ່ກຸ່ມບ້ານທີ່ຈະເອົາເຂົ້າແຜນການສົກປີ 2012-2013 ຕ້ອງໄດ້ຜ່ານການປະເມີນຈາກອົງການ ຫລື ໜ່ວຍງານປະເມີນກ່ອນ, ຈາກນັ້ນ ກົມແຜນການ ຫຼື ຫ້ອງການ, ນະຄອນຫຼວງ ແລະ ແຂວງສົ່ງໃຫ້ພະແນກແຜນການ ແລະ ການລົງທຶນ ຈຶ່ງສາມາດພິຈາລະນາເອົາເຂົ້າແຜນການໄດ້. ການປະເມີນຜົນ ໃຫ້ປະຕິບັດຕາມມາດຕາ 26 ຂອງກົດໝາຍວ່າດ້ວຍການລົງທຶນຂອງລັດ. ການປະເມີນໂຄງການລົງທຶນຂອງລັດ ຕ້ອງເລີ່ມແຕ່ທົ່ວທີເລີຍໂລດ ໂດຍໃຫ້ສ້າງຕັ້ງຄະນະກຳມະການປະເມີນຂຶ້ນ (ປະກອບດ້ວຍໜ່ວຍງານແຜນການ, ໜ່ວຍງານປະເມີນຜົນ ແລະ ຂະແໜງການກ່ຽວຂ້ອງ) ເພື່ອເຮັດການປະເມີນແຕ່ລະເດືອນ ເພື່ອຮັບປະກັນປະສິດທິຜົນ ແລະ ເປົ້າ ໝາຍຂອງການພັດທະນາ.

45.4 ກະຊວງແຜນການ ແລະ ການລົງທຶນ ສົມທົບຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ສ້າງບັນຊີໂຄງການເພື່ອຮຽກເອົາການລົງທຶນ ເພື່ອເປັນເຄື່ອງມືໃນການດຶງດູດການລົງທຶນຂອງເອກະຊົນພາຍໃນ ແລະ ຕ່າງປະເທດ.

ໜ່ວຍງານປະເມີນຜົນ ແລະ ຂະແໜງການກ່ຽວຂ້ອງ) ເພື່ອເຮັດການປະເມີນແຕ່ລະເດືອນ ເພື່ອຮັບປະກັນປະສິດທິຜົນ ແລະ ເປົ້າ ໝາຍຂອງການພັດທະນາ.

45.4 ກະຊວງແຜນການ ແລະ ການລົງທຶນ ສົມທົບຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ສ້າງບັນຊີໂຄງການເພື່ອຮຽກເອົາການລົງທຶນ ເພື່ອເປັນເຄື່ອງມືໃນການດຶງດູດການລົງທຶນຂອງເອກະຊົນພາຍໃນ ແລະ ຕ່າງປະເທດ.

45.5 ໃນການຄົ້ນຄວ້າປຶກສາຫາລືກ່ຽວກັບການສ້າງແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານຂອງນະຄອນຫລວງວຽງຈັນ ແລະ ແຂວງຕ່າງໆ ໃຫ້ເຊີນສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງຂອງຕົນເຂົ້າຮ່ວມນຳ.

45.6 ການລົງທຶນຂອງລັດສົກປີ 2012-2013 ຕ້ອງຮັບປະກັນຂອບການລົງທຶນໃຫ້ໄປຕາມແຜນການ 5 ປີ 2011-2015 ໂດຍຕ້ອງຮັບປະກັນ:

+ ໂຄງປະກອບ:
  - ເສດຖະກິດ 30%.
  - ສັງຄົມ 35% (ໃນນີ້ ສຶກສາ 17%, ສາທາ 9%).
  - ທາງ-ອາຄານ 35% (ທາງ 28%, ເຄຫາສະຖານ 7%).
+ ບູລິມະສິດການລົງທຶນຂອງລັດ:
  - ສົມທົບກັບຕ່າງປະເທດ 9%.
  - ແກ້ໄຂໜີ້ສິນການລົງທຶນຂອງລັດ 35%.
  - ລົງທຶນໃສ່ໂຄງການທີ່ບໍ່ທັນສຳເລັດ 35%.
  - ລົງທຶນໃສ່ໂຄງການທີ່ສະເໜີໃໝ່ 35%.
  - ຄົ້ນຄວ້າວິທະຍາສາດ ແລະ ປະເມີນຜົນ 1%.

45.7 ການສ້າງແຜນງົບປະມານ ແມ່ນຕ້ອງໄດ້ສ້າງຕາມກົດໝາຍງົບປະມານ ສະບັບເລກທີ 02/ສພຊ ລົງວັນທີ 26/12/2006 ຊຶ່ງຕ້ອງສ້າງບົນພື້ນຖານຍຸດທະສາດການເງິນໄລຍະກາງ, ໄລຍະຍາວ (ແຜນງົບປະມານແຫ່ງລັດ 5 ປີ ຄັ້ງທີ VII 2011-2015) ທີ່ລັດຖະບານກຳນົດ ຕາມການຮັບຮອງຂອງສະພາແຫ່ງຊາດ; ພ້ອມກັນນັ້ນ, ໃຫ້ສອດຄ່ອງກັບການຂະຫຍາຍຕົວທາງດ້ານເສດຖະກິດຂອງປະເທດໃນແຕ່ລະໄລຍະ ເພື່ອຮັບປະກັນສະຖຽນລະພາບທາງດ້ານການເງິນ, ປະຕິບັດຕາມຫລັກການລວມສູນປະຊາທິປະໄຕ ດ້ວຍການເຂົ້າຮ່ວມຂອງສະມາຊິກສະພາແຫ່ງຊາດຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ, ການສ້າງແຜນງົບປະມານຕ້ອງເລີ່ມຈາກຫົວໜ່ວຍຮາກຖານຕາມຄຳສັ່ງ, ຕົວເລກຊີ້ນຳຂອງລັດຖະບານ ແລະ ບົດແນະນຳຂອງລັດຖະມົນຕີວ່າການກະຊວງການເງິນ.

45.8 ການສ້າງແຜນງົບປະມານ ຕ້ອງຕອບສະໜອງໄດ້ລະດັບຄາດໝາຍດັ່ງນີ້: ຕ້ອງສ້າງຂຶ້ນບົນພື້ນຖານດ້ານລາຍຈ່າຍທີ່ຂັ້ນເທິງຂອງຕົນກຳນົດໃຫ້, ບົນພື້ນຖານການແບ່ງຄວາມຮັບຜິດຊອບ ດ້ານລາຍຮັບ ແລະ ຂໍ້ມູນສາມາດປະຕິບັດໄດ້ຢ່າງຊັດເຈນ ແລະ ແນ່ນອນໃຫ້ສອດຄ່ອງກັບເນື້ອໃນ, ກຳນົດເວລາ ແລະ ປະຕິບັດຕາມສາລະບານງົບປະມານ; ພ້ອມດຽວກັນນັ້ນ, ກໍ່ຕ້ອງສ້າງບົນພື້ນຖານຕົວເລກຊີ້ບອກການຂະຫຍາຍຕົວຂອງເສດຖະກິດມະຫາພາກ. ສຳລັບການສ້າງແຜນງົບປະມານບໍລິຫານປົກກະຕິ ຕ້ອງຂຶ້ນແຜນງົບປະມານໃຫ້ສອດຄ່ອງກັບບັນດານະໂຍບາຍ, ມາດຖານ ແລະ ກຳນົດໝາຍໃຊ້ຈ່າຍ

ບໍລິຫານຂອງລັດ. ທົວໜ່ວຍງົບປະມານທຸກຂັ້ນຕ້ອງສັງລວມເອົາບັນດາລາຍຈ່າຍໜີ້ສິນທີ່ໄດ້ຮັບການກວດກາ ແລະ ຢັ້ງຢືນຢ່າງຄົບຖ້ວນ ເຂົ້າໃນແຜນລາຍຈ່າຍງົບປະມານປະຈໍາປີຂອງຕົນ.

45.9 ສໍາລັບຂັ້ນຕອນ ແລະ ກໍານົດເວລາກ່ຽວກັບການສ້າງແຜນງົບປະມານແຫ່ງລັດ: ອີງໃສ່ດໍາລັດສະບັບນີ້, ໃຫ້ກະຊວງການເງິນ ອອກບົດແນະນໍາກ່ຽວກັບຈຸດປະສົງ, ເປົ້າໝາຍ, ເນື້ອໃນ ແລະ ກໍານົດເວລາຂອງການສ້າງແຜນງົບປະມານ ແລະ ແຈ້ງເພດານຕົວເລກມະຫາພາກດ້ານລາຍຮັບ-ລາຍຈ່າຍ ແລະ ການຊໍາລະໜີ້ໃນອົງການຈັດຕັ້ງຂອງລັດ ແຕ່ສູນກາງຮອດທ້ອງຖິ່ນ. ເດືອນກຸມພາ, ໃຫ້ອົງການຈັດຕັ້ງລັດຂອງສູນກາງ ແລະ ທ້ອງຖິ່ນສ້າງແຜນງົບປະມານຂອງຕົນໃຫ້ສອດຄ່ອງກັບແຜນວຽກ, ແຜນງານ ຕາມຄວາມຮັບຜິດຊອບຂອງຕົນ ໂດຍໃຫ້ຈັດລຽງບູລິມະສິດ, ພາຍຫລັງສໍາເລັດແລ້ວໃຫ້ຈັດສົ່ງໃຫ້ກະຊວງການເງິນ ເພື່ອສັງລວມແຜນງົບປະມານ ແລ້ວລາຍງານລັດຖະບານໃນເດືອນເມສາ.

## ໝວດທີ VI
## ບົດບັນຍັດສຸດທ້າຍ

**ມາດຕາ 46:** ມອບໃຫ້ທ່ານລັດຖະມົນຕີວ່າການກະຊວງ, ຫົວໜ້າອົງການ, ທ່ານເຈົ້າຄອງນະຄອນຫຼວງ ແລະ ທ່ານເຈົ້າແຂວງ ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດດໍາລັດສະບັບນີ້ຢ່າງເຂັ້ມງວດ ແລະ ລາຍງານຜົນຂອງການຈັດຕັ້ງປະຕິບັດ ໃຫ້ລັດຖະບານ ໃນແຕ່ລະໄລຍະຢ່າງເປັນປົກກະຕິ.

**ມາດຕາ 47:** ດໍາລັດສະບັບນີ້ ມີຜົນບັງຄັບໃຊ້ ນັບແຕ່ວັນທີ 1 ຕຸລາ 2011 ເປັນຕົ້ນໄປ.

**ນາຍົກລັດຖະມົນຕີ**